# ບົດລາຍງານຂອງຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

# 2020



ເອັດສ໌ດີຈີ ທີ 18: ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ

ບົດລາຍງານປະຈຳປີສະບັບນີ້ ສ້າງຂຶ້ນໂດຍ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ).

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ:

ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຫຄຊກລ),
ບ້ານ ສີສັງວອນ, ຕູ້ ປ.ນ 7621, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ເວັບໄຊ: www.nra.gov.la

ໂທ: (856-21 262386)

ລວບລວມ ແລະ ອອກແບບໂດຍ: ຫຄຊກລ, ໜ່ວຍງານແກ້ໄຂ ລບຕ ຂອງ ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ແລະ ສະຖານທູດ ສ. ອາເມລິກາ ປະຈຳ ສປປ ລາວ.

ການຈັດພິມບົດລາຍງານສະບັບນີ້ ໄດ້ຮັບການສະໜັບສະໜູນໂດຍລັດຖະບານ ສ. ເກົາຫຼີ ຜ່ານອົງການກອຍກາ ປະຈຳ ສປປ ລາວ.

ຮູບພາບ: ຮູບພາບທີ່ປະກົດຢູ່ໃນບົດລາຍງານຂອງອົງການປະຕິບັດງານແມ່ນຖືເປັນລິຂະສິດຂອງອົງການ, ສ່ວນຮູບພາບອື່ນໆນອກຈາກທີ່ກ່າວມານີ້ ແມ່ນຂໍສະຫງວນລິຂະສິດເປັນຂອງ ຫຄຊກລ.

ສະແດງຄວາມຮູ້ບຸນຄຸນ:

ຫຄຊກລ ຂໍສະແດງຄວາມຂອບໃຈມາຍັງທຸກອົງການປະຕິບັດງານທີ່ວຂະແໜງການແກ້ໄຂບັນຫາ ລບຕ ທີ່ໄດ້ສະໜອງຮູບພາບ ແລະ ຂໍ້ມູນຕ່າງໆໃນປີ 2020 ເພື່ອປະກອບໃສ່ບົດລາຍງານປະຈຳປີຂອງຂະແໜງການແກ້ໄຂບັນຫາ ລບຕ ແລະ ສະແດງຄວາມຂອບໃຈມາຍັງອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ທີ່ໃຫ້ການສະໜັບສະໜູນຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ຕະຫຼອດປີ 2020 ພ້ອມທັງ ປະກອບຄວາມຄິດເຫັນໃສ່ບົດລາຍງານສະບັບນີ້. ພ້ອມນີ້, ໜ່ວຍງານແຜນການ ແລະ ປະຊາສຳພັນ ຂອງຫ້ອງການ ຄຊກລ ຂໍສະແດງຄວາມຮູ້ບຸນຄຸນ ມາຍັງບັນດາເພື່ອຮ່ວມງານຂອງຫ້ອງການ ຄຊກລ ໝົດທຸກຄົນ ທີ່ໄດ້ປະກອບຄວາມຄິດເຫັນ ແລະ ສະໜັບສະໜູນການສັງລວມປຶ້ມບົດລາຍງານປະຈຳປີສະບັບນີ້ຂຶ້ນ.

ບົດລາຍງານສະບັບນີ້ ອາດມີບາງເນື້ອໃນມີການປ່ຽນແປງ, ຫຼົງລືມ ຫຼື ຜິດພາດ ພາຍຫຼັງທີ່ມີການພິມອອກແຈກຢາຍ. ຕ້ອງການຂໍ້ມູນເພີ່ມຕື່ມ ສາມາດເຂົ້າເບິ່ງໄດ້ທີ່ເວັບໄຊ້: www.nra.gov.la

ສະຫງວນລິຂະສິດ: ຫຄຊກລ, 2021.

# ບົດລາຍງານປະຈຳປີ 2020 ຂອງຂະແໜງການແກ້ໄຂ ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

## ສາລະບານ


- **ບົດນຳຂອງປະທານ ຄຊກລ** 5
- **ບົດນຳຮ່ວມຂອງຄະນະປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ** 6
- **ຕົວອັກສອນຫຍໍ້ ແລະ ຄວາມໝາຍສັບ** 7
- **ສະພາບຕົວຈິງ ລບຕ ຕົກຄ້າງ ແລະ ຕົວເລກສະຖິຕິ** 8
- **ລະເບີດບໍ່ທັນແຕກ (ລບຕ) ແມ່ນຫຍັງ?** 8
- **ການສັງລວມຫຍໍ້** 9
  - ພາບລວມ ໃນປີ 2020 9
  - ຜົນສຳເລັດຂອງຂະແໜງການ ໃນປີ 2020: ຕົວເລກຜົນສຳເລັດດ້ານຕ່າງໆ 11
  - ການເງິນ ແລະ ການລະດົມທຶນ ໃນປີ 2020 16
- **ຜົນສຳເລັດຂອງຂະແໜງການ ລບຕ: ເສັ້ນທາງກ້າວສູ່ຄວາມປອດໄພ II (2011-2020)** 17
- **ຂະແໜງການແກ້ໄຂບັນຫາ ລບຕ** 20

**ສົນທິສັນຍາສາກົນ ແລະ ມາດຕະຖານ:** 20
  - ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ 20
  - ສົນທິສັນຍາ ວ່າດ້ວຍສິດຂອງຄົນພິການ 20
  - ສົນທິສັນຍາ ວ່າດ້ວຍອາວຸດທົ່ວໄປ 20
  - ມາດຕະຖານສາກົນ ກ່ຽວກັບການແກ້ໄຂບັນຫາລະເບີດຝັງດິນ 20

**ກອບແຜນວຽກນິຕິກຳ, ນະໂຍບາຍ ແລະ ການຈັດຕັ້ງ:** 21
  - ດຳລັດແຫ່ງຊາດ 21
  - ເປົ້າໝາຍການພັດທະນານາແບບຍືນຍົງ ທີ 18: "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ" 22
  - ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (2021-2025) 24

**ພາບລວມຂອງຄູ່ຮ່ວມງານໃນຂະແໜງການແກ້ໄຂບັນຫາ ລບຕ:** 25
- ອົງການຈັດຕັ້ງແຫ່ງຊາດ 25
- ອົງການຈັດຕັ້ງຫຼາຍຝ່າຍ/ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ 25
- ອົງການປະຕິບັດງານຂອງລາວ ແລະ ຕ່າງປະເທດ 25
- ພາບລວມຂອງ ຄຊກລ 27
- ປະເທດຜູ້ໃຫ້ທຶນ 30
- ແຜນທີ່ການປະຕິບັດງານຂອງບັນດາອົງການປະຕິບັດງານ 31

**ບົດລາຍງານຂອງອົງການປະຕິບັດງານແກ້ໄຂບັນຫາ ລບຕ:** 32
- ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) 33
- ອົງການໃຫ້ຄຳປຶກສາ ກ່ຽວກັບການແກ້ໄຂລະເບີດຝັງດິນ (ແມັກ) 41
- ອົງການຊ່ວຍເຫຼືອລ້າ ຂອງປະຊາຊົນນໍ່ອກແວ (ເອັນພີເອ) 44
- ອົງການຮາໂລຫຼາດ (ຮາໂລ) 48
- ອົງການມະນຸດສະທຳ ແລະ ການມີສ່ວນຮ່ວມ (ເຫັດໄອ) 52
- ກອງກວດກູ້ລະເບີດເພື່ອມະນຸດສະທຳກອງທັບ (ກອງ58) 56
- ອົງການສຶກສາໂລກ (ເວີອີດູເຄເຊີ້ນ) 58
- ອົງການສະໜອງອົງຄະທຽມ ແລະ ເຄື່ອງຄ້ຳຊູ (ໂຄບ) 64
- ບໍລິສັດ ລາວບີເອັດສ໌ແອວ ເກັບກູ້ລະເບີດ ຈຳກັດ 66
- ບໍລິສັດ ສີລາວັນ ເກັບກູ້ລະເບີດ ຈຳກັດ 67
- ບໍລິສັດ ອູມມາ ເກັບກູ້ລະເບີດ ຈຳກັດ 68
- ບໍລິສັດ ພັນວິລະ ເກັບກູ້ລະເບີດ ຈຳກັດ 69
- ບໍລິສັດ ອອດສ໌ລາວ ເກັບກູ້ລະເບີດ ຈຳກັດ 70
- ບໍລິສັດ ມິວເຊີດສ໌ ເກັບກູ້ລະເບີດ 71

# ບົດນຳ:

## ບົດນຳ ຂອງປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)

ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ເປັນກຽດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ສຳລັບປີ 2020.

ຄືດັ່ງບັນດາທ່ານໄດ້ຮັບຊາບແລ້ວວ່າ ສປປ ລາວ ແມ່ນປະເທດໜຶ່ງທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ 19, ສິ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຳລົງຊີວິດຂອງປະຊາຊົນ ແລະ ການຈັດຕັ້ງປະຕິບັດກິດຈະກຳອື່ນໆ. ພ້ອມນີ້, ຍັງສົ່ງຜົນກະທົບໂດຍກົງຕໍ່ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ໂດຍສະເພາະການປະຕິບັດງານຢູ່ພື້ນທີ່ຂອງໂຄງການໄດ້ຖືກໂຈະໄວ້ຊົ່ວຄາວ.

ຈາກຜົນກະທົບແຕ່ເຖິງວ່າແນວໃດກໍ່ຕາມ, ລັດຖະບານ ກໍຄືຄະນະກຳມະການຄຸ້ມຄອງແຫ່ງຊາດໄດ້ເອົາໃຈໃສ່ ແລະ ໃຫ້ການຊີ້ນຳຢ່າງໃກ້ຊິດເພື່ອເຮັດໃຫ້ບາງວຽກທີ່ເງື່ອນໄຂສາມາດປະຕິບັດໄດ້ຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນການໂຄສະນາ ຜົນຮ້າຍ ແລະ ທີ່ມາຂອງ ລບຕ ຜ່ານລາຍການວິທະຍຸ. ພ້ອມນີ້, ຍັງໄດ້ເຊື່ອມສານການປ້ອງກັນພະຍາດໂຄວິດ ເຂົ້າໃນລາຍການວິທະຍຸດັ່ງກ່າວ ເພື່ອເຮັດໃຫ້ປະຊາຊົນ ແລະ ຊຸມຊົນຮັບຮູ້.

ແຕ່ເຖິງຢ່າງໃດກໍ່ຕາມ ພາຍໃຕ້ສະພາບການດັ່ງກ່າວນີ້, ຂະແໜງການແກ້ໄຂບັນຫາ ລບຕ ກໍ່ໄດ້ເອົາໃຈໃສ່ ແລະ ໃຫ້ການຊີ້ນຳຢ່າງໃກ້ຊິດເພື່ອເຮັດໃຫ້ບາງວຽກທີ່ເງື່ອນໄຂສາມາດປະຕິບັດໄດ້ຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນໄດ້ເຊື່ອມສານການປ້ອງກັນພະຍາດໂຄວິດ 19 ເຂົ້າໃນລາຍການວິທະຍຸ ລບຕ ແລະ ຜ່ານການໂຄສະນາຂອງອາສາສະໝັກບ້ານ. ພາລະບົດບາດຂອງ ຄຊກລ ຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ຮັບການປັບປຸງ, ແຜນຍຸດທະສາດແຫ່ງຊາດ 10 ປີ ໃນການແກ້ໄຂບັນຫາ ລບຕ ໄດ້ຮັບການປະເມີນ, ໄດ້ສຳເລັດຮ່າງນິຕິກຳແຫ່ງຊາດຂອງ ສປປ ລາວ ໃນການປະຕິບັດພັນທະສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ຮ່າງແຜນປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ຮັບການສ້າງຂຶ້ນ. ພ້ອມດຽວກັນນັ້ນ, ໄດ້ຍັງສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ຂັ້ນແຂວງ ໃຫ້ຮັບຮູ້ ແລະ ເຂົ້າໃຈຕໍ່ວຽກງານແກ້ໄຂບັນຫາ ລບຕ ເພື່ອເຊື່ອມສານວຽກງານແກ້ໄຂບັນຫາ ລບຕ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈຂອງອົງການປະຕິບັດງານ ສອດຄ່ອງກັບຄວາມຕ້ອງການຕົວຈິງຂອງທ້ອງຖິ່ນ. ນອກຈາກນັ້ນ, ຍັງໄດ້ສ້າງຄວາມເຂັ້ມແຂງທາງດ້ານຂີດຄວາມສາມາດໃຫ້ສະຖານບັນການຈັດຕັ້ງຂອງລັດຖະບານ ກ່ຽວກັບວຽກງານແກ້ໄຂບັນຫາ ລບຕ ໂດຍສະເພາະວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ການກວດກູ້ ລບຕ ແລະ ໂຄງການທົດລອງປັບປຸງຊີວິດການເປັນຢູ່ຂອງຜູ້ລອດຊີວິດຈາກ ລບຕ ແລະ ຄອບຄົວຂອງເຂົາເຈົ້າ.

ສຳລັບຂົງເຂດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ, ຂະແໜງການແກ້ໄຂບັນຫາ ລບຕ ໄດ້ສະໜອງການຊ່ວຍເຫຼືອທາງດ້ານການຟື້ນຟູໜ້າທີ່ການ ແລະ ຈິດໃຈ ແລະ ການຝຶກອົບຮົມວິຊາຊີບ ເພື່ອຊ່ວຍເຫຼືອປັບປຸງຊີວິດການເປັນຢູ່ຂອງຜູ້ລອດຊີວິດຈາກ ລບຕ ແລະ ຄອບຄົວຂອງເຂົາເຈົ້າ. ນອກຈາກນັ້ນ, ຍັງໄດ້ເຄື່ອນໄຫວໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ໃຫ້ປະຊາຊົນລາວບັນດາເຜົ່າ ຮັບຮູ້ວິທີຫຼີກລ້ຽງຄວາມອັນຕະລາຍຂອງ ລບຕ. ພ້ອມນັ້ນ, ຍັງໄດ້ເຊື່ອມສານວຽກງານ ລບຕ ເຂົ້າໃນຫຼັກສູດການຮຽນ-ການສອນຂອງໂຮງຮຽນຊັ້ນປະຖົມ, ໂຄສະນາຜ່ານລາຍການວິທະຍຸ ລບຕ, ອາສາສະໝັກຂັ້ນບ້ານ ແລະ ປັບປຸງອຸປະກອນໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເຊັ່ນ: ໂພດສເຕີ້ ແລະ ປຶ້ມຂຽນສອດແຊກຂໍ້ມູນ ແລະ ຮູບພາບ ລບຕ. ຜ່ານການເຄື່ອນໄຫວກິດຈະກຳຕ່າງໆຂ້າງເທິງຂອງບັນດາອົງການປະຕິບັດງານ ເຮັດໃຫ້ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ຫຼຸດລົງເປັນ 33 ຄົນ ໃນປີນີ້. ແຕ່ເຖິງຢ່າງນັ້ນກໍ່ຕາມ, ກໍ່ຍັງມີຄວາມຕ້ອງການໃນການສືບຕໍ່ ແລະ ຂະຫຍາຍວຽກງານການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຕື່ມອີກໃນອະນາຄົດ.

ສຳລັບຂົງເຂດວຽກງານສຳຫຼວດ ແລະ ກວດກູ້ ລບຕ, ກໍ່ໄດ້ສືບຕໍ່ປະຕິບັດລະບຽບການສຳຫຼວດແບບໃໝ່ ແລະ ກໍ່ໄດ້ມີການຊຸກຍູ້ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ໃຫ້ໄປຈັດຕັ້ງປະຕິບັດ. ຜ່ານການປະຕິບັດໄລຍະຜ່ານມາເຫັນວ່າ ມີປະສິດທິຜົນ, ສາມາດພົບເຫັນລະເບີດຫຼາຍຂຶ້ນກ່ວາເກົ່າ, ຊຶ່ງປີ 2020 ສາມາດກຳນົດພື້ນທີ່ ລບຕ ຕົກຕ້າງໄດ້ 18,068 ເຮັກຕາ ແລະ ໄດ້ບັນທຶກມ້ຽນໄວ້ໃນຖານຂໍ້ມູນ ລບຕ ແຫ່ງຊາດຮຽບຮ້ອຍແລ້ວ. ພ້ອມດຽວກັນນັ້ນ, ຍັງໄດ້ສຸມໃສ່ກວດກູ້ພື້ນທີ່ ລບຕ ຕົກຄ້າງໄດ້ 5,426 ເຮັກຕາ, ແຕ່ຄວາມຕ້ອງການຕົວຈິງແມ່ນ 10,000 ເຮັກຕາຕໍ່ປີ.

ສັງລວມແລ້ວ, ເຖິງແມ່ນວ່າ ຂະແໜງການແກ້ໄຂບັນຫາ ລບຕ ຈະພົບກັບບັນຫາການແຜ່ລະບາດຂອງພະຍາດໂຄວິດ 19 ຕໍ່ການປະຕິບັດງານ ແລະ ທຶນ ກໍ່ຕາມ ແຕ່ຂະແໜງການແກ້ໄຂບັນຫາ ລບຕ ກໍ່ສາມາດຍາດມາໄດ້ຜົນສຳເລັດດັ່ງກ່າວ.

ຂ້າພະເຈົ້າຕາງໜ້າໃຫ້ລັດຖະບານ ສປປ ລາວ ແລະ ໃນນາມປະທານ ຄຊກລ ຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນໄລຍະ 1 ປີຜ່ານມາ, ຍ້ອນການປະກອບສ່ວນເຄື່ອນໄຫວຂອງບັນດາພະນັກງານທຸກຄົນໃນທົ່ວຂະແໜງການແກ້ໄຂບັນຫາ ລບຕ ແລະ ຊ່ຽວຊານ ຕ່າງປະເທດ ດ້ວຍຄວາມເອົາໃຈໃສ ແລະ ຮັບຜິດຊອບສູງ. ພ້ອມດຽວກັນນີ້, ກໍ່ສະແດງຄວາມຂອບໃຈມາຍັງບັນດາຜູ້ໃຫ້ທຶນ, ອົງການ ສປຊ, ອົງການຈັດຕັ້ງສາກົນ ທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນວຽກງານແກ້ໄຂບັນຫາ ລບຕ ເປັນຢ່າງດີໃນໄລຍະຜ່ານມາ.

**ປອ. ຄຳແພງ ໄຊສົມແພງ**

**ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ປະທານ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ**

# ບົດນຳ:

## ບົດນຳຮ່ວມຂອງເອກອັກຄະລັດຖະທູດສະຫະລັດອາເມລິກາ ປະຈຳ ສປປ ລາວ ແລະ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ, ຄະນະປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ

ໃນນາມປະທານຮ່ວມຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ມີຄວາມປິຕິຍິນດີທີ່ໄດ້ປະກອບຄວາມຄິດເຫັນຕໍ່ຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ສຳລັບປີ 2020. ປີ 2020 ເປັນປີທີ່ມີຄວາມທ້າທາຍຍ້ອນບັນຫາການແຜ່ລະບາດຂອງພະຍາດໂຄວິດ 19 ແຕ່ເຖິງຢ່າງນັ້ນກໍ່ຕາມ ພວກເຮົາ ກໍ່ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈ ມາຍັງຄູ່ຮ່ວມ ແລະ ບັນດາອົງການປະຕິບັດງານໃນທົ່ວຂະແໜງການແກ້ໄຂບັນຫາ ລບຕ ທີ່ໄດ້ທຸ່ມເທປະຕິບັດໜ້າທີ່ຂອງຕົນຢ່າງເອົາຈິງເອົາຈັງ. ຄຳໝັ້ນສັນຍາທີ່ໄດ້ເຮັດລົງມືປະຕິບັດໃນຕະຫຼອດປີ ສະແດງໃຫ້ເຫັນຄວາມເອົາໃຈໃສ່ ແລະ ຄວາມສາມາດ ໃນການສ້າງຜົນກະທົບທາງບວກຈາກັນຫາລະເບີດບໍ່ທັນແຕກ ເຖິງແມ່ນວ່າ ຈະຢູ່ໃນຊ່ວງເວລາທີ່ຫຍຸ້ງຍາກທີ່ສຸດກໍ່ຕາມ.

ແຕ່ພວກເຮົາໂຊກບໍ່ດີປານໃດ ເນື່ອງຈາກວ່າ ປີ 2020 ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ໄດ້ເພີ່ມຂຶ້ນເປັນ 33 ຄົນ, ສົມທຽບກັບປີ 2018 ແມ່ນ 24 ຄົນ ແລະ 25 ຄົນ ໃນປີ 2019, ຊຶ່ງໃນປີ 2020 ແມ່ນມີຜູ້ເສຍຊີວິດ 7 ຄົນ ເປັນ ເດັກນ້ອຍ 2 ຄົນ ແລະ ໄດ້ຮັບບາດເຈັບ 26 ຄົນ ເປັນເດັກນ້ອຍ 12 ຄົນ. ໃນຂະນະທີ່ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ໄດ້ຫຼຸດລົງໃນຊຸມປີຜ່ານມາກໍ່ຕາມ, ແຕ່ຂະແໜງການແກ້ໄຂບັນຫາ ລບຕ ກໍ່ຍັງຕ້ອງການໆສະໜັບສະໜູນອີກຕື່ມຕໍ່ໄປເລື້ອຍໆ ເພື່ອເຮັດແນວໃດຮັບປະກັນວ່າ ບໍ່ໃຫ້ມີການບາດເຈັບ ຫຼື ເສຍຊີວິດຈາກ ລບຕ.

ການເຊື່ອມສານວຽກງານແກ້ໄຂບັນຫາລບຕເຂົ້າເປັນຄາດໝາຍສູ້ຊົນໜຶ່ງ(ຄາດໝາຍສູ້ຊົນ6ທີ່ນອນຢູ່ໃນການຄາດຄະເນຜົນໄດ້ຮັບທີ 3) ທີ່ນອນຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ສຳລັບປີ 2021-2025 ເພື່ອສະແດງໃຫ້ເຫັນຄຳໝັ້ນສັນຍາຂອງລັດຖະບານລາວ ໃນການກວດກູ້ ລບຕ ທີ່ເປັນອຸປະສັກຕໍ່ການພັດທະນາ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະບັບໃໝ່ນີ້ ມີເປົ້າໝາຍກວດກູ້ ລບຕ ອອກຈາກພື້ນທີ່ໂຄງການພັດທະນາເສດຖະກິດ-ສັງຄົມ ສະເລ່ຍໃຫ້ໄດ້ 10,000 ເຮັກຕາຕໍ່ປີ. ຄາດໝາຍດັ່ງກ່າວນີ້ ແມ່ນໄດ້ວາງຕົວເລກເພີ່ມຂຶ້ນເປັນສອງເທົ່າ ໃນຂະນະທີ່ຜົນສຳເລັດຂອງການກວດກູ້ ລບຕ ໃນປີ 2020 ແມ່ນສາມາດກວດກູ້ໄດ້ 5,392 ເຮັກຕາໆ. ຍ້ອນການລິເລີ່ມປະຕິບັດການສຳຫຼວດມາແຕ່ປີ 2015 ຈຶ່ງເຮັດໃຫ້ປີນີ້ຂີດຄວາມສາມາດຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ ໃນການກວດກູ້ ລບຕ ມີຄວາມເຂັ້ມແຂງ ແລະ ເຫັນໄດ້ຄວາມຄືບໜ້າຂອງວຽກງານທຳລາຍ ລບຕ ຢ່າງມີປະສິດທິຜົນຂຶ້ນເປັນກ້າວໆ.

ລັດຖະບານລາວ ໄດ້ເນັ້ນໜັກໃສ່ຄວາມສຳຄັນໃນການກວດກູ້ ລບຕ ອອກຈາກພື້ນທີ່ບູລິມະສິດສູງ ເພື່ອຈັດຕັ້ງປະຕິບັດໃຫ້ບັນລຸບັນດາເປົ້າໝາຍ ການພັດທະນາແບບຍືນຍົງ ເຖິງແມ່ນວ່າ ຂະໜາດຂອງບັນຫາ ລບຕ ຈະມີຫຼາຍກວ່າຊັບພະຍາກອນ ແລະ ຂີດຄວາມສາມາດທີ່ມີໃນປະຈຸບັນກໍ່ຕາມ. ການເລັ່ງລັດເພື່ອບັນລຸການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານລາວ ເຫັນວ່າຍັງມີຄວາມຮຽກຮ້ອງຕ້ອງການໆສະໜັບສະໜູນ ແລະ ການຮ່ວມມື ທີ່ເຂັ້ມແຂງຕື່ມໃນອະນາຄົດ. ສະນັ້ນ, ດ້ວຍເຫດຜົນນີ້ ແຜນຍຸດທະສາດແຫ່ງຊາດ ໃນການແກ້ໄຂບັນຫາ ລບຕ ສະບັບໃໝ່ (ເສັ້ນທາງກ້າວສູ່ຄວາມປອດໄພ 3) ຕ້ອງໄດ້ມີແຜນບູລິມະສິດການແກ້ໄຂບັນຫາ ລບຕ ຂອງບັນດາອົງການປະຕິບັດແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ ແລະ ບັນດາບໍລິສັດກວດກູ້ ລບຕ.

ປະຕິບັດຕາມມາດຕາ 9 ຂອງສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ ຮຽກຮ້ອງໃຫ້ແຕ່ລະລັດພາຄີຂອງສົນທິສັນຍາຕ້ອງມີ "ມາດຕະການທາງດ້ານກົດໝາຍ, ການປົກຄອງ ແລະ ມາດຕະການອື່ນໆ ທີ່ເໝາະສົມ" ເພື່ອຈັດຕັ້ງປະຕິບັດສົນທິສັນຍາສະບັບນີ້, ຊຶ່ງ ສປປ ລາວ ກໍ່ໄດ້ລິເລີ່ມຮ່າງນິຕິກຳໃນການແກ້ໄຂບັນຫາ ລບຕ ຂອງຕົນເອງໃນປີ 2019 ແລະ ໄດ້ສືບຕໍ່ຈົນມາຮອດປີ 2020. ຕໍ່ວຽກງານການສ້າງນິຕິກຳດັ່ງກ່າວ ພວກເຮົາ ໄດ້ໃຫ້ການສະໜັບສະໜູນ ແລະ ຄາດຫວັງວ່າ ຮ່າງດັ່ງກ່າວ ຈະສຳເລັດໃນປີ 2021.

ໃນປີ 2021, ລັດຖະບານລາວ ຈະໃຫ້ສຳເລັດແຜນຍຸດທະສາດແຫ່ງຊາດ 10 ປີ ໃນການແກ້ໄຂບັນຫາ ລບຕ ແລະ ຈະທົບທວນຄືນການຈັດຕັ້ງປະຕິບັດບັນດາເປົ້າໝາຍການພັດທະນາແບບຍືນຍົງ ໂດຍຜ່ານຂະບວນການລາຍງານແຫ່ງຊາດແບບສະໝັກໃຈ. ສິ່ງດັ່ງກ່າວ ຈະເປັນໂອກາດທີ່ດີສຳລັບພວກເຮົາ ເພື່ອສະທ້ອນ ແລະ ປຶກສາຫາລືກັນ ເພື່ອເຮັດແນວໃດໃຫ້ມີການເຮັດວຽກຮ່ວມກັນໃນການແກ້ໄຂບັນຫາ ລບຕ ໃນທົດສະວັດຕໍ່ໜ້າ ເປັນຕົ້ນແມ່ນທຶນຮອນ ເພື່ອບັນລຸບັນດາບັນດາເປົ້າໝາຍການພັດ ທະນາແບບຍືນຍົງ ໂດຍສະເພາະ ເປົ້າໝາຍການພັດທະນາແບບຍືນຍົງ ທີ 18 "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ".

ພວກເຮົາ ຍັງໃຫ້ຄຳໝັ້ນສັນຍາ ທີ່ຈະສືບຕໍ່ຮ່ວມມື ແລະ ພະຍາຍາມຮ່ວມກັນ ເພື່ອຊ່ວຍເຫຼືອ ສປປ ລາວ ບັນລຸພັນທະຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ຮັບປະກັນຄວາມຍືນຍົງໄລຍະຍາວ ແລະ ຄວາມເປັນເຈົ້າການແຫ່ງຊາດໃນການແກ້ໄຂບັນຫາ ລບຕ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ແລະ ເປົ້າໝາຍການພັດທະນາແບບຍືນຍົງ ທີ 18.

**ປີເຕີ້ ເອັມ. ເຮມ້ອນ**

**ເອກອັກຄະລະຖະທູດສະຫະລັດອາເມລິກາ ປະຈຳ ສປປ ລາວ, ປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ**

**ລິຄາດາ ລິກເຈີ**

**ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ, ປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ**

# ຕົວອັກສອນຫຍໍ້ ແລະ ຄວາມໝາຍສັບ

ເອຊີ - ການກວດກູ້
ເອບີເອັມບີຊີ - ສົນທິສັນຍາວ່າດ້ວຍການຕ້ານລະເບີດຝັງດິນ
ເອດີອາເອ - ອົງການພັດທະນາ ແລະ ບັນເທົາໄພພິບັດ
ເອທີທີພີ - ແຂວງອັດຕະປື
ເອດັບເບີ້ນຢູພີ - ແຜນການປະຈຳປີ
ຊີເອເອັມເອ - ວິທີການທີ່ເໝາະສົມໃນການແກ້ໄຂລະເບີດຝັງດິນ
ຊີຊີເອັມ - ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ
ຊີເອັບຟ໌ແອວໄອ - ກອງທຶນສຳລັບການລິເລີ່ມກິດຈະກຳຢູ່ທ້ອງຖິ່ນຂອງການາດາ (ໂຄງການອົງການພັດທະນາສາກົນຂອງການາດາ)
ຊີເອັດຈ໌ເອ - ພື້ນທີ່ ລບຕ ຕົກຄ້າງ
ຊີເອັມອາເອັດສ໌ - ການສຳຫຼວດຊອກຫາລະເບີດລູກຫ່ວານ
ໂຄບ - ອົງການບໍລິການອົງຄະທຽມ ແລະ ເຄື່ອງຄ້ຳຊູ
ຊີພີເອັດ - ແຂວງຈຳປາສັກ
ຊີອາພີດີ - ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ
ຊີທີເອ - ຫົວໜ້າຊ່ຽວຊານທີ່ປຶກສາ
ດີເອພີ - ແຜນປະຕິບັດງານດູໂບນົກ
ດີຟິດ - ອົງການພັດທະນາສາກົນແຫ່ງຊາດຊະອານາຈັກອັງກິດ
ດີພີເອເອ - ອົງການຊ່ວຍເຫຼືອຜູ້ຖືກສານພິດຈາກສົງຄາມ ຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ
ອີໂອດີ - ການທຳລາຍລະເບີດ
ອີອາດັບເບີ້ນຢູ - ລະເບີດຕົກຄ້າງປາງສົງຄາມ
ອີຢູ - ສະຫະພາບເອີລົບ
ຈີໂອແອວ - ລັດຖະບານ ສປປ ລາວ
ເຈຼດ - ກຸ່ມຄົ້ນຄ້ວາທາງດ້ານເທັກໂນໂລຊີເພື່ອການປ່ຽນແປງ
ເອັດຈ໌ເອ - ເຮັກຕາ
ເອັດຈ໌ໄອ - ອົງການເພື່ອມະນຸດ ແລະ ການມີສ່ວນຮ່ວມ
ເອັດຈ໌ພີ - ແຂວງຫົວພັນ
ໄອເອັມ - ການບໍລິຫານຄຸ້ມຄອງຂໍ້ມູນ
ອິມສ໌ມາ - ຖານຂໍ້ມູນ ລບຕ
ຈິກສ໌ - ລະບົບການຮ່ວມມືສາກົນຂອງຢີ່ປຸ່ນ
ເຄເອັມ - ຄຳມ່ວນ
ກອຍກາ - ອົງການຮ່ວມມືສາກົນຂອງ ສ. ເກົາຫຼີ
ສ ປປ ລາວ  - ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ແອວພີບີ - ຫຼວງພະບາງ
ແມັກ - ອົງການໃຫ້ຄຳປຶກສາດ້ານການແກ້ໄຂລະເບີດຝັງດິນ
ຣສສ - ກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ
ເອັມອາອີ - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ
ນົມ - ເອກະສານແຫ່ງຊາດ ໃນການປະຕິບັດງານໂຄງການ
ເອັນເອັມເອັບຟ໌ເອ - ກະຊວງການຕ່າງປະເທດນໍອກແວ
ເອັນທີເອັບຟ໌ພີ - ຜະລິດຕະພັນຄ້າຍຄືໄມ້
ເອັນມາດສ໌ - ມາດຕະຖານແຫ່ງຊາດໃນການແກ້ໄຂລະເບີດຝັງດິນ
ເອັນພີເອ - ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ
ເອັນອາເອ - ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ເອັນເອັດສ໌ອີດີພີ - ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ
ເອັນທີເອັດສ໌ - ການສຳຫຼວດບໍ່ແມ່ນແບບວິຊາການ
ເອັນແຊັດສ໌ - ນິວຊີແລນ
ອອກຟາມ - ຄະນະກຳມະການຊ່ວຍເຫຼືອບັນເທົາຄວາມອຶດຫິວຂອງອອກຟອດ
ພີເອັມ/ດັບເບີ້ນຢູອາເອ - ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ
ຄິວເອັມ - ການກວດກາຄຸນນະພາບ
ອາຊີ - ກອງປະຊຸມທົບທວນ
ອາອີ - ການສຶກສາຄວາມສ່ຽງ
ອາທີ - ການທຳລາຍ ລບຕ ແບບເຄື່ອນທີ່
ເອັດສ໌ດີຈີ 18 - ເປົ້າໝາຍການພັດທະນາແບບຍືນຍົງ ທີ 18
ເອັດສ໌ແອວວີ - ແຂວງສາລະວັນ
ເອັດສ໌ເຄ - ແຂວງເຊກອງ
ເອັດສ໌ວີເຄ - ແຂວງສະຫວັນນະເຂດ
ທີເອັດສ໌ - ການສຳຫຼວດແບບວິຊາການ
ຢູເຄ - ລາດຊະອານາຈັກອັງກິດ
ຢູເອັນດີພີ - ອົງການ ສປຊ ເພື່ອການພັດທະນາ
ກອງ 58 - ກອງກວດກູ້ລະເບີດເພື່ອມະນຸດສະທຳກອງທັບ
ຢູເອັດສ໌ - ສະຫະລັດອາເມລິກາ
ຢູເອັດສ໌ດີ - ໂດລາສະຫະລັດ
ຢູເອັດສ໌ດີໂອເອັດສ໌ - ກະຊວງການຕ່າງປະເທດສະຫະລັດອາເມລິກາ
ຄກລ - ໂຄງການເກັບກູ້ລະເບີດແຫ່ງຊາດ
ລບຕ - ລະເບີດບໍ່ທັນແຕກ
ວີເອ - ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ
ດັບເບີ້ນຢູອີ - ອົງການສຶກສາໂລກ
ດັບເບີ້ນຢູເອັດຈ໌ດັບເບີ້ນຢູວີ - ພວກເຮົາຊ່ວຍເຫຼືອຜູ້ຖືກເຄາະຮ້າຍປາງສົງຄາມ
ດັບເບີ້ນຢູດັບເບີ້ນຢູເອັມ - ອົງການໂລກປອດຈາກລະເບີດຝັງດິນ
ເອັກເຄ - ແຂວງຊຽງຂວາງ

## ສະພາບຕົວຈິງລະເບີດບໍ່ທັນແຕກ ທີ່ຕົກຄ້າງ ແລະ ຕົວເລກສະຖິຕິ

- ສປປ ລາວ ເປັນປະເທດທີ່ຖືກຜົນກະທົບຢ່າງໜັກໜ່ວງທີ່ສຸດຈາກລະເບີດ, ທຽບໃສ່ຫົວຄົນໃນປະຫວັດສາດ
- 25% ຂອງຈຳນວນບ້ານ ຢູ່ໃນ ສປປ ລາວ ໄດ້ຮັບຜົນກະທົບຈາກ ລບຕ
- 17 ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ຮັບຜົນກະທົບຈາກ ລບຕ ທີ່ຍັງຕົກຄ້າງ
- ລະເບີດຫຼາຍກວ່າ 2 ລ້ານໂຕນ ໄດ້ຖິ້ມລົງໃສ່ຜືນແຜ່ນດິນຂອງ ສປປ ລາວ ໃນລະຫວ່າງປີ 1964 ຫາ 1973
- ມີຖ້ຽວບິນຖິ້ມລະເບີດໃສ່ ສປປ ລາວ ຈຳນວນ 580,000 ຖ້ຽວ
- ລະເບີດລູກຫວ່ານ ແມ່ນມີຫຼາຍທີ່ສຸດຂອງຈຳນວນ ລບຕ ທີ່ພົບເຫັນ ແລະ ຍັງຕົກຄ້າງຢູ່ ສປປ ລາວ
- ລະເບີດລູກຫວ່ານ ຫຼາຍກວ່າ 270 ລ້ານໜ່ວຍ ໄດ້ຫວ່ານລົງໃສ່ຜືນແຜ່ນດິນຂອງ ສປປ ລາວ, ຄາດຄະເນ 30% ຍັງບໍ່ທັນແຕກ
- ພາຍຫຼັງສົງຄາມສິ້ນສຸດລົງ ລະເບີດລູກຫວ່ານ ປະມານ 80 ລ້ານໜ່ວຍ ແມ່ນຍັງບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ
- ນັບແຕ່ປີ 1964 ມີປະຊາຊົນບັນດາເຜົ່າຫຼາຍກວ່າ 50,000 ຄົນ ໄດ້ເສຍຊີວິດ ແລະ ຮັບບາດເຈັບຈາກ ລບຕ
- ໃນໄລຍະ 10 ປີ ຜ່ານມາ, ມີຜູ້ຖືກບາດເຈັບຈາກ ລບຕ ທັງໝົດ 359 ຄົນ ກວມເອົາ (77%) ແລະ ເສຍຊີວິດ ທັງໝົດ 106 ຄົນ ກວມເອົາ (23%)
- ໃນທົດສະຫວັດຫຼ້າສຸດຜ່ານມານີ້ (2011-2020) 540% ຂອງຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລບຕ ແມ່ນເດັກນ້ອຍ (ຕ່ຳກວ່າ 18 ປີ)
- ອຸປະຕິເຫດຈາກລະເບີດລູກຫວ່ານ ເພີ່ມຂຶ້ນເປັນ 30% ທຽບໃສ່ທົດສະວັດທີ່ຜ່ານມາ

## ລະເບີດບໍ່ທັນແຕກ (ລບຕ) ແມ່ນຫຍັງ?

ລະເບີດບໍ່ທັນແຕກ ຫຼື ລບຕ ແມ່ນອາວຸດທີ່ຍັງບໍ່ທັນແຕກໃນເວລາຖືກຍິງອອກ, ຕົກລົງ ຫຼື ຝັງອອກ ແມ່ນຍັງມີຄວາມສ່ຽງທີ່ຈະລະເບີດຂຶ້ນໄດ້ທຸກເວລາ. ການຕົກຄ້າງຂອງ ລບຕ ຢູ່ໃນ ສປປ ລາວ ປະກອບມີ ລະເບີດບົມໃຫຍ່, ລູກຈະຫຼວດ, ໝາກແຕກ, ລູກປືນໃຫຍ່, ລູກປືນຄົກ, ລະເບີດຝັງດິນ ແລະ ລະເບີດລູກຫວ່ານ.

ລະເບີດລູກຫວ່ານ ແມ່ນອາວຸດທີ່ປະກອບດ້ວຍຮາງກະປາງ ແລະ ອອກແບບເພື່ອແຈກ ຫຼື ປົດປ່ອຍລະເບີດລູກຫວ່ານນ້ອຍອອກມາ, ຊຶ່ງແຕ່ລະໜ່ວຍ ໜັກບໍ່ເກີນ 20 ກິໂລກຣາມ. ບັນດາລະເບີດລູກຫວ່ານນ້ອຍໆເຫຼົ່ານີ້ ແມ່ນເປັນທີ່ຮູ້ຈັກກັນດີຢູ່ໃນ ສປປ ລາວ ທີ່ເອີ້ນກັນວ່າ "ລະເບີດລູກຫວ່ານ ຫຼື ບົມບີ" ຈະຖືກຖິ້ມລົງຈາກຍົນຢູ່ໃນລະດັບທີ່ກຳນົດໄວ້ ແລະ ຈະຍູ້ສະເດັນລະເບີດລູກຫວ່ານອອກຫວ່ານເປັນພື້ນທີ່ວົງກວ້າງ. ບັນດາລະເບີດລູກຫວ່ານທີ່ຖິ້ມລົງໃສ່ ສປປ ລາວ ມີອັດຕາພາດບໍ່ແຕກສູງປະມານ 30% ແລະ ຍັງຕົກຄ້າງຢູ່ຕາມແຜນດິນຂອງ ສປປ ລາວ. ເມື່ອໃດທີ່ພວກມັນຖືກແຕະຕ້ອງ ແລະ ຖືກລົບກວນ ແມ່ນຍັງສາມາດແຕກຂຶ້ນໄດ້ທຸກເວລາ ເຖິງແມ່ນວ່າ ເວລາຈະຜ່ານໄປຫຼາຍທົດສະວັດແລ້ວກໍ່ຕາມ ໂດຍຈະສົ່ງຜົນກະທົບໃຫ້ປະຊາຊົນຖືກບາດເຈັບ ແລະ ເສຍຊີວິດໄດ້ ໃນເວລາທີ່ກຳລັງເຮັດກິດຈະກຳປະຈຳວັນ.

ປະຈຸບັນນີ້, ສປປ ລາວ ເປັນໜຶ່ງໃນບັນດາປະເທດທີ່ຖືກກະທົບຈາກລະເບີດລູກຫວ່ານຮ້າຍແຮງກວ່າໝູ່ໃນໂລກ, ໂດຍ 25% ຂອງ 10,000 ບ້ານໃນທົ່ວປະເທດມີການຕົກຄ້າງຈາກບັນດາອາວຸດເຫຼົ່ານີ້. ຕະຫຼອດໄລຍະເວລາ 9 ປີ, ມີລະເບີດລູກຫວ່ານກວ່າ 270 ລ້ານໜ່ວຍ ໄດ້ຖືກຖິ້ມລົງໃສ່ຜືນແຜ່ນດິນຂອງ ສປປ ລາວ, ສາມາດຄາດກະໄດ້ວ່າ ປະມານ 80 ລ້ານໜ່ວຍ ຍັງບໍ່ທັນແຕກ ແລະ ຕົກຄ້າງຢູ່ໃນສະພາບທີ່ສາມາດລະເບີດຂຶ້ນໄດ້ ແລະ ຍັງຢູ້ງຢາຍໃນທົ່ວປະເທດ. ນອກນັ້ນ, ຍັງມີບົມໃຫຍ່ຫຼາຍກວ່າສີ່ລ້ານໜ່ວຍ ທີ່ຖືກຖິ້ມລົງໃນສະໜາມຮົບອັນກວ້າງໃຫຍ່ ແລະ ຍັງເຊື່ອງຊ້ອນຢູ່ຕາມພູມລຳເນົາຕ່າງໆຂອງປະເທດ.

# ການສັງລວມຫຍໍ້

## ພາບລວມໃນປີ 2020:

ຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ປະກອບມີຫຼາຍພາກສ່ວນປະຕິບັດງານແກ້ໄຂບັນຫາລະເບີດບໍ່ທັນແຕກ ດຳເນີນການເຄື່ອນໄຫວວຽກງານ ເພື່ອຫຼຸດຜ່ອນຜົນກະທົບຂອງລະເບີດບໍ່ທັນແຕກ (ລບຕ) ຕໍ່ບຸກຄົນ ແລະ ຊຸມຊົນຕ່າງໆ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຕ່າງໆຂອງລັດຖະບານ. ອົງການປະຕິບັດງານແກ້ໄຂ ລບຕ ປະກອບມີ ຝ່າຍລັດຖະບານລາວ, ເຄືອຄ່າຍອົງການ ສປຊ ເພື່ອການພັດທະນາ, ປະເທດຜູ້ໃຫ້ທຶນ, ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ, ອົງການພາຍໃນປະເທດ ແລະ ບໍລິສັດກວດກູ້ ລບຕ.

ບົດລາຍງານສະບັບນີ້ຈະເນັ້ນໜັກໃສ່ລາຍງານຄວາມຄືບໜ້າໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນປີ 2020 ເພື່ອບັນລຸເປົ້າໝາຍສູງສຸດຄື ເຮັດໃຫ້ ສປປ ລາວ ປອດຈາກໄພຂົ່ມຂູ່ຂອງ ລບຕ.

ປີ 2020 ເປັນປີທີ່ມີຄວາມທ້າທາຍຫຼາຍ ຍ້ອນປະເຊີນກັບບັນຫາການແຜ່ລະບາດຂອງພະຍາດໂຄວິດ 19. ໃນຊ່ວງໄລຍະຂອງການແຜ່ລະບາດຂອງພະຍາດດັ່ງກ່າວ ເຮັດໃຫ້ການປະຕິບັດງານຢູ່ບາງພື້ນທີ່ຂອງໂຄງການ ຖືກໂຈະຊົ່ວຄາວ ເລີ່ມແຕ່ວັນທີ 29 ມີນາ ເຖິງ 31 ພຶດສະພາ 2020 ເພື່ອປະຕິບັດຕາມແຈ້ງການຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020. ເຖິງຢ່າງໃດກໍ່ຕາມ, ຂະແໜງການແກ້ໄຂບັນຫາ ລບຕ ກໍ່ໄດ້ສືບຕໍ່ປະຕິໜ້າທີ່ໃນການແກ້ໄຂບັນຫາ ລບຕ ຕາມແຜນການທີ່ວາງໄວ້ ເຖິງແມ່ນວ່າ ຈະມີຄວາມຊັກຊ້າກໍ່ຕາມ.

ສຳລັບວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແມ່ນໄດ້ມີການເຊື່ອມສານຂໍ້ຄວາມກ່ຽວກັບການຕ້ານການແຜ່ລະບາດຂອງພະຍາດໂຄວິດ 19 ເຂົ້າໃນລາຍການວິທະຍຸ ລບຕ, ຊຶ່ງລາຍການວິທະຍຸຈະອອກອາກາດ 8 ຄັ້ງຕໍ່ເດືອນ ໃນ 5 ສະຖານນີ ຄື: ວິທະຍຸກະຈາຍສຽງແຫ່ງຊາດ, ສະຖານນີວິທະຍຸແຂວງຄຳມ່ວນ, ເຊກອງ, ສາລະວັນ ແລະ ຈຳປາສັກ.

ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ໃນປີ 2020 ມີທັງໝົດ 33 ຄົນ. ໃນປີ 2020 ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ແມ່ນເພີ່ມຂຶ້ນ ສົມທຽບກັບປີກ່ອນນີ້ (25 ຄົນ). ແນວໃດກໍ່ຕາມ, ຈຳນວນຕົວເລກດັ່ງກ່າວ ກໍ່ຖືວ່າ ຫຼຸດລົງເຄິ່ງໜຶ່ງ ຖ້າທຽບໃສ່ຕົວເລກໃນປີ 2016.ພ້ອມນັ້ນ, ຕົວເລກດັ່ງກ່າວ ຍັງໜ້ອຍກວ່າຕົວເລກຄາດໝາຍທີ່ກຳນົດໄວ້ໃນການທົບທວນກາງສະໄໝແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາ ລບຕ ຄື ໃຫ້ຕ່ຳກວ່າ 40 ຄົນຕໍ່ປີ. ນອກຈາກນັ້ນ, ກໍ່ຍັງສາມາດບັນລຸຄາດໝາຍປະຈຳປີທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ອີກດ້ວຍ.

ສາເຫດຂອງການເກີດອຸປະຕິເຫດ ສ່ວນໃຫຍ່ແມ່ນເກີດມາຈາກການດັງໄຟເພື່ອແຕ່ງຢູ່ຄົວກິນ, ຈູດໄຮ່ ເພື່ອຊັບຊາວເນື້ອທີ່ເຮັດກະສິກຳ, ຖາງຫຍ້າ ແລະ ຕັດໄມ້. ສິ່ງດັ່ງກ່າວຮຽກຮ້ອງໃຫ້ມີການສືບຕໍ່ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ຫຼາຍຂຶ້ນຕື່ມອີກ ໂດຍສະເພາະແມ່ນການໂຄສະນາໃຫ້ປະຊາຊົນຮູ້ວິທີທຳການຜະລິດ ແລະ ວຽກງານຕ່າງໆຂ້າງເທິງ ເພື່ອຫຼີກລ່ຽງການເກີດອຸປະຕິເຫດຈາກ ລບຕ.

ໂດຍປະຕິບັດຕາມວິທີການສຳຫຼວດແບບໃໝ່ ເພື່ອຊອກຫາ ລບຕ, ລັດຖະບານລາວ, ບັນດາອົງການປະຕິບັດງານແກ້ໄຂ ລບຕ ເພື່ອມະນຸດສະທຳ ໄດ້ສືບຕໍ່ປະຕິບັດວິທີການສຳຫຼວດແບບໃໝ່ ເພື່ອກຳນົດພື້ນທີ ລບຕ ຕົກຄ້າງ ເພື່ອນຳໄປສູ່ການກວດກູ້ ລບຕ.ໃນປີ 2020, ລະເບີດລູກຫວ່ານທີ່ພົບເຫັນຕໍ່ເຮັກຕາ ແມ່ນຫຼຸດລົງ ຍ້ອນວ່າ ລບຕ ທີ່ພົບເຫັນເທິງໜ້າດິນແມ່ນໄດ້ຖືກກວດກູ້ ແລະ ທຳລາຍ ໄປໝົດແລ້ວໃນໄລຍະຊຸມປີຜ່ານມາ ແລະ ລບຕ ສ່ວຍຫຼາຍແມ່ນຕົກຄ້າງຢູ່ພື້ນດິນເປັນສ່ວນໃຫຍ່. ໃນປີ 2020, ພື້ນທີ່ 180,680,791 ຕາແມັດ ຫຼື 18,068.07 ເຮັກຕາ ໄດ້ຖືກກຳນົດເປັນພື້ນທີ່ ລບຕ ຕົກຄ້າງ ໂດຍຜ່ານຂະບວນການສຳຫຼວດແບບວິຊາການ.

ໃນປີ 2020, ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ ແລະ ບໍລິສັດກວດກູ້ ລບຕ ຂອງລາວ ແລະ ຕ່າງປະເທດ ສາມາດກວດກູ້ ລບຕ ໄດ້ 53,923,111 ຕາແມັດ ຫຼື 5,392 ເຮັກຕາ ອີງໃສ່ການລາຍງານໃນຖານຂໍ້ມູນຂອງ ຄຊກລ.

ຄຽງຄູ່ກັບຜົນສຳເລັດຂອງວຽກງານກວດກູ້ ລບຕ, ກໍ່ຍັງໄດ້ມີການເຄື່ອນໄຫວໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ປະຊາຊົນລາວບັນດາເຜົ່າ ໂດຍສະເພາະແມ່ນ ກຸ່ມເດັກນ້ອຍ ເພື່ອໃຫ້ເຂົາເຈົ້າຮັບຮູ້ ແລະ ເຂົ້າໃຈກ່ຽວກັບຄວາມອັນຕະລາຍຂອງ ລບຕ ແລະ ວິທີການຫຼີກລ່ຽງການເກີດອຸປະຕິເຫດ ແລະ ໄພຂົ່ມຂູ່ຈາກ ລບຕ. ຜ່ານການດຳເນີນວຽກງານດັ່ງກ່າວ ໃນປີ 2020 ມີຜູ້ໄດ້ຮັບຜົນປະໂຫຍດຈາກວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຈຳນວນ 257,075 ຄົນ.

ນອກຈາກນັ້ນ, ໃນປີ 2020, ໂພດສ໌ເຕີ້ 3,600 ແຜ່ນ ແລະ ປຶ້ມຊ່ຽນສອດແຊກຄວາມຮູ້ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ຖືກຈັດພິມ ແລະ ໄດ້ແຈກຢາຍໃຫ້ບັນດາອົງການປະຕິບັດໃນທົ່ວຂະແໜງການ ນຳໃຊ້ ລວມທັງ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ທີ່ປະຕິບັດໜ້າທີ່ຢູ່ໃນ 9 ແຂວງ, ຫ້ອງການຄະນະກຳມະການຄຸ້ມຄອງການແກ້ໄຂບັນຫາ ລບຕ ຂັ້ນແຂວງ (ຫ້ອງການ ຄຄກລຂ) ຢູ່ 13 ແຂວງ, ສະຖານນີວິທະຍຸ 5 ແຂວງ (ວິທະຍຸກະຈາຍສຽງແຫ່ງຊາດ, ສະຖານນີວິທະຍຸແຂວງຄຳມ່ວນ, ເຊກອງ, ສາລະວັນ ແລະ ຈຳປາສັກ). ນອກຈາກນັ້ນ, ຍັງໄດ້ປະສານກັບບັນດາອົງການປະຕິບັດງານ ເຄື່ອນໄຫວການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ 2,899 ໂຮງຮຽນ, ມີນັກຮຽນໄດ້ຮັບຜົນປະໂຫຍດ ຈຳນວນ 264,114 ຄົນ. ນອກຈາກນັ້ນ, ຍັງໄດ້ເຄື່ອນໄຫວໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ 1,946 ເທື່ອຄັ້ງ ໃນ 716 ບ້ານ, ມີຜູ້ໄດ້ຮັບຜົນປະໂຫຍດ ຈຳນວນ 257,075 ຄົນ, ໃນນີ້ 129,167 ຄົນ ແມ່ນຜູ້ຍິງ.

ສໍາລັບວຽກງານກວດກາຄຸນນະພາບ, ຄຊກລ ໄດ້ສືບຕໍ່ຄົ້ນຄວ້າອອກໃບຢັ້ງຢືນການປະຕິບັດງານໃຫ້ແກ່ບັນດາອົງການປະຕິບັດງານ ໂດຍປະກອບມີ (ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ, ບໍລິສັດກວດກູ້ລະເບີດ ແລະ ກອງກວດກູ້ລະເບີດມະນຸດສະທໍາກອງທັບ) ເພື່ອຮັບປະກັນໃຫ້ການປະຕິບັດງານ ສອດຄ່ອງກັບມາດຕະຖານແຫ່ງຊາດ ໃນການແກ້ໄຂບັນຫາ ລບຕ. ໃນປີ 2020, ອົງການປະຕິບັດງານທີ່ໄດ້ຮັບໃບຢັ້ງຢືນການປະຕິບັດງານ ມີທັງໝົດ 26 ພາກສ່ວນ (6 ອົງການປະຕິບັດງານແກ້ໄຂ ລບຕ ເພື່ອມະນຸດສະທໍາ ແລະ 20 ບໍລິສັດກວດກູ້ ລບຕ). ໃນປີ 2020, ຄຊກລ ໄດ້ເຄື່ອນໄຫວກວດກາຄຸນນະພາບການປະຕິບັດງານຂອງອົງການປະຕິບັດງານ ຢູ່ບັນດາແຂວງທີ່ມີ ລບຕ ຕົກຄ້າງ ທັງໝົດ 24 ຄັ້ງ (ຄກລ, ອົງການເອັ້ດຈ໌ໄອ, ອົງການເອັນພີເອ, ອົງການແມັກ ແລະ ກອງກວດກູ້ລະເບີດເພື່ອມະນຸດສະທໍາກອງທັບ).

# ຜົນສຳເລັດຂອງຂະແໜງການ ໃນປີ 2020: ຕົວເລກຜົນສຳເລັດດ້ານຕ່າງໆ

| ວຽກງານປະຕິບັດງານແກ້ໄຂ ລບຕ ເພື່ອມະນຸດສະທຳ - ລບຕ ທີ່ຖືກທຳລາຍ ຜ່ານການກວດກູ້ ແຕ່ປີ 2011-2020 | | | | | | | |
|---|---|---|---|---|---|---|---|
| ປີ | ເນື້ອທີ່ກວດກູ້ (ຮຕ) | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ | ລະເບີດລູກຫວ່ານ ທີ່ພົບຕໍ່ ຮຕ |
| 2010 | 2,996 | 39 | 19,740 | 18 | 14,506 | 34,303 | 6.6 |
| 2011 | 3,692 | 22 | 19,088 | 96 | 19,683 | 38,889 | 5.2 |
| 2012 | 3,823 | 60 | 26,011 | 18 | 17,318 | 43,407 | 6.8 |
| 2013 | 3,288 | 28 | 22,847 | 48 | 20,626 | 43,549 | 6.9 |
| 2014 | 3,662 | 36 | 26,566 | 78 | 17,697 | 44,377 | 7.3 |
| 2015 | 2,961 | 55 | 49,497 | 108 | 13,162 | 62,822 | 16.7 |
| 2016 | 3,315 | 43 | 61,144 | 1 | 15,503 | 76,691 | 18.4 |
| 2017 | 3,852 | 20 | 64,241 | 16 | 16,462 | 80,739 | 16.7 |
| 2018 | 3,670 | 35 | 45,441 | 5 | 11,740 | 57,221 | 12.4 |
| 2019 | 4,577 | 30 | 42,085 | 4 | 11,081 | 53,200 | 9.2 |
| 2020 | 4,302 | 23 | 38,862 | 4 | 10,355 | 49,244 | 9.03 |

## ຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ

| ຈຳນວນອຸປະຕິເຫດ ແລະ ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ຢູ່ ສປປ ລາວ ແຕ່ປີ 2010-2020 | | | | | | | | | | |
|---|---|---|---|---|---|---|---|---|---|---|
| ປີ | ອຸປະຕິເຫດ | ບາດເຈັບ | | | | ເສຍຊີວິດ | | | | ລວມ |
| | | ເດັກ ຊາຍ | ເດັກ ຍິງ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກ ຍິງ | ໃຫຍ່ ຊາຍ | ໃຫຍ່ ຍິງ | |
| 2010 | 75 | 33 | 8 | 47 | 7 | 9 | 1 | 9 | 5 | ***119*** |
| 2011 | 64 | 32 | 9 | 34 | 4 | 6 | 0 | 14 | 0 | ***99*** |
| 2012 | 36 | 17 | 11 | 11 | 2 | 6 | 1 | 6 | 2 | ***56*** |
| 2013 | 18 | 9 | 2 | 12 | 5 | 5 | 0 | 7 | 1 | ***41*** |
| 2014 | 22 | 8 | 5 | 9 | 7 | 4 | 0 | 12 | 0 | ***45*** |
| 2015 | 27 | 15 | 1 | 16 | 1 | 6 | 1 | 2 | 0 | ***42*** |
| 2016 | 35 | 17 | 3 | 24 | 5 | 2 | 0 | 8 | 0 | ***59*** |
| 2017 | 19 | 12 | 8 | 11 | 6 | 3 | 0 | 0 | 1 | ***41*** |
| 2018 | 17 | 4 | 8 | 4 | 5 | 2 | 1 | 0 | 0 | ***24*** |
| 2019 | 20 | 5 | 2 | 4 | 5 | 8 | 0 | 1 | 0 | ***25*** |
| 2020 | 23 | 12 | 10 | 2 | 2 | 5 | 2 | 0 | 0 | ***33*** |

| ສາເຫດຂອງການເກີດອຸປະຕິເຫດຈາກ ລບຕ ແຕ່ປີ 2015 – 2020 | | | | | | |
|---|---|---|---|---|---|---|
| | 2015 | 2016 | 2017 | 2018 | 2019 | 2020 |
| ເຮັດກະສິກຳ | 4 | 6 | 2 | 2 | 3 | 2 |
| ດັງໄຟ (ແຕ່ງກິນ ແລະ ຈູດໄຮ່ ເພື່ອຊັບຊ່າວພື້ນທີ່ກະສິກຳ) | 16 | 11 | 10 | 3 | 8 | 10 |
| ມ້າງລະເບີດ | 5 | 3 | 1 | 2 | 7 | 1 |
| ຫຼີ້ນລະເບີດ | 2 | 12 | 3 | 5 | 1 | 3 |
| ຕັດຫຍ້າ | 0 | 1 | 1 | 1 | 1 | 5 |
| ລະເບີດຖືກລົບກວນ | 0 | 2 | 2 | 4 | 0 | 2 |
| **ລວມ** | **27** | **35** | **19** | **17** | **20** | **23** |

| ແຂວງ | ອຸປະຕິເຫດ | ບາດເຈັບ | | | | ເສຍຊີວິດ | | | | ລວມ |
|---|---|---|---|---|---|---|---|---|---|---|
| | | ເດັກ ຊາຍ | ເດັກ ຍິງ | ໃຫ່ຍ ຊາຍ | ໃຫ່ຍ ຍິງ | ເດັກ ຊາຍ | ເດັກ ຍິງ | ໃຫ່ຍ ຊາຍ | ໃຫ່ຍ ຍິງ | |
| ຈຳປາສັກ | 1 | - | - | 1 | 0 | 1 | 0 | 0 | 0 | 2 |
| ຫົວພັນ | 1 | - | 0 | 2 | 0 | 0 | 0 | 0 | 0 | 2 |
| ຄຳມ່ວນ | 4 | 2 | 0 | 2 | 0 | 0 | 0 | 1 | 0 | 5 |
| ຜົ້ງສາລີ | 1 | - | 0 | 1 | 0 | 0 | 0 | 1 | 0 | 2 |
| ສາລະວັນ | 3 | 1 | 0 | 1 | 1 | 0 | 0 | 0 | 0 | 3 |
| ສະຫວັນນະເຂດ | 7 | 4 | 2 | 2 | 0 | 1 | 0 | 3 | 0 | 12 |
| ໄຊສົມບູນ | 1 | - | 0 | 0 | 1 | 0 | 0 | 0 | 0 | 1 |
| ຊຽງຂວາງ | 5 | 3 | 0 | 3 | 0 | 0 | 0 | 0 | 0 | 6 |
| **ລວມ** | **23** | **10** | **2** | **12** | **2** | **2** | **0** | **5** | **0** | **33** |

## ອີງການປະຕິບັດງານກວດກູ້ ລບຕ ໃນປີ 2020

### ການສຳຫຼວດບໍ່ແມ່ນແບບວິຊາການ

| **ພາກສ່ວນ** | **ຈນ ບ້ານ** | **ຈນ ຄັ້ງ** | **ຈຸດຫຼັກຖານ** | **ລະເບີດລູກຫວ່ານ** | **ຜູ້ໄດ້ຮັບຜົນປະໂຫຍດ** |
|---|---|---|---|---|---|
| ກອງ 58 | 45 | 47 | 111 | 349 | 9,391 |
| ຮາໂລ | 123 | 123 | 44 | 234 | 9,374 |
| ເຫັດໄຂ | 10 | 10 | 3 | 22 | 2,952 |
| ແມັກ | 55 | 55 | 283 | 1,084 | 2,000 |
| ເອນພີເອ | 322 | 322 | 454 | 924 | 21,327 |
| ຄກລ | 103 | 104 | 2622 | 1,694 | 65,281 |
| **ລວມ** | **658** | **661** | **3,517** | **4,307** | **110,325** |

## ການສຳຫຼວດແບບວິຊາການ ເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ (ຊີເອັດຈ໌ເອ)

| ພາກສ່ວນ | ຈນ ບ້ານ | ຈນ ຄັ້ງ | | ເນື້ອທີ່ (ຕາແມັດ) | | ລບຕ | | | | |
|---|---|---|---|---|---|---|---|---|---|---|
| | | ການສຳຫຼວດດ້ານວິຊາການ | ພື້ນທີ່ ລບຕ ຕົກຄ້າງ | ການສຳຫຼວດ ດ້ານວິຊາການ | ພື້ນທີ່ ລບຕ ຕົກຄ້າງ | ບົມໃຫ່ຍ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ກອງ 58 | 8 | 16 | 8 | 1,492,200 | 312,742 | - | 47 | - | 5 | 52 |
| ຮາໂລ | 178 | 930 | 405 | 47,492,500 | 10,477,157 | 3 | 3,158 | - | 896 | 4,057 |
| ເຫັດໄອ | 9 | 18 | 16 | 1,252,500 | 603,164 | - | 215 | 1 | 5 | 221 |
| ແມັກ | 39 | 144 | 144 | 108,954,622 | 104,910,952 | | 8,305 | - | 39 | 8,344 |
| ເອັນພີເອ | 173 | 504 | 361 | 51,549,500 | 20,339,085 | 2 | 2,204 | - | 104 | 2,310 |
| ຄາລ | 162 | 370 | 331 | 67,909,500 | 44,037,691 | - | 5,189 | - | 1,126 | 6,315 |
| **ລວມ** | **569** | **1,982** | **1,265** | **278,650,822** | **180,680,791** | **5** | **19,118** | **1** | **2,175** | **21,299** |

## ການທຳລາຍ ລບຕ ແບບເຄື່ອນທີ່

| ພາກສ່ວນ | ຈນ ບ້ານ | ຈນ ຄັ້ງ | ຜູ້ໄດ້ຮັບຜົນປະໂຫຍດ | ລບຕ | | | | |
|---|---|---|---|---|---|---|---|---|
| | | | | ບົມໃຫ່ຍ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ກອງ 58 | 29 | 37 | 51,268 | 7 | 180 | - | 106 | 293 |
| ຮາໂລ | 270 | 1,346 | 9,661 | 33 | 5,758 | - | 1,815 | 7,606 |
| ເຫັດໄອ | 33 | 122 | 54,288 | - | 225 | 10 | 707 | 942 |
| ແມັກ | 158 | 2,327 | 19,591 | 4 | 11,687 | 1 | 2,149 | 13,841 |
| ມິວເຊີດສ໌ | 2 | 2 | - | - | - | - | 3 | 3 |
| ເອັນພີເອ | 371 | 606 | 84 | 35 | 4,896 | 12 | 2,416 | 7,359 |
| ຄາລ | 495 | 1,076 | 123,000 | 42 | 8,435 | 5 | 3,113 | 11,595 |
| **ລວມ** | **1,358** | **5,516** | **257,892** | **121** | **31,181** | **28** | **10,309** | **41,639** |

## ການກວດກູ້ ລບຕ (ຕາແມັດ)

| ພາກສ່ວນ | ຈນ ຄັ້ງ | ເນື້ອທີ່ (ຕາແມັດ) | | | ລວມ | | | | |
|---|---|---|---|---|---|---|---|---|---|
| | | ເນື້ອທີ່ ກະສິກຳ | ເນື້ອທີ່ ພັດທະນາ | ລວມ | ບົມໃຫ່ຍ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ກອງ 58 | 22 | 212,265 | 187,596 | 399,861 | 1 | 438 | 1 | 893 | 1,333 |
| ຮາໂລ | 93 | 2,852,170 | 43,721 | 2,895,891 | 1 | 2,592 | - | 1,154 | 3,747 |
| ເຫັດໄອ | 31 | 489,109 | 57,261 | 546,370 | - | 835 | 1 | 447 | 1,283 |

| | | | | | | | | | |
|---|---|---|---|---|---|---|---|---|---|
| ແອວແອນ ບີ | 36 | - | 9,205,503 | 9,205,503 | - | - | - | - | - |
| ແມັກ | 153 | 8,575,905 | 497,240 | 9,073,145 | 12 | 6,195 | - | 548 | 6,755 |
| ເອັມເອັມຈີ | 9 | - | 458,851 | 458,851 | - | 41 | - | 40 | 81 |
| ນິວເຊີດສ໌ | 41 | - | 296,940 | 296,940 | - | 8 | - | 83 | 91 |
| ເອັນພີເອ | 72 | 4,021,540 | 198,729 | 4,220,269 | 4 | 4,132 | - | 313 | 4,449 |
| ອູມມາ | 1 | - | 939,482 | 939,482 | - | 19 | - | 3 | 22 |
| ຄກລ | 812 | 25,598,821 | 287,978 | 25,886,799 | 5 | 24,670 | 2 | 7,000 | 31,677 |
| **ລວມ** | **1,270** | **41,749,810** | **12,173,301** | **53,923,111** | **23** | **38,930** | **4** | **10,481** | **49,438** |

## ລວມທັງໝົດ (ການກວດກູ້, ການທຳລາຍ ລບຕ ແບບເຄື່ອນທີ່ ແລະ ການສຳຫຼວດແບບວິຊາການ)

| ພາກສ່ວນ | ເນື້ອທີ່ (ຕາແມັດ) | | | ລບຕ | | | | |
|---|---|---|---|---|---|---|---|---|
| | ເນື້ອທີ່ ກະສິກຳ | ເນື້ອທີ່ ພັດທະນາ | ລວມ | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດ ອື່ນໆ | ລວມ |
| ກອງ 58 | 212,265 | 187,596 | 399,861 | 8 | 618 | 1 | 999 | 1,626 |
| ຮາໂລ | 2,852,170 | 43,721 | 2,895,891 | 34 | 8,350 | - | 2,969 | 11,353 |
| ເທັດໄອ | 489,109 | 57,261 | 546,370 | - | 1,060 | 11 | 1,154 | 2,225 |
| ແອວແອນ ບີ | - | 9,205,503 | 9,205,503 | - | - | - | - | - |
| ແມັກ | 8,575,905 | 497,240 | 9,073,145 | 16 | 17,882 | 1 | 2,697 | 20,596 |
| ເອັມເອັມຈີ | - | 458,851 | 458,851 | - | 41 | - | 40 | 81 |
| ນິວເຊີດສ໌ | - | 387,710 | 387,710 | - | 8 | - | 184 | 192 |
| ເອັນພີເອ | 4,270,055 | 198,729 | 4,468,784 | 39 | 10,152 | 12 | 2,729 | 12,932 |
| ອູມມາ | - | 939,482 | 939,482 | - | 19 | - | 3 | 22 |
| ຄກລ | 25,598,821 | 287,978 | 25,886,799 | 47 | 33,105 | 7 | 10,113 | 43,272 |
| **ລວມ** | **41,998,325** | **12,264,071** | **54,262,396** | **144** | **71,235** | **32** | **20,888** | **92,299** |

## ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ/ການໂຄສະນາສຶກສາຢູ່ຊຸມຊົນ

| ພາກສ່ວນ | ຈນ ບ້ານ | ຈນ ຄັ້ງ | ຜູ້ຮັບຊົມ | | |
|---|---|---|---|---|---|
| | | | ຊາຍ | ຍິງ | ລວມ |
| ກອງ 58 | 4 | 7 | 619 | 726 | 1,345 |
| ຮາໂລ | 186 | 592 | 14,225 | 13,671 | 27,896 |
| ເທັດໄອ | 25 | 48 | 5,957 | 5,927 | 11,884 |
| ແມັກ | 38 | 164 | 2,108 | 2,300 | 4,408 |
| ຄກລ | 323 | 1,109 | 85,503 | 84,809 | 170,312 |
| ດັບເບີ້ນຢູອີ | 179 | 211 | 19,496 | 21,734 | 41,230 |
| **ລວມ** | **755** | **2,131** | **127,908** | **129,167** | **257,075** |

## ບຸກຄະລາກອນໃນຂະແໜງການແກ້ໄຂບັນຫາ ລບຕ ໃນປີ 2020

| ພາກສ່ວນ | ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | | ລວມ |
|---|---|---|---|---|---|---|---|---|---|
| | ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | | |
| | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | |
| ຫຄຊກລ | 27 | 9 | 1 | 2 | 7 | 3 | 0 | 0 | **49** |
| ຄກລ | 119 | 71 | 7 | 1 | 1,003 | 274 | 2 | 0 | **1,477** |
| ເອັນພີເອ | 32 | 10 | 2 | 2 | 217 | 79 | 4 | 0 | **346** |
| ແມັກ | 73 | 55 | 1 | 2 | 506 | 280 | 5 | 0 | **926** |
| ຮາໂລ | 37 | 30 | 0 | 1 | 334 | 343 | 5 | 0 | **750** |
| ເທັດໄອ | 6 | 2 | | | 44 | 22 | 3 | 0 | **77** |
| ກອງ 58 | 0 | 0 | 0 | 0 | 86 | 10 | 0 | 0 | **96** |
| ເວີອີດູເຄຊັ້ນ | 2 | 4 | | | 11 | 8 | 1 | 3 | **29** |
| ໂຄບ | 2 | 3 | 0 | 0 | 0 | 2 | 2 | 0 | **9** |
| ລາວບີເອັດສ໌ແອວ | 3 | 3 | 0 | 0 | 110 | 4 | 0 | 0 | **120** |
| ສີລາວັນ | 2 | 0 | 0 | 0 | 8 | 3 | 0 | 0 | **13** |
| ອູບມາ | 4 | 0 | 0 | 0 | 24 | 0 | 0 | 2 | **30** |
| ພັນວິໄລ | 30 | 3 | 0 | 0 | 30 | 3 | 0 | 0 | **66** |
| ອອດສ໌ລາວ | 2 | 3 | 1 | 0 | 25 | 0 | 0 | 0 | **31** |
| **ລາວ** | **339** | **193** | **12** | **8** | **2,405** | **1,031** | **22** | **5** | **4,019** |

# ການເງິນ ແລະ ການລະດົມທຶນ ໃນປີ 2020:

## ສັງລວມລາຍຈ່າຍຕົວຈິງຂອງຂະແໜງການແກ້ໄຂບັນຫາ ລບຕ (ໂດລາ ສຫລ)
## ແຕ່ວັນທີ 1 ມັງກອນ - 31 ທັນວາ 2020

| **ພາກສ່ວນ** | **ຈຳນວນ** |
|---|---:|
| **ອົງການຂອງລັດຖະບານ** | |
| ຫ້ອງການ ຄຊກລ | 1,671,622 |
| ຄກລ | 9,469,563 |
| ກອງ 58 | 62,777 |
| ເງິນທີ່ອົງການປະຕິບັດງານໂອນໃຫ້ກັນແລະກັນ (ໝາຍເຫດ1) | (62,777) |
| **ລວມ** | ***11,141,185*** |
| **ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ (ອົງການປະຕິບັດງານ)** | |
| ໂຄບ | 416,000 |
| ຮາໂລທຣາດ | 6,122,788 |
| ເຫັດໄອ | 1,121,993 |
| ແມັກ | 7,168,351 |
| ເອັນພີເອ | 7,139,678 |
| ເວີອີດູເຄຊັ້ນ | 1,325,620 |
| ເງິນທີ່ອົງການປະຕິບັດງານໂອນໃຫ້ກັນແລະກັນ (ໝາຍເຫດ2) | (444,247) |
| **ລວມ** | ***22,850,183*** |
| **ບໍລິສັດເກັບກູ້ລະເບີດຂອງລາວ ແລະ ຕ່າງປະເທດ** | |
| ອອດສ໌ລາວ | 31,300 |
| ລາວບີເອັດສ໌ແອວ | 101,400 |
| ມີວເຊີດສ໌ | 1,103,500 |
| ອູມມາ | 30,000 |
| ພັນວິລະ | 255,000 |
| ສີລາວັນ | 5,367 |
| **ລວມ** | ***1,526,567*** |
| | |
| **ລວມ** | **35,517,935** |

ໝາຍເຫດ:

1. ນີ້ແມ່ນຕົວເລກເງິນທີ່ໂອນຈາກ ສປຊ ເພື່ອການພັດທະນາ ໃຫ້ກອງ 58 ຜ່ານ ຫ້ອງການ ຄຊກລ ສຳລັບງົບປະມານການປະຕິບັດງານ ແລະ ອຸປະກອນຕ່າງໆຂອງກອງ 58. ເງິນຈຳນວນດັ່ງກ່າວ ແມ່ນໄດ້ລວມຢູ່ໃນລາຍຈ່າຍຂອງ ຫ້ອງການ ຄຊກລ.
2. ຈຳນວນເງິນນີ້ ແມ່ນກວມເອົາເງິນທີ່ໂອນຈາກກະຊວງການຕ່າງປະເທດນໍອກແວ ໃຫ້ແກ່ ຄກລ ຜ່ານອົງການເອັນພີເອ ສຳລັບເງິນເດືອນຂອງພະນັກງານ ຄກລ, ງົບປະມານການປະຕິບັດງານ ແລະ ອຸປະກອນຕ່າງໆ. ເງິນຈຳນວນດັ່ງກ່າວນີ້ ແມ່ນໄດ້ລວມຢູ່ໃນລາຍຈ່າຍຂອງອົງການເອັນພີເອ.

# ຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ: ເສັ້ນທາງກ້າວສູ່ຄວາມປອດໄພ II ສຳລັບປີ 2011-2020

ຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາ ລບຕ ສະບັບທີ II ແມ່ນມີສ່ວນຮ່ວມປຶກສາຫາລືກັບບັນດາຄູ່ຮ່ວມງານຕ່າງໆທົ່ວຂະແໜງການແກ້ໄຂບັນຫາ ລບຕ. ຜ່ານການປຶກສາຫາລື ແລະ ເອກະພາບກັນ ວິໄສທັດຂອງຍຸດທະສາດ ສະບັບນີ້ໄວ້ ໄດ້ມີການກຳນົດຄາດໝາຍສູ້ຊົນດ້ານຕ່າງໆ ເພື່ອໃຫ້ບັນລຸ, ມີການກຳນົດເປົ້າໝາຍ, ຄາດໝາຍ ແລະ ກິດຈະກຳທີ່ຈະປະຕິບັດຕ່າງໆ ເພື່ອສະທ້ອນໃຫ້ເຫັນສະພາບການປະຕິບັດງານຕົວຈິງ, ຕອບສະໜອງຄວາມຕ້ອງການໃນລະດັບບ້ານ ແລະ ສົ່ງເສີມຄວາມພະຍາຍາມທີ່ດີຮ່ວມກັນໃນການສ້າງຄວາມເຂັ້ມແຂງທາງດ້ານຂີດຄວາມສາມາດ ແລະ ຄວາມເປັນເຈົ້າການແຫ່ງຊາດ.

ພາຍໃນເວລາ 10 ປີຂອງແຜນຍຸດທະສາດ ເປົ້າໝາຍຕົ້ນຕໍແມ່ນ ເພື່ອຫຼຸດຜ່ອນຜົນກະທົບຂອງ ລບຕ ທາງດ້ານມະນຸດສະທຳ ແລະ ເສດຖະກິດ-ສັງຄົມໃຫ້ໜ້ອຍລົງ ແນໃສ່ໃຫ້ສະຖາບັນການຈັດຕັ້ງແຫ່ງຊາດ ສາມາດບໍລິຫານຈັດການກັບຄວາມສ່ຽງຂອງ ລບຕ ທີ່ຍັງຫຼົງເຫຼືອຢູ່ດ້ວຍຕົນເອງເທື່ອລະກ້າວ.

ວິໄສທັດຂອງຍຸດທະສາດ ສະບັບທີ II ແມ່ນ:

"ເຮັດໃຫ້ ສປປ ລາວ ປັດສະຈາກໄພຂົ່ມຂູ່ຈາກ ລບຕ, ເຮັດໃຫ້ບຸກຄົນ ແລະ ຊຸມຊົນດຳລົງຊີວິດຢູ່ໃນສະພາບແວດລ້ອມທີ່ປອດໄພ ຕັ້ງໜ້າປະກອບສ່ວນເຂົ້າໃນການພັດທະນາ, ຮັບປະກັນໃຫ້ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ຮັບການຕອບສະໜອງ ແລະ ສາມາດດຳລົງຊີວິດຢູ່ໃນສັງຄົມໄດ້ເປັນຢ່າງດີ".

ເປົ້າໝາຍຍຸດທະສາດ ແມ່ນ: ຫຼຸດຜ່ອນໄພຂົ່ມຂູ່ຈາກ ລບຕ ຕໍ່ຊີວິດຂອງປະຊາຊົນ ແລະ ເສດຖະກິດ-ສັງຄົມ, ຊຶ່ງ ລບຕ ທີ່ຕົກຄ້າງ ແລະ ສິ່ງທ້າທາຍຕ່າງໆ ຈະຖືກແກ້ໄຂຢ່າງເໝາະສົມດ້ວຍຄວາມອາດສາມາດທີ່ຍືນຍົງ ແລະ ເປັນໜ້າທີ່ປົກກະຕິຂອງບັນດາສະຖາບັນການຈັດຕັ້ງຂອງລັດຖະບານ.

ເປົ້າໝາຍຍຸດທະສາດ ແມ່ນ:

- ຫຼຸດຜ່ອນຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ຈາກ 300 ຄົນ ໃຫ້ລົງຕ່ຳກວ່າ 75 ຄົນຕໍ່ປີ.
- ຮັບປະກັນການປິ່ນປົວທາງການແພດ ແລະ ການຟື້ນຟູສຸຂະພາບຂອງຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ໂດຍສອດຄ່ອງກັບສົນທິສັນຍາສາກົນ.
- ປົດປ່ອຍເນື້ອທີ່ດິນ ທີ່ເປັນບູລິມະສິດ ແລະ ເກັບກູ້ ລບຕ ຕາມມາດຕະຖານແຫ່ງຊາດ ແລະ ພັນທະສົນທິສັນຍາສາກົນ.
- ຮັບປະກັນປະສິດທິພາບການນຳພາ, ການປະສານງານ ແລະ ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ.
- ສ້າງຂີດຄວາມອາດສາມາດແຫ່ງຊາດທີ່ຍືນຍົງ ໂດຍຈັດຕັ້ງໃຫ້ເປັນໜ້າທີ່ປົກກະຕິຂອງສະຖາບັນການຈັດຕັ້ງຂອງລັດຖະບານ.
- ຮັບປະກັນການປະຕິບັດພັນທະໃນສົນທິສັນຍາສາກົນ.

| ອົງການປະຕິບັດງານ ເພື່ອມະນຸດສະທຳ - ລບຕ ທີ່ພົບເຫັນ ແລະ ຖືກທຳລາຍ ທີ່ຜ່ານຂະບວນການກວດກູ້ ລບຕ, 2011-2020 | | | | | | | |
|---|---|---|---|---|---|---|---|
| ປີ | ເນື້ອທີ່ ກວດກູ້ (ຮຕ) | ບົ່ມໃຫຍ່ | ລະເບີດລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດ ອື່ນໆ | ລວມ | ລະເບີດລູກ ຫວ່ານ ທີ່ພົບ ຕໍ່ ຮຕ |
| 2011 | 3,692 | 22 | 19,088 | 96 | 19,683 | 38,889 | 5.2 |
| 2012 | 3,823 | 60 | 26,011 | 18 | 17,318 | 43,407 | 6.8 |
| 2013 | 3,288 | 28 | 22,847 | 48 | 20,626 | 43,549 | 6.9 |
| 2014 | 3,662 | 36 | 26,566 | 78 | 17,697 | 44,377 | 7.3 |
| 2015 | 2,961 | 55 | 49,497 | 108 | 13,162 | 62,822 | 16.7 |
| 2016 | 3,315 | 43 | 61,144 | 1 | 15,503 | 76,691 | 18.4 |
| 2017 | 3,852 | 20 | 64,241 | 16 | 16,462 | 80,739 | 16.7 |
| 2018 | 3,670 | 35 | 45,441 | 5 | 11,740 | 57,221 | 12.4 |
| 2019 | 4,577 | 30 | 42,085 | 4 | 11,081 | 53,200 | 9.2 |
| 2020 | 4,302 | 23 | 38,862 | 4 | 10,355 | 49,244 | 9.03 |

| ຈຳນວນອຸປະຕິເຫດ ແລະ ຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ຢູ່ ສປປ ລາວ ແຕ່ປີ 2011-2020 | | | | | | | | | | |
|---|---|---|---|---|---|---|---|---|---|---|
| ປີ | ອຸປະຕິເຫດ | ບາດເຈັບ | | | | ເສຍຊີວິດ | | | | ລວມຜູ້ບາດເຈັບ ແລະ ເສຍຊີວິດ |
| | | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກ ຍິງ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກ ຍິງ | |
| 2011 | 64 | 32 | 9 | 34 | 4 | 6 | 0 | 14 | 0 | 99 |
| 2012 | 36 | 17 | 11 | 11 | 2 | 6 | 1 | 6 | 2 | 56 |
| 2013 | 18 | 9 | 2 | 12 | 5 | 5 | 0 | 7 | 1 | 41 |
| 2014 | 22 | 8 | 5 | 9 | 7 | 4 | 0 | 12 | 0 | 45 |
| 2015 | 27 | 15 | 1 | 16 | 1 | 6 | 1 | 2 | 0 | 42 |
| 2016 | 35 | 17 | 3 | 24 | 5 | 2 | 0 | 8 | 0 | 59 |
| 2017 | 19 | 12 | 8 | 11 | 6 | 3 | 0 | 0 | 1 | 41 |
| 2018 | 17 | 4 | 8 | 4 | 5 | 2 | 1 | 0 | 0 | 24 |
| 2019 | 20 | 5 | 2 | 4 | 5 | 8 | 0 | 1 | 0 | 25 |
| 2020 | 23 | 12 | 10 | 2 | 2 | 5 | 2 | 0 | 0 | 33 |

| ສາເຫດການເກີດອຸປະຕິເຫດຈາກ ລບຕ ແຕ່ປີ 2015 - 2020 | | | | | | |
|---|---|---|---|---|---|---|
| | 2015 | 2016 | 2017 | 2018 | 2019 | 2020 |
| ເຮັດກະສິກຳ | 4 | 6 | 2 | 2 | 3 | 2 |
| ດັງໄຟ (ແຕ່ງກິນ ແລະ ຈູດໄຮ່ເພື່ອຊັບຊ່າວພື້ນທີ່ເຮັດກະສິກຳ | 16 | 11 | 10 | 3 | 8 | 10 |
| ແກະມ້າງລະເບີດ | 5 | 3 | 1 | 2 | 7 | 1 |
| ຈັບບາຍໂຍນຫຼິ້ນລະເບີດ | 2 | 12 | 3 | 5 | 1 | 3 |
| ຕັດຫຍ້າ ແລະ ຕັດໄມ້ | 0 | 1 | 1 | 1 | 1 | 5 |
| ຖືກລົບກວນໂດຍບໍ່ໄດ້ຕັ້ງໃຈ | 0 | 2 | 2 | 4 | 0 | 2 |
| **ລວມ** | **27** | **35** | **19** | **17** | **20** | **23** |

| ເນື້ອທີ່ກວດກູ້ ລບຕ ແຍກເປັນແຂວງ | | | | | | |
|---|---|---|---|---|---|---|
| ແຂວງ | ເນື້ອທີ່ກວດກູ້ (ຕາແມັດ) | ປະເພດເນື້ອທີ່ກວດກູ້ ລບຕ | | | | ຜູ້ໄດ້ຮັບຜົນປະໂຫຍດ |
| | | ພື້ນທີ່ກະສິກຳ (ຕາແມັດ) | | ພື້ນທີ່ພັດທະນາ (ຕາແມັດ) | | |
| ອັດຕະປື | 62,174,420 | 42,693,532 | 69% | 19,480,888 | 31% | 737,047 |
| ບໍ່ແກ້ວ | 800,0600 | 0 | 0% | 800,000 | 100% | 584 |
| ບໍລິຄຳໄຊ | 30,577,965 | 6,592,760 | 22% | 23,985,205 | 78% | 135,837 |
| ຈຳປາສັກ | 57,009,955 | 39,998,366 | 70% | 17,011,589 | 30% | 613,780 |
| ຫົວພັນ | 38,424,689 | 33,762,243 | 88% | 4,662,446 | 12% | 810,527 |

| | | | | | | |
|---|---|---|---|---|---|---|
| ຄຳມ່ວນ | 85,415,622 | 70,115,921 | 82% | 15,299,701 | 18% | 528,107 |
| ຫຼວງນ້ຳທາ | 554,662 | 0 | 0% | 554,662 | 100% | 0 |
| ຫຼວງພະບາງ | 40,601,491 | 30,041,740 | 74% | 10,559,750 | 26% | 388,609 |
| ອຸດົມໄຊ | 8,660,108 | 720,964 | 8% | 7,939,144 | 92% | 4,963 |
| ຜົ້ງສາລີ | 0 | 0 | 0% | 0 | 0% | 2,117 |
| ສາລະວັນ | 64,982,449 | 54,741,527 | 84% | 10,240,922 | 16% | 736,108 |
| ສະຫວັນນະເຂດ | 111,856,612 | 92,677,055 | 83% | 19,179,557 | 17% | 1,462,371 |
| ວຽງຈັນ | 2,623,165 | 0 | 0% | 2,623,165 | 100% | 8,669 |
| ນະຄອນຫຼວງ ວຽງຈັນ | 1,383,931 | 0 | 0% | 1,383,931 | 100% | 4,144 |
| ໄຊສົມບູນ | 18,001,674 | 5,709,929 | 32% | 12,291,745 | 68% | 51,189 |
| ເຊກອງ | 44,670,553 | 32,003,673 | 72% | 12,666,880 | 28% | 176,207 |
| ຊຽງຂວາງ | 141,486,721 | 123,153,094 | 87% | 18,333,627 | 13% | 2,108,078 |
| **ລວມ** | **709,224,016** | **532,210,806** | **75%** | **177,013,210** | **25%** | **7,768,337** |

# ຂະແໜງການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ

## ສົນທິສັນຍາ ແລະ ມາດຕະຖານສາກົນ

**ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ:**

ຈຸດປະສົງ: ຫ້າມນຳໃຊ້ ແລະ ສະສົມລະເບີດລູກຫວ່ານ ທີ່ສ້າງຄວາມເຈັບປວດທໍລະມານໃຫ້ແກ່ປະຊາຊົນພົນລະເຮືອນອັນເປັນທີ່ຍອມຮັບບໍ່ໄດ້ ແລະ ຮັບປະກັນໃຫ້ມີຂໍ້ບັງຄັບຢ່າງພຽງພໍກ່ຽວກັບການດູແລປິ່ນປົວ ແລະ ຟື້ນຟູຜູ້ລອດຊີວິດຈາກລະເບີດລູກຫວ່ານ ແລະ ການເກັບກູ້ ລບຕ ຈາກບໍລິເວນທີ່ໄດ້ຮັບຜົນກະທົບ.

ພັນທະຕົ້ນຕໍຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ສຳລັບແຕ່ລະລັດພາຄີ ແມ່ນ:

- ເກັບກູ້ລະເບີດອອກຈາກບໍລິເວນທີ່ຮູ້ວ່າຖືກຜົນກະທົບໃຫ້ສຳເລັດ ພາຍໃນເວລາ 10 ປີ ແລະ ສາມາດຂໍຕໍ່ເວລາໄດ້ອີກຕໍ່ໄປ ເທື່ອລະ 5 ປີ.
- ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອຮັບປະກັນຄວາມຮັບຮູ້ຂອງພົນລະເຮືອນທີ່ດຳລົງຊີວິດຢູ່ໃນພື້ນທີ່ໄດ້ຮັບຜົນກະທົບຈາກລະເບີດລູກຫວ່ານ.
- ແຕ່ງຕັ້ງຈຸດປະສານງານຂອງລັດຖະບານ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.
- ເກັບກຳຂໍ້ມູນຕົວຈິງທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານ ແລະ ສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ຖືກເຄາະຮ້າຍ ໂດຍປະກອບມີ ການປິ່ນປົວການແພດ, ການຟື້ນຟູໜ້າທີ່ການ ແລະ ສຸຂະພາບຈິດ ພ້ອມທັງ ສະໜອງການສ້າງເສດຖະກິດ ແລະ ການມີສ່ວນຮ່ວມໃນສັງຄົມ.

ພັນທະດັ່ງກ່າວຂ້າງເທິງ ແມ່ນເປັນສິ່ງທ້າທາຍຕົ້ນຕໍ ທີ່ລັດຖະບານ ສປປ ລາວ ຈະຕ້ອງໄດ້ເຮັດວຽກກັບຄູ່ຮ່ວມພັດທະນາ ເພື່ອບັນລຸພັນທະຕ່າງໆ.

**ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ:**

ຈຸດປະສົງ: ເພື່ອສົ່ງເສີມ, ປົກປ້ອງ ແລະ ຮັບປະກັນຄວາມເທົ່າທຽມທາງດ້ານສິດທະມະນຸດ, ສິດເສລີພາບຂັ້ນພື້ນຖານ ແລະ ເຄົາລົບກຽດສັກສີຂອງຜູ້ເສຍອົງຄະທັງໝົດ.

ສປປ ລາວ ໄດ້ລົງນາມໃນສົນທິສັນຍາດັ່ງກ່າວ ໃນວັນທີ 15 ມັງກອນ 2008 ແລະ ໃຫ້ສັດຕະຍາບັນ ໃນວັນທີ 25 ກັນຍາ 2009. ສົນທິສັນຍາສະບັບນີ້ ມີຄວາມສຳຄັນຕໍ່ການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ. ສປປ ລາວ ຕ້ອງໄດ້ມີການຮ່າງນິຕິກຳພາຍໃນຂອງຕົນເອງຂຶ້ນ ເພື່ອລວມເອົາບັນດາພັນທະຕ່າງໆຂອງສົນທິສັນດັ່ງກ່າວ ເຂົ້າໃນລະບົບຕຸລາການຂັ້ນຕ່າງໆຂອງທ້ອງຖິ່ນ. ຂະ ບວນການສ້າງນິຕິກຳແມ່ນສຳເລັດແລ້ວ ໂດຍມີດຳລັດຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ສ້າງຕັ້ງຂຶ້ນໃນເດືອນກັນຍາ 2009. ດຳລັດດັ່ງກ່າວ ແມ່ນໄດ້ປ່ຽນແທນເອກະສານສະບັບປີ 1995 ໂດຍໄດ້ມີການກຳນົດໜ້າທີ່ເພີ່ມຕື່ມໃຫ້ແກ່ຄະນະກຳມະການທີ່ມີຢູ່ແລ້ວ ພ້ອມທັງ ໄດ້ມີການກຳນົດຈຸດປະສານງານຂອງລັດຖະບານ ເພື່ອປະສານງານໃນການເຊື່ອມສານວຽກງານດ້ານຕ່າງໆ ແລະ ຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍຄົນພິການ. ນອກຈາກນັ້ນ, ຄະນະກຳມະການດັ່ງກ່າວຈະໄດ້ນຳພາໃນການສ້າງເຄື່ອງມືທາງດ້ານກົດໝາຍຂຶ້ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດຕາມພັນທະຂອງສົນທິສັນຍາໄດ້ຢ່າງເຕັມສ່ວນ. ສິ່ງສຳຄັນ, ຜູ້ສະໜອງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ໃນ ສປປ ລາວ ຈະສາມາດເລີ່ມຕົ້ນໃນການເຊື່ອມສານວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍເຂົ້າໃນຍຸດສາດຂອງເຂົາເຈົ້າ ໂດຍສອດຄ່ອງຕາມຫຼັກການຂອງສົນທິສັນຍາ ເພື່ອປະກອບສ່ວນໃຫ້ລັດຖະບານ ສປປ ລາວ ປະຕິບັດພັນທະຂອງສົນທິສັນຍາໄດ້ ເຊັ່ນ:

- ມີນິຕິກຳ ແລະ ນະໂຍບາຍໃນການຈັດຕັ້ງປະຕິບັດສົນທິສັນຍາ ແລະ ຕ້ອງມີຂະບວນການຕ່າງໆໃນການຕັດສິນບັນຫາທີ່ກ່ຽວຂ້ອງກັບຄົນພິການ. ລັດພາຄີຈະຕ້ອງປຶກມີການປຶກສາຫາລືຢ່າງໃກ້ຊິດ ແລະ ມີສ່ວນຮ່ວມຢ່າງຈິງຈັງກັບຄົນພິການ ລວມທັງ ເດັກພິການ ໂດຍຜ່ານອົງການຕົວແທນຂອງເຂົາເຈົ້າ.
- ເພື່ອເປັນການເອື້ອອຳນວຍໃຫ້ແກ່ການປະຕິບັດສິດທິຂອງຄົນພິການ ແລະ ຖ້າຍັງມີສິ່ງໃດທີ່ເຫັນວ່າ ຍັງບໍ່ທັນໄດ້ມີການລະບຸໄວ້ໃນສົນທິສັນຍາສະບັບນີ້, ກໍ່ອາດຈະບັນຈຸເຂົ້າຢູ່ໃນກົດໝາຍຂອງລັດພາຄີ ຫຼື ກົດໝາຍສາກົນທີ່ມີການບັງຄັບໃຊ້ ສຳລັບລັດພາຄີນັ້ນໆໄດ້.
- ຈະບໍ່ມີການຈຳກັດສິດທິມະນຸດ ຫຼື ເສລີພາບຂັ້ນພື້ນຖານໃດໆຂອງຄົນພິການໃຫ້ໜ້ອຍລົງ, ຊຶ່ງແຕ່ລະລັດພາຄີຂອງສົນທິສັນຍາສະບັບນີ້ ຕ້ອງປະຕິລັດສອດຄ່ອງຕາມກົດໝາຍ, ສົນທິສັນຍາ, ລະບຽບການ ຫຼື ຮີດຄອງປະເພນີ ໂດຍຈະບໍ່ອ້າງເຫດຜົນວ່າ ສົນທິສັນຍາສະບັບນີ້ ບໍ່ຮັບຮູ້ສິດຂອງຄົນພິການ ຫຼື ເສລີພາບ ຫຼື ຮັບຮູ້ເຂົາເຈົ້າໜ້ອຍລົງ.
- ຂໍ້ກຳນົດຕ່າງໆຂອງສົນທິສັນຍາສະບັບນີ້ ຈະຖືກຮັບຮູ້ ແລະ ເຜີຍແຜ່ໃຫ້ທົ່ວເຖິງທຸກພາກສ່ວນຂອງລັດລັດຖະບານ ໂດຍບໍ່ມີຂໍ້ຈຳ ກັດ ຫຼື ຂໍ້ຍົກເວັ້ນໃດໆ.

**ສົນທິສັນຍາ ວ່າດ້ວຍອາວຸດທົ່ວໄປ:**

ສົນທິສັນຍາ ວ່າດ້ວຍອາວຸດທົ່ວໄປ ໄດ້ຖືກສ້າງຂຶ້ນໃນວັນທີ 10 ຕຸລາ 1980, ທີ່ນະຄອນເຈນີວາ, ສະວິດເຊີແລນ ແລະ ມີຜົນບັງຄັບໃຊ້ໃນເດືອນທັນວາ 1983. ສົນທິສັນຍາແມ່ນໄດ້ກຳນົດການຫ້າມ ຫຼື ນຳໃຊ້ອາວຸດທົ່ວໄປບາງຊະນິດ ທີ່ພິຈາລະນາວ່າເປັນອັນຕະລາຍ ແລະ ສິ່ງຜົນກະທົບຫຼາຍເກີນໄປ.

ຈຸດປະສົງຂອງສົນທິສັນຍາ ແມ່ນ ຫ້າມ ຫຼື ຈຳກັດການນຳໃຊ້ອາວຸດສະເພາະຊະນິດໃດໜຶ່ງ ທີ່ຖືວ່າ ເຮັດໃຫ້ເກີດຄວາມທຸກທຸກທໍລະມານ ຫຼື ບໍ່ສົມເຫດສົມຜົນ ຕໍ່ກັບນັກຮົບ ຫຼື ຈະສົ່ງຜົນກະທົບຕໍ່ພົນລະເຮືອນ.

**ມາດຕະຖານສາກົນ ໃນການແກ້ໄຂບັນຫາລະເບີດຝັງດິນ (ໄອມາດສ໌):**

ມາດຕະຖານສາກົນ ໃນການແກ້ໄຂບັນຫາລະເບີດຝັງດິນ ແມ່ນມາດຕະຖານ ທີ່ມີຜົນບັງຄັບໃຊ້ສຳລັບການປະຕິບັດງານແກ້ໄຂບັນຫາລະເບີດຝັງດິນ ຂອງສະຫະປະຊາຊາດ.

ມາດຕະຖານດັ່ງກ່າວ ໃນເບື້ອງຕົ້ນໄດ້ຮັບການຮັບຮອງໂດຍກຸ່ມປະສານງານລະຫວ່າງອົງການສະຫະປະຊາຊາດ ກ່ຽວກັບການປະຕິບັດງານແກ້ໄຂບັນຫາລະເບີດຝັງດິນໃນປີ

2001, ຊຶ່ງມາຮອດດຽວນີ້ ມາດຕະຖານດັ່ງກ່າວ ຍັງຄົງຮັກສາໄວ້ ເພື່ອເປັນພື້ນຖານນຳໃຊ້ເຂົ້າການປະຕິບັດງານແກ້ໄຂບັນຫາລະເບີດຝັງດິນທົ່ວໂລກ ມາແລ້ວຫຼາຍກວ່າ 17 ປີ.

ເພື່ອເປັນການກຳນົດມາດຕະຖານສຳລັບການປະຕິບັດງານພາກສະໜາມທົ່ວໂລກ, ຢູ່ໃນກອບແຜນວຽກຂອງມາດຕະຖານກົນໃນການແກ້ໄຂບັນຫາລະເບີດຝັງດິນໄດ້ມີການສືບຕໍ່ພັດທະນາຢ່າງຈິງຈັງ ກ່ຽວກັບມາດຕະຖານການຮັກສາຄວາມປອດໄພ, ຄຸນນະພາບ ແລະ ປະສິດທິພາບຂອງການດຳເນີນງານ ເພື່ອຮັບປະກັນຄວາມໝັ້ນໃຈໃນເວລາປະຕິບັດງານເກັບກູ້ລະເບີດຝັງດິນ.

ກອບແຜນວຽກຂອງມາດຕະຖານສາກົນໃນການແກ້ໄຂບັນຫາລະເບີດຝັງດິນ ແມ່ນໄດ້ສ້າງຂຶ້ນບົນພື້ນຖານ ເພື່ອເຮັດໃຫ້ສົນທິສັນຍາວ່າດ້ວຍລະເບີດຝັງດິຕ້ານບຸກຄົນ ແລະ ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ສາມາດຈັດຕັ້ງປະຕິບັດໄດ້. ການນຳໃຊ້ແມ່ນໂດຍບັນດາປະເທດທີ່ໄດ້ຮັບຜົນກະທົບຈາກລະເບີດຝັງດິນ ແລະ ລບຕ ເພື່ອເປັນພື້ນຖານນຳໃຊ້ເຂົ້າໃນການພັດທະນາມາດຕະຖານແຫ່ງຊາດ ໃນການແກ້ໄຂບັນຫາລະເບີດຂອງປະເທດຕົນເອງ ແລະ ຂອງປະເທດຜູ້ໃຫ້ທຶນ ເພື່ອຮັບປະກັນວ່າ ທຶນການຊ່ວຍເຫຼືອຂອງປະເທດຜູ້ໃຫ້ທຶນ ແມ່ນຖືກນຳໃຊ້ເຂົ້າໃນວຽກງານແກ້ໄຂບັນຫາລະເບີດຢ່າງມີປະສິດທິຜົນ.

# ກອບແຜນວຽກທາງດ້ານນິຕິກຳ, ນະໂຍບາຍ ແລະ ການຈັດຕັ້ງ

**ດຳລັດແຫ່ງຊາດ:**

ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 67/ນຍ, ລົງວັນທີ 12 ກຸມພາ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຊກລ. ໃນມາດຕາ 2 ຂອງດຳລັດສະບັບດັ່ງກ່າວ ໄດ້ກຳນົດພາລະບົດບາດຂອງ ຄຊກລ ເປັນເສນາທິການໃນການຊ່ວຍວຽກໃຫ້ແກ່ລັດຖະບານ ສປປ ລາວ ໃນການຄົ້ນຄ້ວາສ້າງ, ຊີ້ນຳ ແລະ ປະສານງານກັບບັນດາກະຊວງຕ່າງໆ, ອົງການປົກຄອງທ້ອງຖິ່ນ ແລະ ສາກົນ ໃນການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ.

ໜ້າທີ່ຕົ້ນຕໍຂອງ ຄຊກລ ແມ່ນໄດ້ກຳນົດໃນໄຕມາດ 4 ຂອງດຳລັດສະບັບນີ້ ຄື: ຊ່ວຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຄົ້ນຄ້ວາສ້າງ, ສັງລວມ ແລະ ເຜີຍແຜ່ຄຳແນະນຳ, ຄຳສັ່ງ ແລະ ຍຸດທະສາດຕ່າງໆກ່ຽວ ກັບການແກ້ໄຂບັນຫາ ລບຕ, ຊີ້ນຳໃນການສ້າງຕັ້ງ, ເຜີຍແຜ່ຂໍ້ມູນ ລບຕ, ປະສານງານກັບບັນດາກະຊວງກ່ຽວຂ້ອງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນອື່ນໆ ເພື່ອລະດົມທຶນ ແລະ ເຕັກນິກວິຊາການ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆໃນການແກ້ໄຂບັນຫາ ລບຕ.



# ເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ: ເອັດສ໌ດີຈີ 18

**"ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ"**

## ເອັດສ໌ດີຈີ 18 ປະກອບມີ 3 ຄາດໝາຍ ຄື:

- ☐ ພາຍໃນປີ 2030, ຮັບປະກັນໃຫ້ຈຳນວນຜູ້ຖືກບາດເຈັບ ແລະ ເສຍຊີວິດ ຈາກ ລບຕ ໃນແຕ່ລະປີ ຫຼຸດລົງເທື່ອລະກ້າວ ຈົນຮອດຈຸດຕ່ຳສຸດ.
- ☐ ພາຍໃນປີ 2030, ໃຫ້ສຳເລັດການກວດກູ້ ລບຕ ຢູ່ບັນດາພື້ນທີ່ບູລິມະສິດພັດທະນາ ແລະ ບັນດາບ້ານທີ່ທຸກຍາກ.
- ☐ ພາຍໃນປີ 2030, ຮັບປະກັນໃຫ້ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການຊ່ວຍເຫຼືອທາງດ້ານການປິ່ນປົວ, ຟື້ນຟູສຸຂະພາບ ແລະ ປະກອບອາຊີບ.

| ເອັດດີຈີ 18: ຊີວິດປອດໄພຈາກລະເບີດບໍ່ທັນແຕກ | | | | |
|---|---|---|---|---|
| **ຄາດໝາຍ** | **ຕົວຊີ້ວັດ** | **ປີ** | **ຄວາມຄືບໜ້າ** | **ແຫຼ່ງຂໍ້ມູນ** |
| 18.1. ພາຍໃນປີ 2030, ຈຳນວນຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລບຕ ໃນແຕ່ລະປີ ຫຼຸດລົງເທື່ອລະກ້າວ ຈົນຮອດຈຸດຕ່ຳສຸດ. | 18.1.1. ຈຳນວນຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລບຕ ມີການລາຍງານ (ແຍກຕາມອາຍຸ ແລະ ເພດ) | 2018[2] | ລວມ: 24<br>ເພດຊາຍ 15 (ເດັກຊາຍ 9)<br>ເພດຍິງ 9 (ເດັກຍິງ 5) | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ / ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ |
| | | 2019 | ລວມ: 25<br>ເພດຊາຍ 18 (ເດັກຊາຍ 5)<br>ເພດຍິງ 7 (ເດັກຍິງ 5) | |
| | 18.1.2. ຈຳນວນເປີເຊັນຂອງປະຊາກອນຢູ່ໃນ | 2018 | 21.2 | |
| | | 2019 | 18.2 | |
| 18.2. ພາຍໃນປີ 2030, ໃຫ້ສຳເລັດການກວດກູ້ ລບຕ ຢູ່ບັນດາພື້ນທີ່ບູລິມະສິດພັດທະນາ ແລະ ບັນດາບ້ານທີ່ທຸກຍາກ. | 18.2.1. ຈຳນວນເປີເຊັນທີ່ຍັງເຫຼືອຂອງພື້ນທີ່ ລບຕ ຕົກຄ້າງ ທີ່ຍັງຕ້ອງໄດ້ກວດກູ້ ຖືກເກັບກຳ ແລະ ລາຍງານ (ແຍກຕາມບ້ານທຸກຍາກ ທີ່ເປັນບູລິມະສິດສູງ) | 2018 | 99.33 | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ / ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ |
| | | 2019 | 99.25 | |
| | 18.2.2. ຈຳນວນບ້ານທຸກຍາກທີ່ຍັງເຫຼືອ ທີ່ກຳນົດ | 2018 | 1,983 | |
| | | 2019 | 1,526 | |
| 18.3. ພາຍໃນປີ 2030, ຮັບປະກັນໃຫ້ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການຊ່ວຍເຫຼືອທາງດ້ານການປິ່ນປົວ, ຟື້ນຟູສຸຂະພາບ ແລະ ປະກອບອາຊີບ. | 18.3.1. ອັດຕາສ່ວນຂອງຜູ້ລອດຊີວິດຈາກ ລບຕ ທີ່ຍັງຢູ່ໃນເກນອາຍຸທີ່ສາມາດທຳມາຫາກິນໄດ້ ແຕ່ຍັງບໍ່ທັນມີລາຍຮັບຂັ້ນພື້ນຖານພຽງພໍ ສາມາດເຂົ້າເຖິງລາຍຮັບຂັ້ນພື້ນຖານໄດ້ | 2018 | 94.51 | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ / ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ |
| | | 2019 | 94.52 | |
| | 18.3.2. ຈຳນວນເປີເຊັນຂອງຜູ້ລອດຊີວິດຈາກ ລບຕ ຖືກເຊື່ອມສານເຂົ້າໃນລະບົບການປິ່ນປົວສຸກຂະພາບ, ການສຶກສາ ແລະ ການຈ້າງງານ | 2018 | 19.61 | |
| | | 2019 | 20.61 | |




# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX, 2021 - 2025

| | |
|---|---|
| ຄາດໝາຍ ແລະ ຕົວຊີ້ວັດ | ■ ຫຼຸດຜ່ອນຈຳນວນຜູ້ໄດ້ຮັບເຄາະຮ້າຍຈາກ ລບຕ ໃຫ້ຕ່ຳກວ່າ 40 ຄົນຕໍ່ປີ ໂດຍການໂຄສະນາ ທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ຕາມກຸ່ມເປົ້າໝາຍໃຫ້ໄດ້ 3,000 ເທື່ອບ້ານ ແລະ ຂະຫຍາຍການສິດສອນ ຫຼັກສູດ ລບຕ ໃນສະຖາບັນການສຶກສາຕ່າງໆ ໃຫ້ໄດ້ 500 ແຫ່ງ.<br>■ ຈັດຕັ້ງການສຳຫຼວດບໍ່ແມ່ນແບບວິຊາການ ເພື່ອຊອກຫາຈຸດຫຼັກຖານ ລບຕ ໃຫ້ໄດ້ 2,776 ບ້ານ ແລະ ສຳຫຼວດແບບວິຊາການ ເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ໃຫ້ໄດ້ 250,000 ເຮັກຕາ, ສະເລ່ຍ 50,000 ເຮັກຕາ/ປີ.<br>■ ກວດກູ້ ລບຕ ອອກຈາກເນື້ອທີ່ທຳການຜະລິດ, ເຂດຊຸມຊົນ ແລະ ເຂດຈຸດສຸມທຸລະກິດ ໃຫ້ໄດ້ 50,000 ເຮັກຕາ, ສະເລ່ຍ 10,000 ເຮັກຕາ/ປີ.<br>■ ພັດທະນາຊີວິດການເປັນຢູ່ຂອງຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ໄດ້ 5,750 ຄົນ ໃນນີ້, ປິ່ນປົວດ້ານການແພດ 250 ຄົນ, ຟື້ນຟູໜ້າທີ່ການ 750 ຄົນ, ຝຶກອົບຮົມ ແລະ ປະກອບອາຊີບ 2,000 ຄົນ ແລະ ໂຄສະນາສິດຂອງຄົນພິການ 2,500 ຄົນ. |
| ວຽກງານບູລິມະສິດ | ■ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.<br>■ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.<br>■ ການກວດກູ້ ລບຕ. |

# ພາບລວມຂອງຄູ່ຮ່ວມງານໃນຂະແໜງການແກ້ໄຂບັນຫາ ລບຕ

## ພາກສ່ວນລັດຖະບານລາວ:

### ກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ ແມ່ນມີກົມອົງການຈັດຕັ້ງສາກົນ ເຮັດໜ້າທີ່ເປັນຈຸດປະສານງານ ໃນນາມຕາງໜ້າໃຫ້ລັດຖະບານ ສປປ ລາວ ເພື່ອລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ໃນກອງປະຊຸມປະຈຳປີ ຂອງລັດພາຄີສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.

### ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ)

- ສະໜອງທິດທາງນະໂຍບາຍ, ຍຸດທະສາດ ແລະ ຊີ້ນຳວຽກງານແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ.
- ມີຫ້ອງການ ຄຊກລ ເປັນຫ້ອງການເສນາທິການ ແລະ ຄກລ ເປັນອົງການປະຕິບັດງານຂຶ້ນກັບການຄຸ້ມຄອງຂອງກະຊວງ ຮສສ.
- ມີລັດຖະມົນຕີກະຊວງ ຮສສ ເປັນປະທານ ຄຊກລ ແລະ ທັງເປັນຄະນະຊີ້ນຳໂຄງການຮ່ວມມືແກ້ໄຂບັນຫາ ລບຕ ຮ່ວມກັບອົງການ ສປຊ ເພື່ອການພັດທະນາ.

### ກະຊວງສາທາລະນະສຸກ

ກະຊວງສາທາລະນະສຸກ ມີສູນການແພດຟື້ນຟູໜ້າທີ່ການ ໂດຍເຮັດວຽກຮ່ວມກັບສູນໂຄບ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເພື່ອຊ່ວຍເຫຼືອຄົນພິການ ທາງດ້ານ ການຟື້ນຟູໜ້າທີ່ການ, ສາມາດເຂົ້າເຖິງການບໍລິການຟື້ນຟູດ້ານຕ່າງໆ ຢ່າງມີຄຸນນະພາບ.

### ກະຊວງປ້ອງກັນປະເທດ

- ມີໜ້າທີ່ຮັບຜິດຊອບຊີ້ນຳການປະຕິບັດງານຂອງກອງກວດກູ້ລະເບີດມະນຸດສະທຳກອງທັບ.
- ສະໜັບສະໜູນທາງດ້ານເງິນເດືອນໃຫ້ພະນັກງານຂອງກອງກວດກູ້ລະເບີດມະນຸດສະທຳກອງທັບ ແນ່ໃສ່ຄວາມຍືນຍົງໄລຍະຍາວໃນການແກ້ໄຂບັນຫາ ລບຕ.

### ສູນກາງສະຫະພັນແມ່ຍິງລາວ

- ເຮັດວຽກຮ່ວມກັບອົງການ ສປຊ ເພື່ອແມ່ຍິງ ໃນການຜະລິດປຶ້ມຄູ່ມືການຝຶກອົບຮົມກ່ຽວກັບການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ ໂດຍການສະໜັບສະໜູນຈາກລັດຖະບານການາ ດາ.
- ສືບຕໍ່ສະໜັບສະໜູນວຽກງານບົດບາດຍິງ-ຊາຍ.

### ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ຮ່ວມມືກັບບັນດາອາສາສະໝັກຂັ້ນບ້ານຢູ່ແຂວງບໍລິຄຳໄຊ ແລະ ສາລະວັນ ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ບັນດາຊຸມຊົນຕ່າງໆທີ່ມີ ລບຕ ຕົກຄ້າງ ໂດຍໄດ້ຮັບທຶນສະໜັບສະໜູນຈາກລັດຖະບານຕຸລາກີ ຜ່ານ ອົງການ ສປຊ ເພື່ອການພັດທະນາ ໃນປີ 2020.

## ອົງການຮ່ວມມືຫຼາຍຝ່າຍ:

### ອົງການ ສປຊ ເພື່ອການພັດທະນາ (ສປຊ)

- ຄຸ້ມຄອງທຶນຂອງບັນດາປະເທດຜູ້ໃຫ້ທຶນ ໃນການສ້າງຂີດຄວາມສາມາດ ແລະ ສະໜອງການສະໜັບສະໜູນໃຫ້ແກ່ ຄຊກລ ແລະ ຄກລ ຜ່ານອົງການ ສປຊ ເພື່ອການພັດທະນາ ສຳລັບໂຄງການຮ່ວມມືແກ້ໄຂບັນຫາ ລບຕ ສຳລັບປີ 2017-2021.
- ສະໜອງຄຳປຶກສາທາງດ້ານວິຊາການ ແລະ ບຸກຄະລາກອນຊ່ຽວຊານຕ່າງປະເທດ ເພື່ອສະໜັບສະໜູນ ຄຊກລ ແລະ ຄກລ.
- ເປັນປະທານຮ່ວມຂະແໜງການແກ້ໄຂບັນຫາ ລບຕ.

### ສູນແກ້ໄຂບັນຫາລະເບີດຝັງດິນເພື່ອມະນຸດສະທຳຂອງເຈນີວາ (ຈີໄອຊີເອັດຈີດີ)

- ເປັນອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ ຕັ້ງຢູ່ປະເທດສະວິດເຊີແລນ ເຮັດໜ້າທີ່ເປັນກອງເລຂາສາກົນໃຫ້ແກ່ອົງການສະຫະປະຊາຊາດ ໂດຍການອະນຸມັດຮັບຮອງຈາກອົງການສາກົນກ່ຽວກັບການແກ້ໄຂບັນຫາລະເບີດຝັງດິນ.
- ຄຊກລ ແມ່ນໄດ້ນຳໃຊ້ລະບົບຖານຂໍ້ມູນ ລບຕ ທີ່ຖືກພັດທະນາຂຶ້ນຄັ້ງທຳອິດໃນປີ 1999 ໂດຍການສະໜັບສະໜູນຈາກອົງການຈີໄອຊີເອັດຈີດີ.

## ອົງການປະຕິບັດງານຂອງລາວ:

### ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)

- ສ້າງຕັ້ງຂຶ້ນໃນປີ 1996 ໂດຍການສະໜັບສະໜູນຈາກອົງການແມັກ, ອົງການ ສປຊ ເພື່ອການພັດທະນາ ແລະ ຄູ່ຮ່ວມງານອື່ນໆ.
- ປະຕິບັດໜ້າທີ່ໃນການຫຼຸດຜ່ອນຈຳນວນຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ແລະ ອຸປະຕິເຫດຈາກ ລບຕ; ກວດກູ້ ລບຕ ອອກຈາກພື້ນທີ່ ເພື່ອນຳໃຊ້ເຂົ້າໃນການຜະລິດສະບຽງອາຫານ ແລະ ເປົ້າໝາຍການພັດທະນາເສດຖະກິດ-ສັງຄົມຕ່າງໆ.
- ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການກວດກູ້ ແລະ ທຳລາຍ ລບຕ.

### ກອງກວດກູ້ລະເບີດມະນຸດສະທຳກອງທັບ (ກອງ 58)

- ສ້າງຕັ້ງຂຶ້ນໃນປີ 2013 ໂດຍປະຕິບັດໜ້າທີ່ໃນການສຳຫຼວດ ແລະ ກວດກູ້ ລບຕ.
- ປະຕິບັດການສຳຫຼວດ ແລະ ກວດກູ້ ລບຕ ໂດຍທຶນສະໜັບສະໜູນຈາກອົງການກອຍກາ ຜ່ານ ອົງການ ສປຊ ເພື່ອການພັດທະນາ.
- ໄດ້ຮັບເງິນເດືອນຈາກກະຊວງປ້ອງກັນປະເທດ.

## ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ - ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ:

### ອົງການຮາໂລຫຼາດ (ຮາໂລ)

- ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການກວດກູ້, ການທຳລາຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

### ອົງການເພື່ອມະນຸດ ແລະ ການມີສ່ວນຮ່ວມ (ເອັດຈ໌ໄອ)

- ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການກວດກູ້, ການທຳລາຍ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

- ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການກວດກູ້, ການທຳລາຍ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການປະເມີນພາຍຫຼັງການກວດກູ້ ລບຕ ສຳລັບພື້ນທີ່ໂຄງການພັດທະນາເສດຖະກິດ-ສັງຄົມ.
- ຮ່ວມມືກັບກຸ່ມຄົ້ນຄ້ວາທາງດ້ານເທັກໂນໂລຊີເພື່ອການປ່ຽນແປງ ກ່ຽວກັບການປັບປຸງຄຸນນະພາບຊີວິດ; ຮ່ວມມືກັບສະມາຄົມຄົນພິການລາວ ໃນການໂຄສະນາສົ່ງເສີມສິດທິຂອງຄົນພິການ ແລະ ການຝຶກອົບຮົມສ້າງຄວາມເຂັ້ມແຂງ ແລະ ຮ່ວມມືກັບອົງການອອກຟາມ ກ່ຽວກັບຄວາມເທົ່າທຽມບົດບາດຍິງ-ຊາຍ.

### ອົງການບໍລິການແກ້ໄຂບັນຫາລະເບີດຝັງດິນຂອງຍີ່ປຸ່ນ (ເຈມັດ)

- ສົ່ງເສີມການກວດກູ້ລບຕ ໂດຍນຳໃຊ້ກົນຈັກທຳລາຍລະເບີດລູກຫວ່ານ, ຊຶ່ງສາມາດຕັດພຸ່ມໄມ້ທີ່ຢູ່ບໍລິເວນສະໜາມ ແລະ ທຳລາຍລະເບີດລູກຫວ່ານດ້ວຍກົນຈັກ.

### ອົງການໃຫ້ຄຳປຶກສາກ່ຽວກັບການແກ້ໄຂລະເບີດຝັງດິນ (ແມັກ)

- ເປັນອົງການທຳອິດທີ່ເຂົ້າມາປະຕິບັດການແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ ຕັ້ງແຕ່ປີ 1994 ແລະ ໄດ້ມີສ່ວນຮ່ວມສະໜັບສະໜູນໃນການສ້າງຕັ້ງ ຄກລ ນຳອີກ.
- ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການກວດກູ້, ການທຳລາຍ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ

### ອົງການຊ່ວຍເຫຼືອລ້າຂອງປະຊາຊົນນອກແວ (ເອັນພີເອ)

- ປະຕິບັດການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການກວດກູ້, ການທຳລາຍ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- ສະໜອງການປະເມີນຂີດຄວາມຕ້ອງການທາງດ້ານຂີດຄວາມສາມາດ ແລະ ສະໜັບສະໜູນ ຄຊກລ; ສະໜັບສະໜູນໜ່ວຍງານຄຸ້ມຄອງຂໍ້ມູນ ລບຕ ຂອງຫ້ອງການ ຄຊກລ ຜ່ານລະບົບການຊ່ວຍເຫຼືອແກ້ໄຂບັນຫາຖານຂໍ້ມູນ ລບຕ ແບບທາງໄກ.
- ບໍລິຫານຄຸ້ມຄອງທຶນການຊ່ວຍເຫຼືອແບບສອງຝ່າຍຂອງກະຊວງການຕ່າງປະເທດນອກແວ ໃນການສະໜັບສະໜູນ ຄກລ ແຂວງຫຼວງພະບາງ ໃນການແກ້ໄຂບັນຫາ ລບຕ.

### ອົງການສຶກສາໂລກ (ດັບເບີ້ນຢູອີ)

- ຄຸ້ມຄອງ 2 ແຫຼ່ງທຶນຫຼັກຂອງລັດຖະບານສະຫະລັດອາເມລິກາ ສຳລັບໂຄງການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ.
- ຄຸ້ມຄອງກອງທຶນຊ່ວຍເຫຼືອປິ່ນປົວຜູ້ລອດຊີວິດຈາກ ລບຕ ປາງສິງຄາມ ແລະ ຄອບຄົວຂອງເຂົາເຈົ້າ.
- ປະຕິບັດໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນການເຊື່ອມສານວຽກງານ ລບຕ ເຂົ້າໃນຫຼັກສູດການຮຽນ-ການສອນຢູ່ບັນດາໂຮງຮຽນ ແລະ ຈັດການຝຶກອົບຮົມໃຫ້ຄູອາຈານ ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

## ບັນດາບໍລິສັດກວດກູ້ລະເບີດ:

- ບໍລິສັດ ອອດສ໌ລາວ
- ບໍລິສັດ ອາສາ
- ບໍລິສັດ ລາວບີເອັດສ໌ແອວ
- ບໍລິສັດ ເອັນແອວເອັນ
- ບໍລິສັດ ແອວຊີວາຍ
- ບໍລິສັດ ແອວແອນບີ
- ບໍລິສັດ ພີເອັດສ໌ດີ
- ບໍລິສັດ ອູມມາ
- ບໍລິສັດ ເອັດສ໌ບີເອັດຈ໌
- ບໍລິສັດ ແອວເອຢູເອັນຊີ
- ບໍລິສັດ ພີວີແອວ
- ບໍລິສັດ ເອັກທີດີ
- ບໍລິສັດ ເອັດສ໌ຈີ
- ບໍລິສັດ ເງືດ
- ບໍລິສັດ ຈະເລີນສຸກ

- ■ ບໍລິສັດ ເອັດສ໌ດີເຄ
- ■ ບໍລິສັດ ອິນຊີ
- ■ ບໍລິສັດ ສີລາວັນ
- ■ ບໍລິສັດ ພີເອັດວີ
- ■ ບໍລິສັດ ວູມາ
- ■ ບໍລິສັດ ໂຊກຈະເລີນ
- ■ ບໍລິສັດ ເອັດສ໌ແອວ
- ■ ບໍລິສັດ ສີສານຈະເລີນ
- ■ ບໍລິສັດ ແສງເພັດ
- ■ ບໍລິສັດ ນິວເຊີດສ໌
- ■ ບໍລິສັດ ເອັມເອັມຈີ

## ພາກສ່ວນອື່ນໆ:

### ບໍລິສັດເທັດທຼາເທັກ

- ■ ຄຸ້ມຄອງທຶນຂອງລັດຖະບານ ສ. ອາເມລິກາ ໃນການສະໜັບສະໜູນ ຄກລ.
- ■ ສະໜອງຄຳປຶກສາໃຫ້ແກ່ ຄກລ.

### ສະມາຄົມປັບປຸງຄຸນນະພາບຊີວິດຂອງຜູ້ລອດຊີວິດຈາກ ລບຕ (ຄິວແອວເອ)

- ■ ເຮັດໜ້າທີ່ໃນການສະໜອງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ, ຄົນພິການ ແລະ ຜູ້ທຸກຍາກ.
- ■ ຈັດຕັ້ງປະຕິບັດກິດຈະກຳການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຂອງຫ້ອງການ ຄຊກລ ໂດຍທຶນສະໜັບສະໜູນຂອງອົງການກອຍກາ ຜ່ານ ອົງການ ສປຊ ເພື່ອການພັດທະນາ.

### ສະມາຄົມຄົນພິການລາວ (ແອວດີພີເອ)

- ■ ປະຕິບັດໂຄງການຍ່ອຍຂອງອົງການເອັດສ໌ໄອ ຢູ່ແຂວງທິວພັນ ກ່ຽວກັບການສົ່ງເສີມສິດທິຂອງຄົນພິການ.
- ■ ຈັດຕັ້ງປະຕິບັດກິດຈະກຳການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຂອງຫ້ອງການ ຄຊກລ ໂດຍທຶນສະໜັບສະໜູນຂອງກອງທຶນສຳລັບການລິເລີ່ມກິດຈະກຳຢູ່ທ້ອງຖິ່ນຂອງການາດາ (ໂຄງການອົງການພັດທະນາສາກົນຂອງການາດາ) ໃນປີ 2020.

## ພາບລວມ ຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແມ່ນສະຖາບັນການຈັດຕັ້ງຂອງລັດຖະບານ ເຮັດໜ້າທີ່ໃນການສະໜອງແນວທາງນະໂຍບາຍ, ຄົ້ນຄ້ວາອອກໜັງສືຢັ້ງຢືນຮັບຮອງ, ຄຸ້ມຄອງ ແລະ ປະສານງານກັບບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ. ຄຊກລ ຍັງ ເຮັດໜ້າທີ່ເປັນຈຸດປະສານງານທາງດ້ານວິຊາການສຳລັບທຸກໆບັນຫາທີ່ພົວພັນກັບສົນທິສັນຍາສາກົນ ແລະ ຖືກມອບໝາຍຈາກລັດຖະບານລາວ ໃຫ້ເຂົ້າຮ່ວມກອງປະຊຸມສາກົນຕ່າງໆ ກ່ຽວກັບການແກ້ໄຂບັນຫາ ລບຕ. ນອກຈາກນັ້ນ, ຄຊກລ ຍັງມີໜ້າທີ່ຮັບຜິດຊອບໃນການຄົ້ນຄ້ວາສ້າງ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດວ່າດ້ວຍການແກ້ໄຂບັນຫາ ລບຕ, ກວດກາຄຸນນະພາບການສຳຫຼວດ ແລະ ກວດກູ້ ລບຕ, ດຳເນີນການປະເມີນຜົນກະທົບພາຍຫຼັງການກວດກູ້ ລບຕ ແລະ ຕິດຕາມກວດກາການປະຕິບັດງານທັງໝົດຂອງຂະແໜງການແກ້ໄຂບັນຫາ ລບຕ.

ຄຊກລ ແມ່ນສະຖາບັນການຈັດຕັ້ງສູງສຸດ ໃນການຊີ້ນຳທົ່ວຂະແໜງການ ລບຕ ໂດຍປະກອບດ້ວຍຜູ້ຕາງໜ້າຈາກກະຊວງຕ່າງໆ 12 ກະຊວງ ແລະ ບັນດາແຂວງ ຄື: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ປະທານ), ກະຊວງປ້ອງກັນປະເທດ (ຮອງປະທານ), ກະຊວງການຕ່າງປະເທດ (ຮອງປະທານ), ກະຊວງແຜນການ ແລະ ການລົງທຶນ (ຮອງປະທານ), ມີບັນດາກະຊວງທີ່ເປັນຄະນະກຳມະການຈາກກະຊວງສາທາລະນະສຸກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ... 

ກະຊວງໂທລະຄົມມະນາຄົມ ແລະ ໄປສະນີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສຶກສາທິການ ແລະ ກິລາ, ສູນກາງແນວລາວສ້າງຊາດ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສູນກາງສະຫະພັນແມ່ຍິງລາວ.

ນອກຈາກນັ້ນ, ຄຊກລ ຍັງມີຫ້ອງການ ຄຊກລ ມີພາລະບົດບາດເປັນເສນາທິການໃຫ້ ຄຊກລ ໃນການຈັດຕັ້ງປະຕິບັດກິດຈະກຳແກ້ໄຂບັນຫາ ລບຕ. ຄຊກລ ຖືກສ້າງຕັ້ງຂຶ້ນ ໂດຍການສະໜັບສະໜູນຈາກອົງການ ສປຊ ເພື່ອການພັດທະນາ ແລະ ໄດ້ຮັບການສະໜັບສະໜູນດ້ານຕ່າງໆຕະຫຼອດມາ.

ໂຄງປະກອບກົງຈັກຂອງຫ້ອງການ ຄຊກລ ແບ່ງອອກເປັນ 2 ພະແນກໃຫຍ່ຄື: ພະແນກສະໜັບສະໜູນ ແລະ ພະແນກຄຸ້ມຄອງການປະຕິບັດງານ. ແຕ່ລະພະແນກ ຈະມີໜ່ວຍງານຕ່າງໆຂຶ້ນກັບ ໂດຍມີຮອງຫົວໜ້າຫ້ອງການ ຄຊກລ 2 ທ່ານ ເປັນຜູ້ຊີ້ນຳວຽກງານຂອງແຕ່ລະໜ່ວຍງານ.

### ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ (ເອັມອາອີ)

ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ມີໜ້າທີ່ຮັບຜິດຊອບໃນການປະສານງານ ແລະ ສົມທົບກັບບັນດາອົງການປະຕິບັດງານໃຫ້ເຄື່ອນໄຫວວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອຮັບປະກັນໃຫ້ປະຕິບັດວຽກງານໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ ແລະ ຄົ້ນຄວ້າພັດທະນາສື່ໂຄສະນາຕ່າງໆ ຮັບໃຊ້ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ຜົນສຳເລັດຕົ້ນຕໍໃນປີ 2020 ມີຄື:

- ■ ຈັດກອງປະຊຸມກຸ່ມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນເດືອນເມສາ, ມິຖຸນາ, ກັນຍາ ແລະ ທັນວາ 2020.
- ■ ກອງປະຊຸມສຳມະນາ ກ່ຽວກັບການທົບທວນຂໍ້ຄວາມ ລບຕ ສຳລັບລາຍການວິທະຍຸ ລບຕ ທີ່ຈັດຂຶ້ນໃນເດືອນມິຖຸນາ 2020.
- ■ ກອງປະຊຸມສຳມະນາ ກ່ຽວກັບການທົບທວນ ແລະ ປັບປຸງ

ອຸປະກອນໂຄສະນາສຶກສາຄວາມສ່ຽງຈາກ ລບຕ ທີ່ຈັດຂຶ້ນໃນເດືອນກັນຍາ 2020.

- ກອງປະຊຸມ ກ່ຽວກັບການປະສານງານ ແລະ ວາງແຜນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ສໍາລັບປີ 2021 ຮ່ວມກັບບັນດາອົງການປະຕິບັດງານ, ອໍານາດການປົກຄອງຂັ້ນ ແຂວງ ແລະ ເມືອງ.
- ອາສາສະໝັກບ້ານ ທີ່ໄດ້ຝຶກອົບຮົມໃນທ້າຍປີ 2019 ໄດ້ສືບຕໍ່ດໍາເນີນກິດຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ແຂວງຊຽງຂວາງ ແລະ ຄໍາມ່ວນ ໃນປີ 2020. ນອກຈາກນັ້ນ, ອາສາສະໝັກບ້ານ 36 ຄົນ ຈາກແຂວງບໍລິຄໍາໄຊ ແລະ 454 ຄົນ ຈາກແຂວງສາລະວັນ ຍັງໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- ໄດ້ຜະລິດ ເສື້ອຢືດ 900 ຜືນ ແລະ ແຈກຢາຍໃຫ້ສະຖານີວິທະຍຸກະຈາຍສຽງ 5 ສະຖານີ (ສະຖານີວິທະຍຸກະຈາຍສຽງແຫ່ງຊາດ, ສະຖານີວິທະຍຸແຂວງຄໍາມ່ວນ, ເຊກອງ, ສາລະວັນ ແລະ ຈໍາປາສັກ).
- ໄດ້ຈັດພິມໂພດສ໌ເຕີ້ 3600 ແຜ່ນ ແລະ ປື້ມຊຸດສອດແຊກຮູບພາບ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ 48,550 ຫົວ ແລະ ແຈກຢາຍໃຫ້ບັນດາອົງການປະຕິບັດໃນທົ່ວຂະແໜງການ ນໍາໃຊ້ ລວມທັງ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ທີ່ປະຕິບັດໜ້າທີ່ຢູ່ໃນ 9 ແຂວງ, ຫ້ອງການຄະນະກໍາມະການຄຸ້ມຄອງການແກ້ໄຂບັນຫາ ລບຕ ຂັ້ນແຂວງ (ຫ້ອງການ ຄຄກລຂ) ຢູ່ 13 ແຂວງ, ສະຖານີວິທະຍຸ 5 ແຂວງ (ວິທະຍຸກະຈາຍສຽງແຫ່ງຊາດ, ສະຖານີວິທະຍຸແຂວງຄໍາມ່ວນ, ເຊກອງ, ສາລະວັນ ແລະ ຈໍາປາສັກ).

### ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ

ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ມີໜ້າທີ່ຮັບຜິດຊອບໃນການສ້າງຖານຂໍ້ມູນແຫ່ງຊາດກ່ຽວກັບຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ແລະ ຮັບປະກັນໃຫ້ຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ ໄດ້ຮັບການຕອບສະໜອງຈາກບັນດາອົງການປະຕິບັດງານ ແລະ ພາກສ່ວນກ່ຽວຂ້ອງ. ຜົນສໍາເລັດຕົ້ນຕໍໃນປີ 2020 ມີຄື:

- ຈັດກອງປະຊຸມກຸ່ມວິຊາການວຽກງານຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກ ລບຕ ໃນເດືອນມີນາ, ມິຖຸນາ, ກັນຍາ ແລະ ຕຸລາ 2020.
- ກອງປະຊຸມ ກ່ຽວກັບການປະສານງານ ແລະ ວາງແຜນວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ສໍາລັບປີ 2021 ຮ່ວມກັບບັນດາອົງການປະຕິບັດງານ, ອໍານາດການປົກຄອງຂັ້ນແຂວງ ແລະ ເມືອງ.
- ໄດ້ຈັດກອງປະຊຸມ ປຶກສາຫາລືຄົ້ນຄ້ວາສ້າງແຜນປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ສໍາ ລັບປີ 2021-2025.

### ການສໍາຫຼວດ ແລະ ກວດກູ້ ລບຕ

ສໍາລັບວຽກງານການສໍາຫຼວດ ແລະ ກວດກູ້ ລບຕ ແມ່ນຮັບປະກັນໃຫ້ການປະຕິບັດງານພາກສະໜາມປະຕິບັດສອດຄ່ອງກັບມາດຕະຖານແຫ່ງຊາດໃນການແກ້ໄຂບັນຫາ ລບຕ ແລະ ປະສານງານສ້າງແຜນການສໍາຫຼວດ ແລະ ກວດກູ້ ລບຕ ຂອງຂະແໜງການ. ຄຊກລ ຍັງຮັບຜິດຊອບໃນການຝຶກອົບຮົມທາງດ້ານວິຊາການ ແລະ ຕິດຕາມຂະບວນການກ່ອນການເກັບກູ້ ແລະ ຜົນກະທົບພາຍຫຼັງຈາກເກັບກູ້. ຜົນສໍາເລັດຕົ້ນຕໍໃນປີ 2020 ປະກອບມີ:

- ຈັດກອງປະຊຸມວິຊາການວຽກງານສໍາຫຼວດ ແລະ ກວດກູ້ ລບຕ ໃນເດືອນມີນາ, ມິຖຸນາ, ກັນຍາ ແລະ ທັນວາ 2020.
- ຈັດກອງປະຊຸມການປະສານງານ ແລະ ສ້າງແຜນການສໍາຫຼວດ ແລະ ກວດກູ້ ລບຕ ສໍາລັບປີ 2021 ຮ່ວມກັບອົງການປະຕິບັງານ, ອົງການປົກຄອງຂັ້ນແຂວງ ແລະ ເມືອງ.
- ລົງຕິດຕາມ ແລະ ຊຸກຍູ້ ການປະຕິບັດງານຂອງບັນດາອົງການປະຕິບັດງານຢູ່ພາກໜາມ.
- ດໍາເນີນການຕອບຮັບສຸກເສີນ ໃນການກວດກູ້ ແລະ ທໍາລາຍ ລບຕ ຢູ່ບ່ອນທີ່ບໍ່ມີອົງການປະຕິບັດງານໃນປີ 2020.
- ໄດ້ປະສານງານກັບບັນດາກະຊວງຕ່າງໆ ແລະ ອົງການປະຕິບັດງານ.

## ການສະໜັບສະໜູນຂອງອົງການ ສປຊ ເພື່ອການພັດທະນາ

### ການສະໜັບສະໜູນທາງດ້ານວິຊາການ

- ອົງການ ສປຊ ເພື່ອການພັດທະນາ ໄດ້ໃຫ້ການສະໜັບສະໜູນໃນການສະໜອງຫົວໜ້າຊ່ຽວຊານທີ່ປຶກສາ, ຊ່ຽວຊານການເງິນ, ຊ່ຽວຊານທາງດ້ານການຕິດຕາມ ແລະ ປະເມີນຜົນ ແລະ ຊ່ຽວຊານທາງດ້ານແຜນງານໂຄງການ ແລະ ການຮ່ວມມື. ທີມງານ ສປຊ ໄດ້ສະໜອງການສະໜັບສະໜູນທາງດ້ານວິຊາການ ກ່ຽວກັບການສ້າງແຜນການ ແລະ ງົບປະມານ ພ້ອມທັງການຕິດຕາມ, ຊ່ວຍສ້າງບົດລາຍງານ, ຕິດຕາມ ແລະ ປະເມີນຜົນຂີດຄວາມສາມາດ ພ້ອມທັງໃຫ້ຄໍາປຶກສາວິຊາການດ້ານຕ່າງໆ ກ່ຽວກັບການຄຸ້ມຄອງບໍລິຫານວຽກງານກວດກູ້ ລບຕ.
- ໄດ້ສະໜັບສະໜູນ ຄຊກລ ໃນການກະກຽມເນື້ອໃນຕ່າງໆ ເພື່ອເຂົ້າຮ່ວມກອງປະຊຸມປະຈໍາປີຄັ້ງທີ 23 ຂອງຫົວໜ້າອົງການແກ້ໄຂບັນຫາ ລບຕ ໂລກ, ຈັດຂຶ້ນໃນລະຫວ່າງວັນທີ 11 ເຖິງ 14 ກຸມພາ 2020, ທີ່ນະຄອນເຈນີວາ, ສະວິດເຊີແລນ.

### ການຄຸ້ມຄອງບໍລິຫານ ແລະ ການຈັດຊື້-ຈັດຈ້າງ

- ອົງການ ສປຊ ເພື່ອການພັດທະນາ ໄດ້ສະໜັບສະໜູນໃນການຊ່ວຍກວດກາຄືນຮ່າງແຜນການປະຈໍາປີ 2020 ຂອງຫ້ອງການ ຄຊກລ ພາຍຫຼັງທີ່ໄດ້ມີການນໍາສະເໜີຜ່ານກອງປະຊຸມຄະນະຊີ້ນໍາໂຄງການ, ຊ່ວຍແນະນໍາກ່ຽວກັບການປັບປຸງແຜນການຈັດຊື້-ຈັດຈ້າງ, ຊ່ວຍຫ້ອງການ ຄຊກລ ໃນການກະກຽມເນື້ອໃນ ແລະ ເອກະສານຕ່າງໆ ສໍາລັບການກວດສອບປະຈໍາປີ ແລະ ກະກຽມແຜນການຈັດຕັ້ງປະຕິບັດຄໍາແນະນໍາຈາກຜົນຂອງກວດສອບ, ຊ່ວຍຫ້ອງການ ຄຊກລ ໃນການກະກຽມບົດລາຍງານປະຈໍາປີ 2019 ຂອງຂະແໜງການແກ້ໄຂບັນຫາ ລບຕ ແລະ ຊ່ວຍໃນການຈັດຊື້ອຸປະກອນ ແລະ ພາຫະນະ ໃຫ້ແກ່ກອງກວດກູ້ລະເບີດມະນຸດສະທໍາກອງທັບ (ກອງ58) ໂດຍສອດຄ່ອງກັບລະບຽບການຈັດຕັ້ງປະຕິບັດໂຄງການ (ນິມ).

### ການນໍາພາຂະແໜງການແກ້ໄຂບັນຫາ ລບຕ

- ໃນນາມເປັນປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ, ສປຊ ເພື່ອການພັດທະນາ ໄດ້ຊ່ວຍສະໜັບສະໜູນລັດຖະບານ ສປປ ລາວ ໃນການປະສານກັບບັນດາຄູ່ຮ່ວມງານຕ່າງໆໃນຂະແໜງການແກ້ໄຂບັນຫາ ລບຕ ແລະ

ຊ່ວຍສະໜັບສະໜູນໃນການເຊື່ອມສານວຽກງານແກ້ໄຂບັນຫາ ລບຕ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9 ໂດຍກາຍເປັນຄາດໝາຍຜົນໄດ້ຮັບໜຶ່ງຂອງແຜນພັດທະນາສະບັບດັ່ງກ່າວ.

- ສປຊ ເພື່ອການພັດທະນາ ໄດ້ຊ່ວຍສະໜັບສະໜູນລັດຖະບານ ສປປ ລາວ ໃນການລະດົມຂົນຂວາຍທຶນ ແລະ ແກ້ໄຂບັນຫາທຶນຮອນບໍ່ພຽງພໍ ເພື່ອຮັບປະກັນຄວາມຕໍ່ເນື່ອງໃນການຈັດຕັ້ງປະຕິບັດກິດຈະກຳ ໂດຍຜ່ານການເຈລະຈາ ແລະ ມີຂໍ້ຕົກລົງຮ່ວມກັບບັນດາປະເທດຜູ້ໃຫ້ທຶນ.

## ການສ້າງຂີດຄວາມສາມາດ

- ທີມງານຊ່ຽວຊານຂອງ ອົງການ ສປຊ ເພື່ອການພັດທະນາ ໄດ້ເຮັດວຽກຢ່າງໃກ້ສິດໃນການປັບປຸງຂີດຄວາມສາມາດຂອງພະນັກງານຫ້ອງການ ຄຊກລ ເປັນຕົ້ນແມ່ນ ໄດ້ຊ່ວຍສະໜັບສະໜູນການສ້າງແຜນຍຸດທະສາດ ເປັນຕົ້ນແມ່ນ ແຜນປະຕິບັດງານ 5 ປີ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ (2021-2025), ແຜນການປະຈຳປີ 2021 ຂອງຫ້ອງການ ຄຊກລ, ແຜນຍຸດທະສາດແຫ່ງຊາດ ໃນການແກ້ໄຂບັນຫາ ລບຕ ສະບັບໃໝ່ (2021-2030) ລວມທັງ ແຜນການແກ້ໄຂບັນຫາ ລບຕ 5 ປີ (2021-2025).
- ທີມງານຊ່ຽວຊານຂອງ ອົງການ ສປຊ ເພື່ອການພັດທະນາ ຍັງໄດ້ເຮັດວຽກຢ່າງໃກ້ສິດກັບຫ້ອງການ ຄຊກລ ໃນການກະກຽມ ແລະ ຍື່ນບົດລາຍງານຄວາມຄືບໜ້າປະຈຳໄຕມາດ ແລະ ປະຈຳປີຂອງການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃຫ້ແກ່ອົງການ ສປຊ ເພື່ອການພັດທະນາ ແລະ ບັນດາປະເທດຜູ້ໃຫ້ທຶນ.
- ໄດ້ສະໜັບສະໜູນການສ້າງຂີດຄວາມສາມາດໃຫ້ແກ່ໜ່ວຍງານຕ່າງໆຂອງຫ້ອງການ ຄຊກລ ໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດກິດຈະກຳ ແລະ ຊ່ວຍພັດທະນາກອບແຜນວຽກດ້ານຕ່າງໆຂອງບັນດາໜ່ວຍງານພາຍໃນຫ້ອງການ ຄຊກລ ໂດຍມີພະນັກງານຊ່ຽວຊານທີ່ປຶກສາດ້ານການຕິດຕາມ ແລະ ປະເມີນຜົນ ນັ່ງເຮັດວຽກປະຈຳຢ່າງເຕັມເວລາຢູ່ທີ່ຫ້ອງການ ຄຊກລ.

## ການລະດົມທຶນຮອນ

- ອົງການ ສປຊ ເພື່ອການພັດທະນາ ໄດ້ສົມທົບກັບເຈົ້າໜ້າທີ່ຂອງລັດຖະບານ ສປປ ລາວ ເຂົ້າຮ່ວມກອງປະຊຸມປະຈຳປີຄັ້ງທີ 23 ຂອງຫົວໜ້າອົງການແກ້ໄຂບັນຫາ ລບຕ ໂລກ, ທີ່ນະຄອນເຈນີວາ, ສະວິດເຊີແລນ ໂດຍການຊ່ວຍສະໜັບສະໜູນລັດຖະບານ ສປປ ລາວ ໃນການເຈລະຈາກັບບັນດາປະເທດຜູ້ໃຫ້ທຶນ ເພື່ອລະດົມທຶນເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ.
- ນອກຈາກນັ້ນ, ຍັງໄດ້ສະໜັບສະໜູນລັດຖະບານ ສປປ ລາວ ໃນການລະດົມທຶນຈາກແຫຼ່ງທຶນອື່ນໆ ເປັນຕົ້ນແມ່ນ ລະດົມທຶນຈາກລັດຖະບານຕຸລາກີ ໄດ້ຈຳນວນ 46,000 ໂດລາ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງຫ້ອງການ ຄຊກລ ສຳລັບປີ 2020.
- ລັດຖະບານ ສປປ ລາວ ໂດຍສົມທົບກັບອົງການ ສປຊ ເພື່ອການພັດທະນາ ໄດ້ສຳເລັດການຍື່ນບົດສະເໜີໂຄງການໃຫ້ແກ່ລັດຖະບານນິວຊີແລນ ເພື່ອສະໜັບສະໜູນວຽກງານແກ້ໄຂບັນຫາ ລບຕ ໄລຍະ 4 ປີ (2021 ຫາ 2024) ຈຳນວນ 10,300,000 ໂດລານິວຊີແລນ ຫຼື ປະມານ 7.3 ລ້ານໂດລາ ສຫລ ໂດຍຈະສຸມໃສ່ການສ້າງຄວາມເຂັ້ມແຂງຂີດຄວາມສາມາດຂອງສູນຝຶກອົບຮົມ ລບຕ ແຫ່ງຊາດ.

# ປະເທດຜູ້ໃຫ້ທຶນ

ອົດສະຕາລີ



ນິວຊີແລນ



ການາດາ



ນ໊ອກແວ



ໄອແລນ



ສ. ເກົາຫຼີ



ຢີ່ປຸ່ນ



ລາດຊະອານາຈັກອັງກິດ



ສປປ ລາວ



ສ. ອາເມລິກາ



ລຸກຊໍາບວກ



ຕຸລາກີ



# ຜົນສຳເລັດຕົ້ນຕໍຂອງ ຂະແໜງການແກ້ໄຂບັນຫາ ລບຕ ໃນ 2020




ເຄື່ອງໝາຍສັນຍາລັກຂອງ
ບັນດາອົງການປະຕິບັດງານ
ທີ່ເຄື່ອນໄຫວວຽກງານແກ້ໄຂ
ບັນຫາ ລບຕ ຢູ່ ສປປ ລາວ



ການໂຄສະນາສຶກສາຄວາມສ່ຽງ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ການສຳຫຼວດ ແລະ ກວດກູ້ ລບຕ

# ບົດລາຍງານຂອງອົງການປະຕິບັດງານ

# ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ

## ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ)

### ກິດຈະກຳຕົ້ນຕໍໃນປີ 2020

ໂຄງການເກັບກູ້ລະເບີດແຫ່ງຊາດ(ຄກລ) ໄດ້ສືບຕໍ່ປະຕິບັດກິດຈະກຳຕ່າງໆໃນການແກ້ໄຂບັນຫາ ລບຕ ຢູ່ 9 ແຂວງທີ່ມີ ລບຕ ຕົກຄ້າງໜັກໜ່ວງທີ່ສຸດ, ຊຶ່ງກິດຈະກຳທີ່ໄດ້ປະຕິບັດໃນປີ 2020 ປະກອບມີ:

- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: ຄກລ ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອເຮັດໃຫ້ປະຊາຊົນທີ່ດຳລົງຊີວິດໃນເຂດທີ່ມີ ລບຕ ຕົກຄ້າງ ຮັບຮູ້ເຖິງຜົນຮ້າຍ ແລະ ຄວາມອັນຕະລາຍຂອງ ລບຕ ຜ່ານການເຮັດກິດຈະກຳຕ່າງໆ ຄື: ການຮ້ອງເພງ, ການເຕັ້ນ, ການຫຼິ້ນເກມ, ການຖາມ-ຕອບ ແລະ ລະຄອນຕຸກກະຕາ.
- **ການສຳຫຼວດບໍ່ແມ່ນແບບວິຊາການ**: ຄກລ ດຳເນີນການສຳຫຼວດບໍ່ແມ່ນແບບວິຊາການ ໂດຍການທົບທວນຄືນບັນດາຂໍ້ມູນທີ່ກ່ຽວຂ້ອງກັບ ລບຕ ຢູ່ບັນດາບ້ານຕ່າງໆ ແລະ ພົບປະກັບບັນດາຄົວເຮືອນ ເພື່ອເກັບກຳຂໍ້ມູນຈາກປະຊາຊົນ ທີ່ເຄີຍພົບເຫັນ ລບຕ ຕົກຄ້າງຢູ່ບັນດາບ້ານ. ນອກຈາກນັ້ນ, ການສຳຫຼວດບໍ່ແມ່ນແບບວິຊາການ ຍັງເປັນກຳນົດຈຸດຫຼັກຖານ ລບຕ ໃຫ້ແກ່ການທຳລາຍ ລບຕ ແບບເຄື່ອນທີ່ ແລະ ການສຳຫຼວດແບບວິຊາການອີກດ້ວຍ. ການສຳຫຼວດບໍ່ແມ່ນແບບວິຊາການ ຍັງສາມາດກຳນົດໃຫ້ເຫັນການຕົກຄ້າງຂອງ ລບຕ ຢູ່ໃນບ້ານນັ້ນໆ ເຊັ່ນ: ການກວດກູ້ໃນໄລຍະຜ່ານມາ, ພື້ນທີ່ ລບຕ ຕົກຄ້າງ ແລະ ຈຸດຫຼັກຖານ ລບຕ.
- **ການສຳຫຼວດແບບວິຊາການ**: ຄກລ ໄດ້ດຳເນີນການສຳຫຼວດແບບວິຊາການໂດຍນຳໃຊ້ຈຸດຫຼັກຖານ ລບຕ ເປັນຈຸດເລີ່ມຕົ້ນ ແລະ ນຳໃຊ້ເຄື່ອງກວດກາລະເບີດຊອກຫາຈົນກວ່າຈະພົບເຫັນລະເບີດລູກຫວ່ານ ແລ້ວຈຶ່ງຢຸດ ແລ້ວຍ້າຍໄປບ່ອກໃໝ່. ແຕ່ລະບ່ອກ ມີຂະໜາດ 50 ຄູນ 50 ແມັດ ນຳໃຊ້ເຂົ້າໃນການສຳຫຼວດແບບວິຊາການ. ຢູ່ແຕ່ລະບ່ອກ ຈະສືບຕໍ່ຊອກຫາຈົນກວ່າຈະພົບເຫັນລະເບີດລູກຫວ່ານ ຫຼື ໄດ້ມີການສຳຫຼວດຢູ່ໃນບ່ອກໄປແລ້ວຫຼາຍກວ່າ 50% ຈຶ່ງສາມາດເຊົາໄດ້. ກໍລະນີສຳຫຼວດໄປແລ້ວ ພົບເຫັນຈຸດຫຼັກຖານລະເບີດລູກຫວ່ານ ແມ່ນຈະຢຸດທັນທີ ແລ້ວສືບຕໍ່ຍ້າຍໄປບ່ອກອື່ນທີ່ຢູ່ຖັດໄປ. ຫຼັງຈາກນັ້ນ, ຂໍ້ມູນຈະຖືກບັນທຶກໄວ້ ແລະ ກຳນົດເປັນພື້ນທີ່ ລບຕ ຕົກຄ້າງ ແລ້ວລາຍງານເຂົ້າຖານຂໍ້ມູນຂອງ ຄຊກລ.
- **ການກວດກູ້ ລບຕ**: ຄກລ ໄດ້ດຳເນີນການກວດກູ້ ລບຕ ຕາມພື້ນທີ່ ລບຕ ຕົກຄ້າງ ທີ່ໄດ້ຈາກການສຳຫຼວດແບບວິຊາການ. ແນວໃດກໍ່ຕາມ, ໃນຖານະທີ່ ຄກລ ເປັນອົງການປະຕິບັດງານໜຶ່ງຂອງລັດຖະບານ, ບາງຄັ້ງຄາວ ກໍ່ໄດ້ດຳເນີນການກວດກູ້ ລບຕ ຕາມການສະເໜີຂອງປະເທດຜູ້ໃຫ້ທຶນ ສຳລັບໂຄງການພັດທະນາອື່ນໆທີ່ໄດ້ຮັບການອະນຸມັດ. ຫຼັງຈາກນັ້ນ, ກໍ່ໄດ້ມອບໝາຍໃຫ້ທີມງານກວດກູ້ເຂົ້າໄປດຳເນີນການຊອກຫາ ແລະ ກວດກູ້ລບຕອອກຈາກພື້ນທີ່ໂຄງການຕາມລະດັບຄວາມເລິກທີ່ຈະນຳໃຊ້. ສຳລັບເນື້ອທີ່ດິນກະສິກຳ ແມ່ນຈະເລິກ 25 ຊັງຕີແມັດ. ໃນຂະບວນການກວດກູ້ນັ້ນ ລບຕ ທີ່ຖືກພົບເຫັນຈະຖືກທຳລາຍຕາມຈຸດປະສົງລະດັບຄວາມເລິກທີ່ຈະນຳໃຊ້ດິນເປັນຕົ້ນຕໍ.
- **ການທຳລາຍ ລບຕ ແບບເຄື່ອນທີ່**: ຄກລ ໄດ້ດຳເນີນການທຳລາຍ ລບຕ ແບບເຄື່ອນທີ່ ຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນຫຼືທີມງານສຳຫຼວດ ໃນເວລາພົບເຫັນ ລບຕ ຕົກຄ້າງຢູ່ຕາມພື້ນທີ່ຕ່າງໆ.

### ຜົນສຳເລັດຕົ້ນຕໍໃນປີ 2020

- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: ແຜນການປີ 2020 ແມ່ນ 325 ບ້ານ, ສາມາດປະຕິບັດໄດ້ 323 ບ້ານ (99.38% ທຽບໃສ່ແຜນການ), ມີຜູ້ໄດ້ຮັບຜົນປະໂຫຍດ 170,312 ຄົນ, ໃນນີ້ 85,809 ຄົນ ແມ່ນຜູ້ຍິງ.
- **ການສຳຫຼວດບໍ່ແມ່ນແບບວິຊາການ**: ແຜນການປີ 2020 ແມ່ນ 108 ບ້ານ, ສາມາດປະຕິບັດໄດ້ 103 ບ້ານ (95.37% ທຽບໃສ່ແຜນການ) ແລະ ພົບເຫັນຈຸດຫຼັກຖານ ລບຕ 2,622 ໜ່ວຍ.
- **ການສຳຫຼວດແບບວິຊາການ**: ແຜນການປີ 2020 ແມ່ນ 3,729 ເຮັກຕາ, ສາມາດປະຕິບັດໄດ້ 4,403 ເຮັກຕາ (118% ທຽບໃສ່ແຜນການ), 331 ພື້ນທີ່ ຖືກກຳນົດເປັນພື້ນທີ່ ລບຕ ຕົກຄ້າງ.
- **ການທຳລາຍ ລບຕ ແບບເຄື່ອນທີ່**: ວຽກງານດັ່ງກ່າວນີ້ບໍ່ໄດ້ກຳນົດຄາດໝາຍ ເນື່ອງຈາກວ່າ ການຕອບຮັບທຳລາຍ ລບຕ ແບບເຄື່ອນທີ່ ແມ່ນຈະອີງໃສ່ການລາຍງານການພົບເຫັນ ລບຕ ຈາກປະຊາຊົນ ຫຼື ທີມງານສຳຫຼວດ. ໃນປີ 2020, ຄກລ ໄດ້ດຳເນີນການທຳລາຍ ລບຕ ແບບເຄື່ອນທີ່ 1,076 ເທື່ອຄັ້ງ ຢູ່ໃນ 495 ບ້ານ ໃນ 9 ແຂວງ ແລະ ສາມາດທຳລາຍ ລບຕ ໄດ້ 11,595 ໜ່ວຍ.



- **ການກວດກູ້ ລບຕ**: ແຜນການປີ 2020 ແມ່ນ 2,764 ເຮັກຕາ, ສາມາດປະຕິບັດໄດ້ 2,588 ເຮັກຕາ (93.63% ທຽບໃສ່ແຜນການ), ໃນນີ້ ເນື້ອທີ່ດິນກະສິກຳແມ່ນ 2559 ເຮັກຕາ ແລະ ດິນພັດທະນາແມ່ນ 29 ເຮັກຕາ, ມີຜູ້ໄດ້ຮັບຜົນປະໂຫຍດ 41,300 ຄົນ.
- **ການທຳລາຍ ລບຕ**: ຄກລ ສາມາດທຳລາຍ ລບຕ ໄດ້ທັງໝົດ 43,272 ໜ່ວຍ, ໃນນີ້ 76.5% ແມ່ນລະເບີດລູກຫວ່ານ ແລະ 23.5% ແມ່ນ ລບຕ ຊະນິດອື່ນໆ ເປັນຕົ້ນແມ່ນລະເບີດບົມໃຫຍ່, ລະເບີດຝັງດິນ ແລະ ສໍາພາວຸດອື່ນໆ.

## ກໍລະນີສຶກສາ

ໃນປີ 2020, ຄກລ ສາມາດກວດກູ້ ລບຕ ອອກຈາກພື້ນທີ່ດິນກະສິກຳໄດ້ຫຼາຍກວ່າ 2,500 ເຮັກຕາ ໃນ 9 ແຂວງ ສາມາດຮັບປະກັນໃຫ້ປະຊາຊົນ ສາມາດດຳລົງຊີວິດ ແລະ ເຮັດວຽກຢູ່ຕາມໄຮ່ນາຮົ້ວສວນໄດ້ຢ່າງປອດໄພ ໂດຍປັດສະຈາກຄວາມຢ້ານກົວຂອງ ລບຕ, ຊຶ່ງໜຶ່ງໃນກໍລະນີສຶກສາຂ້າງລຸ່ມນີ້ ຈະສະແດງໃຫ້ເຫັນຄື:

ນາງ ບຸນຈັນ ອາຍຸ 55 ປີ, ອາໄສຢູ່ບ້ານນາຄູນ, ເມືອງແປກ, ແຂວງຊຽງຂວາງ ມີອາຊີບເຮັດນາຂາຍເຂົ້າ ແລະ ຜັກຫຼຽມທີ່ ຕົນເອງ ແລະ ຜົວ ໄດ້ປູກຢູ່ນາຂອງຕົນເອງ. ລາວເວົ້າວ່າ: "ຄອບຄົວຂອງຂ້ອຍ ມີ 6 ຄົນ ເຮັດໃຫ້ຂ້ອຍ ແລະ ຜົວ ຕ້ອງໄດ້ປູກເຂົ້າ ແລະ ຜັກຫຼຽມຫຼາຍຂຶ້ນກວ່າເກົ່າ ເພື່ອນຳໄປຂາຍສ້າງລາຍຮັບເພີ່ມຂຶ້ນ, ຊຶ່ງແຕ່ກ່ອນ ແມ່ນມີຄວາມລຳບາກຫຼາຍຍ້ອນຍັງບໍ່ທັນໄດ້ກວດກູ້ ລບຕ ອອກຈາກເນື້ອທີ່. ພື້ນທີ່ນາຂອງຂ້ອຍ 9,000 ຕາແມັດ ໄດ້ຮັບການກວດກູ້ ໃນປີ 2015. ຄອບຄົວ ແລະ ຂ້ອຍເອງ ມີຄວາມດີໃຈຫຼາຍ ທີ່ສາມາດສ້າງລາຍຮັບເພີ່ມໃຫ້ແກ່ຄອບຄົວໄດ້. ປີກາຍນີ້, ພວກເຮົາ ມີລາຍຮັບ 2,000 ຫາ 3,000 ໂດລາ ທີ່ໄດ້ຈາກການຂາຍຜັກຫຼຽມ ແລະ ສັດລ້ຽງ. ຂ້ອຍໄດ້ຂາຍຜັກຫຼຽບ ປະມານ 470 ຫາ 480 ກິໂລ, ກິໂລລະ 10,000 ກີບ ແລະ ຂາຍງົວ 12 ໂຕ ແລະ ຄວາຍ 3 ໂຕ. ກ່ອນຈະມີການກວດກູ້ ພວກເຮົາມີຄວາມຢ້ານກົວກ່ຽວກັບ ລບຕ ຢູ່ໃນພື້ນທີ່ດັ່ງກ່າວນີ້ ຍ້ອນວ່າ ມັນສາມາດແຕກຂຶ້ນໄດ້ທຸກເວລາ. ເຖິງແມ່ນວ່າ ຂ້ອຍເອງ ກໍ່ຍັງບໍ່ເຄີຍເຫັນ ລບຕ ຕົກຄ້າງຢູ່ພື້ນທີ່ນີ້ກໍ່ຕາມ ແຕ່ຂ້ອຍຮູ້ວ່າ ນາຂອງຂ້ອຍ ແມ່ນມີຄວາມສ່ຽງ ຍ້ອນໄທບ້ານໃກ້ຄຽງແຖບນີ້ ເຄີຍເຫັນ ລບຕ ຕົກຄ້າງຢູ່ດິນນາຂອງລາວ. ເພື່ອຄວາມປອດໄພໃນເວລາເຮັດນາ, ພວກເຮົາ ໄດ້ນຳໃຊ້ສ້ອນຈຸດດິນແທນທີ່ຈະໃຊ້ຈົກ.



*ນາງ ບຸນຈັນ ກຳລັງມີຄວາມສຸກກັບພາບແຫ່ງຄວາມສວຍງາມຂອງທົ່ງນາຂອງລາວ ທີ່ປອດໄພຈາກ ລບຕ*

ໃນຕົ້ນປີ 2019, ຂ້ອຍບໍ່ຄິດວ່າຈະໄດ້ເຫັນ ລບຕ ຕົກຄ້າງຢູ່ບໍລິເວນເຮືອນຂອງຂ້ອຍ. ຂ້ອຍຕົກໃຈ ແລະ ຮີບໄປລາຍງານນາຍບ້ານທັນທີ. ຫຼັງຈາກນັ້ນ, ທີມງານທຳລາຍ ລບຕ ເຄື່ອນທີ່ ກໍ່ມາເບິ່ງ ແລະ ທຳ ລາຍ ລບຕ ທີ່ພົບເຫັນໃນມື້ນັ້ນເລີຍ".

ໃນເດືອນມີນາ 2019, ທີມງານສຳຫຼວດແບບວິຊາການຂອງ ຄກລ ປະຈຳແຂວງຊຽງຂວາງ ໄດ້ສືບຕໍ່ເຂົ້າໄປດຳເນີນການສຳຫຼວດຢູ່ພື້ນທີ່ດັ່ງກ່າວ ພົບເຫັນລະເບີດລູກຫວ່ານ 15 ໜ່ວຍ ຊະນິດ (ບີແອວຢູ 26) ຂະໜາດ 4.9 ຊັງຕີແມັດ. ໃນວັນທີ 11 ເຖິງ 20 ກຸມພາ 2020, ທີມງານກວດກູ້ ລບຕ ຍັງພົບເຫັນ ລບຕ ຕື່ມອີກ 88 ໜ່ວຍ, ໃນນີ້ ມີລະເບີດລູກຫວ່ານ ຊະນິດ ບີແອວຢູ 26 ຈຳນວນ 81 ໜ່ວຍ ແລະ ລບຕ ຊະນິດອື່ນໆ 7 ໜ່ວຍ.

ນາງ ບຸນຈັນ ຍັງໄດ້ກ່າວຕື່ມອີກວ່າ: "ພວກເຮົາຮູ້ວ່າ ພວກເຮົາ ກຳລັງດຳລົງຊີວິດຢູ່ໃນພື້ນທີ່ໆມີຄວາມສ່ຽງ, ແຕ່ວ່າພວກເຮົາ ຕ້ອງໄດ້ທຳມາຫາກິນຢູ່ບ່ອນນີ້ ແລະ ລ້ຽງສັດເພື່ອປັບປຸງສະພາບການເປັນຢູ່ຂອງຄອບຄົວເຮົາ. ດຽວນີ້, ເນື້ອທີ່ນາແມ່ນໄດ້ຮັບການກວດກູ້ແລ້ວ ແລະ ຂ້ອຍຮູ້ສຶກປອດໄພ. ຂ້ອຍ ບໍ່ຮູ້ສຶກຢ້ານ ແລະ ກັງວົນກັບ ລບຕ ອີກແລ້ວ. ໃນອະນາຄົດ, ຂ້ອຍຕ້ອງການຈະປູກເຂົ້າ ແລະ ຫຍ້າ ເພື່ອນຳໄປລ້ຽງສັດ. ຄອບຄົວ ແລະ ຂ້ອຍ ມີຄວາມສຸກຫຼາຍ ທີ່ເນື້ອທີ່ນາຂອງພວກເຮົາ ໄດ້ຮັບການກວດກູ້ແລ້ວ. ພວກເຮົາ ຂໍສະແດງຄວາມຮູ້ບຸນຄຸນ ມາຍັງ ຄກລ ແຂວງຊຽງຂວາງ ທີ່ໄດ້ມາຢ້ຽມຢາມ ແລະ ເຮັດໃຫ້ຊີວິດຂອງພວກເຮົາປອດໄພຈາກ ລບຕ"

## ສິ່ງທ້າທາຍ

ສິ່ງທ້າທາຍຕົ້ນຕໍໃນປີ 2021 ແມ່ນການຂາດແຄນທຶນສະໜັບສະໜູນເຂົ້າໃນການປະຕິບັດງານ ໂດຍສະເພາະແມ່ນການປະຕິບັດງານຢູ່ແຂວງຫຼວງພະບາງ ທີ່ບໍ່ມີທຶນສືບຕໍ່ສະໜັບສະໜູນ ສິ່ງຜົນກະທົບຕໍ່ພະນັກງານ, ການປະຕິບັດໜ້າທີ່ວຽກງານ ແລະ ຊີວິດການເປັນຢູ່ ແລະ ຄອບຄົບຂອງເຂົາເຈົ້າ ພົບກັບຄວາມຫຍຸ້ງຍາກລຳບາກ ເຮັດໃຫ້ຜົນໄດ້ຮັບບໍ່ສາມາດບັນລຸຕາມແຜນການທີ່ວາງໄວ້.

ຢ່າງທີ່ສອງ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານພາກສະໜາມ ແມ່ນມີອາຍຸເກົ່າຫຼາຍ ແລະ ຕ້ອງໄດ້ມີການປ່ຽນແທນໃໝ່. ຖ້າມີທຶນພຽງພໍ ເພື່ອຮັບປະກັນແກ່ສິ່ງທ້າທາຍຂ້າງເທິງນີ້, ມີການລະດົມແນວຄິດຂອງພະນັກງານ ແລະ ການປະສານງານໃນຂະແໜງການແກ້ໄຂ ລບຕ ມີຄວາມເຂັ້ມແຂງ ເຊື່ອວ່າ ຈະສາມາດເຮັດໃຫ້ບັນລຸເປົ້າໝາຍທີ່ວາງໄວ້.

## ຄູ່ຮ່ວມງານ

- ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
- ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ
- ລັດຖະບານອິດຕາລີ
- ລັດຖະບານການາດາ
- ລັດຖະບານໄອແລນ

- ລັດຖະບານຍີ່ປຸ່ນ
- ລັດຖະບານ ສປປ ລາວ
- ລັດຖະບານລຸກຊຳບວກ
- ລັດຖະບານນິວຊີແລນ
- ລັດຖະບານນໍອກແວ
- ລັດຖະບານ ສ. ອາເມລິກາ
- ລັດຖະບານ ສ. ເກົາຫຼີ
- ອົງການແກ້ໄຂບັນຫາລະເບີດຝັງດິນຂອງກຳປູເຈຍ
- ອົງການກາແດງສາກົນ (ໄອຊີອາຊີ)
- ອົງການໄອໂຕ ເພື່ອການສະໜັບສະໜູນ
- ອົງການສາກົນເພື່ອການຮ່ວມມືຂອງຂອງຍີ່ປຸ່ນ (ໄຈກາ)
- ອົງການບໍລິການແກ້ໄຂລະເບີດຝັງດິນຂອງຍີ່ປຸ່ນ (ເຈມັດ)
- ລະບົບສາກົນເພື່ອການຮ່ວມມືຂອງຍີ່ປຸ່ນ (ຈິກ)
- ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ (ເອັນພີເອ)
- ອົງການນ້ຳໃຈນັກກິລາເຕະບານ (ເອັດສ໌ໂອເອັດສ໌)
- ບໍລິສັດ ເທັດຫຼາເທັກ (ທີທີທີ)
- ສະມາຄົມໂລກປອດຈາກລະເບີດຝັງດິນ

## ວຽກງານຈຸດສຸມ ໃນປີ 2021

ຕາຕະລາງຂ້າງລຸ່ມ ສະແດງໃຫ້ເຫັນຄາດໝາຍກິດຈະກຳຂອງ ຄກລ ສຳລັບປີ 2021:

| ແຂວງ | ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ (ບ້ານ) | ການສຳຫຼວດບໍ່ແມ່ນແບບວິຊາການ (ບ້ານ) | ການສຳຫຼວດແບບວິຊາການ (ເຮັກຕາ) | ການກວດກູ້ (ເຮັກຕາ) |
|---|---|---|---|---|
| ຫຼວງພະບາງ | 40 | 12 | 300 | 105 |
| ຫົວພັນ | 50 | 12 | 500 | 140 |
| ຊຽງຂວາງ | 50 | 15 | 1,200 | 731 |
| ຄຳມ່ວນ | 59 | 12 | 500 | 351 |
| ສະຫວັນນະເຂດ | 50 | 12 | 900 | 665 |
| ສາລະວັນ | 60 | 12 | 500 | 381 |
| ເຊກອງ | 12 | 12 | 300 | 242 |
| ຈຳປາສັກ | 50 | 15 | 450 | 210 |
| ອັດຕະປື | 50 | 12 | 300 | 388 |
| **ລວມ** | **421** | **114** | **4,950** | **3,213** |

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 119 | 71 | 7 | 1 | 1,003 | 274 | 2 | 0 |
| ລວມ | 1,477 | | | | | | |

## ຕົວເລກຜົນສຳເລັດໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງ ຄກລ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງ ການແກ້ໄຂລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ແຂວງ / ເມືອງ |
|---|---|
| ການສຳຫຼວດບໍ່ແມ່ນວິຊາການ | ■ ແຂວງຫຼວງພະບາງ: ເມືອງຫຼວງພະບາງ, ເມືອງປາກອູ, ເມືອງນ້ຳບາກ, ເມືອງງອຍ, ເມືອງພູຄູນ<br>■ ແຂວງຫົວພັນ: ເມືອງຊຳເໜືອ, ເມືອງວຽງທອງ, ເມືອງວຽງໄຊ<br>■ ແຂວງຊຽງຂວາງ: ເມືອງແປກ, ເມືອງຄຳ, ເມືອງພູກູດ<br>■ ແຂວງຄຳມ່ວນ: ເມືອງມະຫາໄຊ, ເມືອງບົວລະພາ, ເມືອງໄຊບົວທອງ<br>■ ແຂວງສະຫວັນນະເຂດ: ເມືອງເຊໂປນ, ເມືອງນອງ, ເມືອງທ່າພັງທອງ, ເມືອງວິລະບູລີ, ເມືອງທ່າພະລານໄຊ<br>■ ແຂວງສາລະວັນ: ເມືອງສາລະວັນ, ເມືອງຕະໂອ້ຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງເລົ່າງາມ, ເມືອງສະມ້ວຍ<br>■ ແຂວງເຊກອງ: ເມືອງກະລຶມ, ເມືອງດັກຈຶງ, ເມືອງທ່າແຕງ<br>■ ແຂວງຈຳປາສັກ: ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ, ເມືອງມຸນລະປະໂມກ<br>■ ແຂວງອັດຕະປື: ເມືອງໄຊເສດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ, ເມືອງຊານໄຊ, ເມືອງພູວົງ |
| ການສຳຫຼວດວິຊາການ | ■ ແຂວງຫຼວງພະບາງ: ເມືອງນ້ຳບາກ, ເມືອງງອຍ, ເມືອງປາກເຊັງ, ເມືອງພູຄູນ<br>■ ແຂວງຫົວພັນ: ເມືອງຊຳເໜືອ, ເມືອງວຽງທອງ, ເມືອງວຽງໄຊ<br>■ ແຂວງຊຽງຂວາງ: ເມືອງແປກ, ເມືອງຄຳ, ເມືອງພູກູດ<br>■ ແຂວງຄຳມ່ວນ: ເມືອງມະຫາໄຊ, ເມືອງຍົມມະລາດ, ເມືອງບົວລະພາ, ເມືອງໄຊບົວທອງ<br>■ ແຂວງສະຫວັນນະເຂດ: ເມືອງພິນ, ເມືອງເຊໂປນ, ເມືອງນອງ, ເມືອງທ່າພັງທອງ, ເມືອງວິລະບູລີ, ເມືອງທ່າພະລານໄຊ<br>■ ແຂວງສາລະວັນ: ເມືອງສາລະວັນ, ເມືອງຕະໂອ້ຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງເລົ່າງາມ, ເມືອງສະມ້ວຍ<br>■ ແຂວງເຊກອງ: ເມືອງລະມາມ, ເມືອງກະລຶມ, ເມືອງດັກຈຶງ, ເມືອງທ່າແຕງ<br>■ ແຂວງຈຳປາສັກ: ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ, ເມືອງມຸນລະປະໂມກ<br>■ ແຂວງອັດຕະປື: ເມືອງໄຊເສດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ, ເມືອງຊານໄຊ, ເມືອງພູວົງ |

| | |
|---|---|
| ການກວດກູ້ ລບຕ | ■ ແຂວງຫຼວງພະບາງ: ເມືອງຫຼວງພະບາງ, ເມືອງປາກອູ, ເມືອງນ້ຳບາກ, ເມືອງງອຍ.<br>■ ແຂວງຫົວພັນ: ເມືອງຊຳເໜືອ, ເມືອງວຽງທອງ, ເມືອງວຽງໄຊ<br>■ ແຂວງຊຽງຂວາງ: ເມືອງແປກ, ເມືອງຄຳ, ເມືອງພູກູດ<br>■ ແຂວງຄຳມ່ວນ: ເມືອງມະຫາໄຊ, ເມືອງຍົມມະລາດ, ເມືອງບົວລະພາ, ເມືອງໄຊບົວທອງ<br>■ ແຂວງສະຫວັນນະເຂດ: ເມືອງອາດສະພັງທອງ, ເມືອງພິນ, ເມືອງເຊໂປນ, ເມືອງນອງ, ເມືອງທ່າພັງທອງ, ເມືອງວິລະບູລີ, ເມືອງທ່າພະລານໄຊ<br>■ ແຂວງສາລະວັນ: ເມືອງຕະໂອ້ຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງເລົ່າງາມ, ເມືອງສະມ້ວຍ<br>■ ແຂວງເຊກອງ: ເມືອງລະມາມ, ເມືອງກະລຶມ, ເມືອງດັກຈຶງ, ເມືອງທ່າແຕງ<br>■ ແຂວງຈຳປາສັກ: ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ<br>■ ແຂວງອັດຕະປື: ເມືອງໄຊເສດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ, ເມືອງຊານໄຊ, ເມືອງພູວົງ |
| ການທຳລາຍ ລບຕ ເຄື່ອນທີ່ | ■ ແຂວງຫຼວງພະບາງ: ເມືອງຫຼວງພະບາງ, ເມືອງປາກອູ, ເມືອງນ້ຳບາກ, ເມືອງງອຍ, ເມືອງປາກເຊັງ, ເມືອງໂພນໄຊ, ເມືອງພູຄູນ<br>■ ແຂວງຫົວພັນ: ເມືອງຊຳເໜືອ, ເມືອງວຽງທອງ, ເມືອງວຽງໄຊ<br>■ ແຂວງຊຽງຂວາງ: ເມືອງແປກ, ເມືອງຄຳ, ເມືອງພູກູດ<br>■ ແຂວງຄຳມ່ວນ: ເມືອງມະຫາໄຊ, ເມືອງບົວລະພາ, ເມືອງໄຊບົວທອງ<br>■ ແຂວງສະຫວັນນະເຂດ: ເມືອງພິນ, ເມືອງເຊໂປນ, ເມືອງນອງ, ເມືອງທ່າພັງທອງ, ເມືອງວິລະບູລີ, ເມືອງທ່າພະລານໄຊ<br>■ ແຂວງສາລະວັນ: ເມືອງຕະໂອ້ຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງເລົ່າງາມ, ເມືອງສະມ້ວຍ<br>■ ແຂວງເຊກອງ: ເມືອງລະມາມ, ເມືອງກະລຶມ, ເມືອງດັກຈຶງ, ເມືອງທ່າແຕງ<br>■ ແຂວງຈຳປາສັກ: ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ, ເມືອງມຸນລະປະໂມກ<br>■ ແຂວງອັດຕະປື: ເມືອງໄຊເສດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ, ເມືອງຊານໄຊ, ເມືອງພູວົງ |
| ການໂຄສະນາສຶກສາຄວາມສ່ຽງໄພຂອງ ລບຕ | ■ ແຂວງຫຼວງພະບາງ: ເມືອງຫຼວງພະບາງ, ເມືອງປາກອູ, ເມືອງນ້ຳບາກ, ເມືອງງອຍ, ເມືອງປາກເຊັງ, ເມືອງໂພນໄຊ, ເມືອງພູຄູນ<br>■ ແຂວງຫົວພັນ: ເມືອງຊຳເໜືອ, ເມືອງວຽງທອງ, ເມືອງວຽງໄຊ<br>■ ແຂວງຊຽງຂວາງ: ເມືອງແປກ, ເມືອງຄຳ, ເມືອງພູກູດ<br>■ ແຂວງຄຳມ່ວນ: ເມືອງມະຫາໄຊ, ເມືອງໜອງບົກ, ເມືອງຫີນບູນ, ເມືອງບົວລະພາ, ເມືອງໄຊບົວທອງ<br>■ ແຂວງສະຫວັນນະເຂດ: ເມືອງພິນ, ເມືອງເຊໂປນ, ເມືອງນອງ, ເມືອງທ່າພັງທອງ, ເມືອງວິລະບູລີ, ເມືອງທ່າພະລານໄຊ<br>■ ແຂວງສາລະວັນ: ເມືອງສາລະວັນ, ເມືອງຕະໂອ້ຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງເລົ່າງາມ, ເມືອງສະມ້ວຍ<br>■ ແຂວງເຊກອງ: ເມືອງເລົ່າງາມ, ເມືອງກະລຶມ, ເມືອງດັກຈຶງ, ເມືອງທ່າແຕງ<br>■ ແຂວງຈຳປາສັກ: ເມືອງປາກເຊ, ເມືອງຊະນະສົມບູນ, ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ, ເມືອງສຸຄຸມມາ, ເມືອງມຸນລະປະໂມກ<br>■ ແຂວງອັດຕະປື: ເມືອງໄຊເສດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ, ເມືອງຊານໄຊ, ເມືອງພູວົງ |

| | |
|---|---|
| ການກວດກາຄຸນນະພາບ | ■ ແຂວງຫຼວງພະບາງ: ເມືອງຫຼວງພະບາງ, ເມືອງປາກອູ, ເມືອງນໍ້າບາກ, ເມືອງງອຍ<br>■ ແຂວງຫົວພັນ: ເມືອງຊຳເໜືອ, ເມືອງວຽງໄຊ, ເມືອງຊອນ<br>■ ແຂວງຊຽງຂວາງ: ເມືອງແປກ<br>■ ແຂວງຄຳມ່ວນ: ເມືອງມະຫາໄຊ, ເມືອງບົວລະພາ, ເມືອງໄຊບົວທອງ<br>■ ແຂວງສະຫວັນນະເຂດ: ເມືອງພິນ, ເມືອງເຊໂປນ, ເມືອງນອງ, ເມືອງວິລະບູລີ<br>■ ແຂວງສາລະວັນ: ເມືອງສາລະວັນ, ເມືອງຕະໂອ້ຍ, ເມືອງຕຸ້ມລານ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງເລົ່າງາມ, ເມືອງສະມ້ວຍ<br>■ ແຂວງເຊກອງ: ເມືອງລະມາມ, ເມືອງກະລືມ, ເມືອງດັກຈຶງ, ເມືອງທ່າແຕງ<br>■ ແຂວງຈຳປາສັກ: ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ<br>■ ແຂວງອັດຕະປື: ເມືອງໄຊເສດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ, ເມືອງຊານໄຊ, ເມືອງພູວົງ |

## ລາຍງານການເງິນ

**ປະເທດຜູ້ໃຫ້ທຶນ ທີ່ປະກອບທຶນໃຫ້ ໃນປີ 2020**
**ສັງລວມທຶນທີ່ໄດ້ຮັບ (ໂດລາ ສຫລ)**
**ວັນທີ 1 ມັງກອນ - 31 ທັນວາ 2020**

| **ແຫຼ່ງທຶນ** | **ທຶນທີ່ກຳນົດກິດຈະກຳ** | **ທຶນທີ່ບໍ່ກຳນົດກິດຈະກຳ** | **ລວມ** | **%** |
|---|---:|---:|---:|---:|
| **ສປຊ** | | | | |
| ນິວຊີແລນ | 2,553,004.00 | | 2,553,004.00 | 23% |
| ໄອແລນ | | 296,912.00 | 296,912.00 | 3% |
| ລຸກຊຳບວກ | | 89,074.00 | 89,074.00 | 1% |
| ການາດາ | 38,200.00 | | 38,200.00 | 0% |
| | 2,591,204.00 | 385,986.00 | 2,977,190.00 | 26% |
| **ຮ່ວມມືສອງຝ່າຍ** | | | | |
| ເຫັດທູາເທັກ (ສ. ອາເມລິກາ) | 5,887,448.83 | | 5,887,448.83 | 52% |
| ອົງການຈິກ (ຍີ່ປຸ່ນ) | 1,630,953.12 | | 1,630,953.12 | 14% |
| ອົງການເອັນພີເອ | 444,247.37 | | 444,247.37 | 4% |
| ອົງການເວີວິດເຕົ້ານາຍ | 235,413.00 | | 235,413.00 | 2% |
| ກອງທຶນຄາວເຕີພາດ | 63,155.37 | | 63,155.37 | 1% |
| ອົງການເຈມັດ | 4,100.00 | | 4,100.00 | |
| | 8,265,317.69 | - | 8,265,317.69 | 73% |
| **ທຶນສົມທົບຂອງລັດຖະບານລາວ ແລະ ອື່ນໆ** | | | | |
| ລັດຖະບານລາວ | 20,129.57 | - | 20,129.57 | 0% |
| ອື່ນໆ - ຄ່າທຳນຽມຝຶກອົບຮົມ, ການຂາຍເຄື່ອງທີ່ລະນຶກຢູ່ຫ້ອງວາງສະແດງ ລບຕ ແຂວງຫຼວງພະບາງ | | 1,741.14 | 1,741.14 | 0% |
| | 20,129.57 | 1,741.14 | 21,870.71 | 0% |
| **ລວມ** | **10,876,651.26** | **387,727.14** | **11,264,378.40** | **100%** |
| **%** | **97%** | **3%** | **100%** | |

**ລາຍຈ່າຍຂອງໂຄງການ (ຕາມແຜນການປີ) ທຽບໃສ່ ລາຍຈ່າຍຕົວຈິງ ແຍກຕາມປະເທດຜູ້ທຶນ (ໂດລາ ສຫລ)**
**ວັນທີ 1 ມັງກອນ – 31 ທັນວາ 2020**

| | ຄາດຄະເນລາຍຈ່າຍ (ຕາມແຜນການປີ) - ສະບັບເບື້ອງຕົ້ນ | ຄາດຄະເນລາຍຈ່າຍ (ຕາມແຜນການປີ) - ສະບັບປັບປຸງໃໝ່ | ລາຍຈ່າຍຕົວຈິງ | ລາຍຈ່າຍຕົວຈິງ / ຄາດຄະເນລາຍຈ່າຍ (%) |
|---|---|---|---|---|
| **ທຶນຜ່ານ ສປຊ – ທຶນທີ່ ສປຊ ບໍລິຫານຄຸ້ມຄອງເອງ** | | | | |
| ນິວຊີແລນ | 1,275,995 | 1,376,070 | 1,352,426.54 | 98% |
| ໄອແລນ | 182,865 | 182,865 | 134,138.98 | 10% |
| ການາດາ | 38,081 | 38,081 | 36,000.02 | 3% |
| ອົດສະຕາລີ | - | 30,428 | 30,839.36 | 2% |
| ລຸກຊຳບວກ | 28,924 | 62,452 | 40,803.44 | 3% |
| **ທຶນຜ່ານ ສປຊ - ຫ່ວງທຶນ ແຫຼກ 2** | - | | (15,739.56) | -1% |
| | 1,525,864 | 1,689,896 | 1,578,468.78 | 93% |
| **ທຶນຮ່ວມມືສອງຝ່າຍ** | | | | |
| ເຫັດຫຼາເທັກ (ສ. ອາເມລິກາ) | 4,429,056 | 6,114,915 | 5,465,150.93 | 89% |
| ອົງການຈີກ (ຍີ່ປຸ່ນ) | 2,284,590 | 2,194,336 | 1,731,630.37 | 79% |
| ອົງການເອັນພີເອ | 313,453 | 459,832 | 440,696.57 | 96% |
| ອົງການເວີວິດເຕົ້ານາຍ | 185,965 | 235,413 | 220,178.52 | 94% |
| ກອງທຶນຄາວເຕີພາດຟັນ | - | | 27,798.04 | |
| ອົງການໄອໂຕ ເພື່ອການສະໜັບສະໜູນ | | 4,038 | 4,038.00 | 100% |
| | 7,213,064 | 9,008,534 | 7,889,492.43 | 88% |
| ທຶນສົມທົບຂອງລັດຖະບານ ລາວ ແລະ ອື່ນໆ | | | | |
| ອື່ນໆ | - | | 1,601.58 | |
| | - | | 1,601.58 | |
| | | | | |
| ທຶນທີ່ບໍ່ພຽງພໍ | 4,390,106 | 578,824 | | 0% |
| | | | | |
| **ລວມ** | **13,129,034** | **11,277,254** | **9,469,562.79** | **84%** |

MAG saves lives builds futures

# ອົງການໃຫ້ຄຳປຶກສາ ກ່ຽວກັບການແກ້ໄຂລະເບີດຝັງດິນ (ແມັກ)

## ກິດຈະກຳໃນປີ 2020

ໃນປີ 2020, ອົງການແມັກ ໄດ້ສືບຕໍ່ຈັດຕັ້ງປະຕິບັດການແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ ຢູ່ 2 ແຂວງທີ່ມີ ລບຕ ຕົກຄ້າງໜັກໜ່ວງທີ່ສຸດ ຄື: ແຂວງຊຽງຂວາງ ແລະ ຄຳມ່ວນ. ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ປະກອບມີ:

- **ການສຳຫຼວດບໍ່ແມ່ນແບບວິຊາການ**: ທີມງານພົວພັນປະສານງານ ໄດ້ດຳເນີນການປະຊຸມພົບປະຢູ່ບັນດາບ້ານຕ່າງໆ ເພື່ອເກັບກຳຂໍ້ມູນ ແລະ ສຳພາດບັນດາຄົວເຮືອນ ເພື່ອນຳມາກຳນົດພື້ນທີ່ ລບຕ ຕົກຄ້າງຢູ່ບັນດາຊຸມຊົນ. ທີມງານພົວພັນປະສານງານ ຈະດຳເນີນການລົງສືບສວນເກັບກຳຂໍ້ມູນຢູ່ບັນດາບ້ານແຕ່ຕົ້ນຈົນຈົບ ແລະ ຈຸດຫຼັກຖານ ລບຕ ໄດ້ຖືກກຳນົດອອກມາ ແລ້ວສົ່ງຕໍ່ສູ່ຂະບວນການສຳຫຼວດແບບວິຊາການ.
- **ການສຳຫຼວດແບບວິຊາການ**: ອົງການແມັກ ຈະສືບດຳເນີນການສຳຫຼວດແບບວິຊາການ ຕາມຈຸດຫຼັກຖານ ລບຕ ທີ່ໄດ້ຈາກການສຳຫຼວດບໍ່ແມ່ນແບບວິຊາການ ເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ.
- **ການກວດກູ້ ລບຕ**: ອົງການແມັກ ຈະຈັດບູລິມະສິດກວດກູ້ພື້ນທີ່ ລບຕ ຕົກຄ້າງ ແລ້ວສົ່ງມອບພື້ນທີ່ໆປອດໄພຄືນໃຫ້ຊຸມຊົນ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳ.
- **ການທຳລາຍ ລບຕ**: ອົງການແມັກ ໄດ້ດຳເນີນການທຳລາຍ ລບຕ ຢູ່ບັນດາຊຸມຊົນຕ່າງໆ ເພື່ອຫຼຸດຜ່ອນຄວາມສ່ຽງຈາກ ລບຕ. ການທຳລາຍ ປະກອບມີ ການທຳລາຍລະເບີດລູກຫວ່ານ, ລະເບີດບົມໃຫຍ່ ແລະ ສິ່ງເສດເຫຼືອປາງສົງຄາມ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: ອົງການແມັກ ໄດ້ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ບັນດາຊຸມຊົນຕ່າງໆ.

## ຜົນສຳເລັດຕົ້ນຕໍ ໃນປີ 2020

ໂດຍທຶນສະໜັບສະໜູນຂອງລັດຖະບານ ສ. ອາເມລິກາ ແລະ ລັດຖະບານນອກແວ ແລະ ທຶນຈຳນວນໜຶ່ງຈາກປະເທດຜູ້ໃຫ້ທຶນອື່ນໆ, ອົງການແມັກ ໄດ້ສືບຕໍ່ດຳເນີນກິດຈະກຳແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳຢູ່ແຂວງຄຳມ່ວນ ແລະ ຊຽງຂວາງ. ຜົນສຳເລັດຕົ້ນຕໍໃນປີ 2020 ປະກອບມີ:

- **ການສຳຫຼວດບໍ່ແມ່ນແບບວິຊາການ**: 55 ບ້ານ ໄດ້ຜ່ານການສຳຫຼວດ ຢູ່ແຂວງຄຳມ່ວນ ແລະ ຊຽງຂວາງ.
- **ການສຳຫຼວດແບບວິຊາການ**: ເນື້ອທີ່ດິນ 104,910 ເຮັກຕາ ໄດ້ຖືກກຳນົດເປັນພື້ນທີ່ ລບຕ ຕົກຄ້າງ.
- **ການກວດກູ້ ລບຕ**: ເນື້ອທີ່ດິນ 907 ເຮັກຕາ ໄດ້ຖືກກວດກູ້ ແລະ ສົ່ງມອບຄືນໃຫ້ຊຸມຊົນ. ການກວດກູ້ປະກອບມີເນື້ອທີ່ດິນໂຄງການພັດທະນາຕ່າງໆ ເຊັ່ນ: ໂຮງຮຽນ ແລະ ການກໍ່ສ້າງຖະໜົນຫົນທາງ ເປັນຕົ້ນ.



- **ການທຳລາຍ ລບຕ**: ລບຕ 20,499 ໜ່ວຍ ຖືກທຳລາຍ (85% ແມ່ນລະເບີດລູກຫວ່ານ) ທີ່ຜ່ານຂະບວນການຕ່າງໆ (ການສຳຫຼວດແບບວິຊາການ, ການກວດກູ້ ແລະ ການທຳລາຍ ລບຕ ແບບເຄື່ອນທີ່).
- **ການທຳລາຍ ລບຕ ແບບເຄື່ອນທີ່**: ອົງການແມັກ ໄດ້ຕອບຮັບການທຳລາຍ ລບຕ ແບບເຄື່ອນທີ່ ຈຳນວນ 2,327 ເທື່ອຄັ້ງ ສາມາດທຳລາຍ ລບຕ ໄດ້ 13,841 ໜ່ວຍ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: ອົງການແມັກ ໄດ້ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ບັນດາຊຸມຊົນຕ່າງໆ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: ອົງການແມັກ ໄດ້ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ 164 ເທື່ອຄັ້ງ, ມີຜູ້ໄດ້ຮັບຜົນປະໂຫຍດ 4,408 ຄົນ (2,300 ຜູ້ຍິງ ແລະ 2,108 ຜູ້ຊາຍ).

## ວຽກຈຸດສຸມ ໃນປີ 2021

ອົງການແມັກຈະເພີ່ມກຳລັງຂຶ້ນຢູ່ແຂວງຊຽງຂວາງໂດຍທຶນສະໜັບສະໜູນຂອງຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ ຂອງ ກະຊວງການຕ່າງປະເທດ ສ. ອາເມລິກາ ລວມທັງໝົດຈະເປັນ 17 ທີມກວດກູ້ ແລະ 2 ທີມທຳລາຍ ລບຕ ແບບເຄື່ອນທີ່. ນອກຈາກນັ້ນ, ອົງການແມັກ ຈະສືບຕໍ່ຊອກຫາແຫຼ່ງທຶນສະໜັບສະໜູນຈາກປະເທດຜູ້ໃຫ້ທຶນອື່ນໆ ເພື່ອຮັກສາການປະຕິບັດງານຢູ່ ສປປ ລາວ. ອົງການແມັກ ໄດ້ຮັບທຶນສະໜັບສະໜູນໃໝ່ຈາກລັດຖະບານຍີ່ປຸ່ນ ໃນປີ 2021 ເພື່ອສືບຕໍ່ປະຕິບັດງານຢູ່ແຂວງຄຳມ່ວນ.

ຈຸດປະສົງຂອງອົງການແມັກ ແລະ ບູລິມະສິດຕົ້ນຕໍໃນປີ 2021 ແມ່ນຈະສືບຕໍ່ກວດກູ້ພື້ນທີ່ ລບຕ ຕົກຄ້າງສູງ ແລະ ນຳໃຊ້ທຶນເຂົ້າໃນການປະຕິບັດງານໃຫ້ມີປະສິດທິຜົນ. ອົງການແມັກ ຈະສືບຕໍ່ດຳເນີນການສຳຫຼວດແບບວິຊາການ ແລະ ກວດກູ້ ລບຕ ຢູ່ແຂວງຊຽງຂວາງ ແລະ ຄຳມ່ວນ. ນອກຈາກນັ້ນ, ອົງການແມັກ ຈະສືບຕໍ່ສຸມໃສ່ເພີ່ມການປະຕິບັດງານໃຫ້ມີປະສິດທິພາບ

ແລະ ປະສິດທິຜົນ ເພື່ອກວດກູ້ພື້ນທີ່ ລບຕ ຕົກຄ້າງສູງ ໃຫ້ແກ່ບັນດາຊຸມຊົນຕ່າງໆ ແລະ ຈຸດປະສົງການພັດທະນາຂອງບັນດາຄູ່ຮ່ວມພັດທະນາອື່ນໆ.

ອົງການແມັກ ຈະສືບຕໍ່ສຸມໃສ່ເຮັດວຽກຢ່າງໃກ້ສິດກັບລັດຖະບານ ສປປ ລາວ ແລະ ຊຸມຊົນຕ່າງໆ ເພື່ອກໍານົດບູລິມະສິດວຽກງານແກ້ໄຂບັນຫາ ລບຕ ໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ ແລະ ຊອກຫາຍຸດທະສາດຂອງຄູ່ຮ່ວມງານ ແລະ ຮ່ວມມືກັບອົງການຈັດຕັ້ງອື່ນໆ ເພື່ອເຮັດໃຫ້ການກວດກູ້ ລບຕ ຮັບໃຊ້ວຽກງານດ້ານຕ່າງໆຢ່າງຖືກຕ້ອງ.

ອົງການແມັກ ຍັງຈະສຸມໃສ່ຫຼັກການທາງດ້ານບົດບາດຍິງ-ຊາຍ, ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ ແນໃສ່ປະຕິບັດບັນດາຫຼັກການຂ້າງເທິງ ໃຫ້ເຊື່ອມສານເຂົ້າໃນບັນດາແຜນງານ ແລະ ການປະຕິບັດງານຕົວຈິງ ເຂົ້າໃນການການຈັດຕັ້ງປະຕິບັດຍຸດທະສາດ ແລະ ຄໍາແນະນໍາຕ່າງໆ ຈາກຜົນການປະເມີນທີ່ຜ່ານມາ.

## ກໍລະນີສຶກສາ

ອົງການແມັກ ໄດ້ກວດກູ້ ລບຕ ຢູ່ບ້ານຄານຸ, ເມືອງບົວລະພາ, ແຂວງຄໍາມ່ວນ ແຕ່ເດືອນກຸມພາ ເຖິງ ເດືອນພຶດສະພາ 2019 ຫຼັງຈາກນັ້ນ, ອໍານາດການປົກຄອງທ້ອງຖິ່ນ ໄດ້ນໍາໃຊ້ພື້ນທີ່ດັ່ງກ່າວເຂົ້າໃນການກໍ່ສ້າງລະບົບຊົນລະປະທານ. ໂຄງການດັ່ງກ່າວໄດ້ສົ່ງຜົນກະທົບທາງບວກຢ່າງຫຼວງຫຼາຍໃຫ້ແກ່ຊຸມຊົນ ເຮັດໃຫ້ມີການສະໜອງການຈ້າງງານເຂົ້າໃນລະດູການທໍາອິດຂອງການເກັບກ່ຽວເຂົ້າໃນເດືອນທີ່ຈະມາຮອດນີ້.

ທ້າວ ຕຸ່ນ, ນາຍບ້ານ ໄດ້ບອກກັບອົງການແມັກ ວ່າ "ກ່ອນໜ້ານີ້ ພວກເຮົາເຮັດນາຂ້ອນຂ້າງມີຄວາມຊັກຊ້າ ແລະ ສາມາດຕົກກ້າໄດ້ຢູ່ບາງພື້ນທີ່ນ້ອຍໃດໜຶ່ງເທົ່ານັ້ນ. ເຄີຍມີເດັກນ້ອຍຊາຍ 2 ຄົນ ແລະ ເດັກຍິງ 1 ຄົນ ອາຍຸ 12 ປີ ມາຂຸດຊອກຫາໂຕກົບຢູ່ທີ່ນີ້ ແລະ ຂຸດຖືກລະເບີດ ເຮັດໃຫ້ເຂົາເຈົ້າເສຍຊີວິດທັງໝົດ. ເຫດການນີ້ ແມ່ນເກີດຂຶ້ນ 10 ປີກ່ອນນີ້ ແຕ່ພວກເຮົາ ກໍ່ບໍ່ເຄີຍລືມເຫດການດັ່ງກ່າວນີ້ ແລະ ກໍ່ຍັງມີຄວາມຢ້ານກົວຢູ່ຕະຫຼອດເວລາ. ກ່ອນໜ້ານີ້, ພວກເຮົາມີນາເຂົ້າ 9 ບ່ອນ ແລະ ປະຈຸບັນນີ້ 60 ຕອນແລ້ວ ທີ່ມີ ລບຕ ຕົກຄ້າງ.

ກ່ອນໜ້ານີ້ ພວກເຮົາມີພື້ນທີ່ນາ 9 ບ່ອນ ມີ ລບຕ ຕົກຄ້າງ ແຕ່ວາດຽວນີ້ ພວກເຮົາ ມີພື້ນທີ່ນາ 60 ບ່ອນ ມີຄວາມປອດໄພຈາກ ລບຕ ແລ້ວ. ຍ້ອນພວກເຮົາມີລະບົບຊົນລະປະທານ ຈຶ່ງເຮັດໃຫ້ສາມາດເຮັດນາໄດ້ 2 ຄັ້ງຕໍ່ປີ.

ພວກເຮົາ ໄດ້ເລີ່ມປູກໃນເດືອນພະຈິກ ແລະ ຮອດເດືອນເມສາ ພວກເຮົາ ຈະສາມາດເລີ່ມເກັບກ່ຽວລະດູການທໍາອິດໄດ້. ໃນອາດີດ, ພື້ນທີ່ດັ່ງກ່າວ ສາມາດນໍາໃຊ້ໄດ້ບາງບ່ອນ ແລະ ສາມາດເຮັດນາໄດ້ພຽງໜ້ອຍດຽວ. ປະຈຸບັນນີ້, ພວກເຮົາ ສາມາດໄດ້ເຂົ້າຫຼາຍຂຶ້ນກວ່າເກົ່າ ແລະ ຄາດວ່າ ຈະສາມາດໄດ້ເພີ່ມຂຶ້ນອີກຕື່ມໃນອະນາຄົດ. ພວກເຈົ້າ ຈະເຫັນໄດ້ວ່າ ປະຊາຊົນເຂດນີ້ ແມ່ນສຸມໃສ່ການເຮັດນາເປັນສ່ວນໃຫຍ່ ແລະ ມີຄວາມຫ້າວຫັນໃນການພັດທະນາພື້ນທີ່ດິນເຂົ້າໃນການປູກເຂົ້າ ແລະ ເຮັດສວນ.

ສິ່ງທີ່ພິເສດຫຼາຍກວ່ານີ້ ແມ່ນປະຊາຊົນເຂດນີ້ ເຮັດນາໂດຍບໍ່ຢ້ານກົວ ລບຕ. ພວກເຮົາຫວັງວ່າ ປີນີ້ ປະຊາຊົນ ຈະມີອາຫານພຽງພໍ ສາມາດນໍາເຂົ້າໄປຂາຍ ແລະ ມີເງິນຊື້ອຸປະກອນມາເຮັດນາໄດ້".

ມີ 5 ຄອບຄົວທີ່ເປັນເຈົ້າຂອງທີ່ດິນໃນເຂດນີ້ ແຕ່ວ່າ ມັນສົ່ງຜົນກະທົບໃຫ້ 32 ຄົວຄອບ ໃນບ້ານນີ້ ມີຜົນພອຍໄດ້ຮັບຜົນປະໂຫຍດໄປຕາມກັນ ຍ້ອນມີລະບົບຊົນລະປະທານ ເຮັດໃຫ້ແຕ່ລະຄອບຄົວສາມາດນໍາໃຊ້ນໍ້າເຂົ້ານາຂອງຕົນໄດ້ຢ່າງມີສິດສະເໝີພາບກັນ.

## ບຸກຄະລາກອນໃນປີ 2020

| ພະນັກງານປະຈໍາຫ້ອງການ | | | | ພະນັກງານປະຈໍາພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 73 | 55 | 1 | 2 | 506 | 280 | 5 | 0 |
| ລວມ | **922** | | | | | | |

## ຕົວເລກຜົນສໍາເລັດໃນປີ 2020

ລາຍລະອຽດຕົວເລກຜົນສໍາເລັດການປະຕິບັດງານຂອງອົງການ ແມັກ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສໍາເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານໃນປີ 2020

| ກິດຈະກໍາ | ເມືອງ/ແຂວງ |
|---|---|
| ການສໍາຫຼວດບໍ່ແມ່ນແບບວິຊາການ | ເມືອງບົວລະພາ / ແຂວງຄໍາມ່ວນ<br>ເມືອງຄໍາ, ຄູນ, ໜອງແຮດ, ຜາໄຊ / ແຂວງຊຽງຂວາງ |
| ການສໍາຫຼວດແບບວິຊາການ | ເມືອງບົວລະພາ, ຍົມມະລາດ / ແຂວງຄໍາມ່ວນ<br>ເມືອງຄໍາ, ຄູນ, ໜອງແຮດ, ແປກ, ຜາໄຊ, ພູກູດ / ແຂວງຊຽງຂວາງ |

| | |
|---|---|
| ການກວດກູ້ ລບຕ | ເມືອງບົວລະພາ, ຍົມມະລາດ / ແຂວງຄຳມ່ວນ<br>ເມືອງຄຳ, ຄູນ, ໜອງແຮດ, ແປກ, ຜາໄຊ, ພູກູດ / ແຂວງຊຽງຂວາງ |
| ການທຳລາຍ ລບຕ ເຄື່ອນທີ່ | ເມືອງບົວລະພາ, ຍົມມະລາດ / ແຂວງຄຳມ່ວນ<br>ເມືອງຄຳ, ຄູນ, ໜອງແຮດ, ແປກ, ຜາໄຊ, ພູກູດ / ແຂວງຊຽງຂວາງ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງບົວລະພາ / ແຂວງຄຳມ່ວນ<br>ເມືອງຄູນ, ຜາໄຊ / ແຂວງຊຽງຂວາງ |
| ການກວດກາຄຸນນະພາບ | ການກວດກາຄຸນນະພາບພາຍໃນ ຢູ່ ແຂວງຊຽງຂວາງ ແຂວງຄຳມ່ວນ |

## ການເງິນໃນປີ 2020

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການສຳຫຼວດ ລບຕ ຢູ່ແຂວງຊຽງຂວາງ, ສປປ ລາວ | 21/09/2018 | To 31/12/ 2021 | 21,097,248 ໂດລາ ສຫລ | 4,016,654 ແລະ 1,722,436 (ທຶນເພີ່ມຕື່ມ) | ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ ຂອງກະຊວງການຕ່າງປະເທດ ສ. ອາເມລິກາ |
| ໂຄງການກວດກູ້ ລບຕ ຢູ່ແຂວງຄຳມ່ວນ (ໄລຍະທີ II), ສປປ ລາວ | 22/12/2020 | To 31/03/2021 | 1,759,459 ໂດລາ ສຫລ | 1,218,292 ໂດລາ ສຫລ | ອົງການພັດທະນາສາກົນແຫ່ງລາດຊະອານາຈັກອັງກິດ |
| ໂຄງການເຊື່ອມສານວຽກງານການສຳຫຼວດ ແລະ ກວດກູ້ລະເບີດລູກຫວ່ານ ຢູ່ເມືອງບົວລະ ພາ, ແຂວງຄຳມ່ວນ (ໄລຍະ VI), ສປປ ລາວ | | To 31/07/2021 | 542,363 ໂດລາ ສຫລ | 160,258 ໂດລາ ສຫລ | ກະຊວງການຕ່າງປະເທດນ໋ອກແວ |
| ໂຄງການກວດກູ້ລະເບີດລູກຫວ່ານ ແລະ ລບຕ ຢູ່ຊຸມຊົນທຸກຍາກ ຢູ່ຈຸດສຸມພັດທະນາລັງຄັງ-ວັງມະເນີ, ເມືອງບົວລະພາ, ແຂວງຄຳມ່ວນ, ສປປ ລາວ | 24/03/2021 | To 31/08/2021 | 272,728 ໂດລາ ສຫລ | 64,051 ໂດລາ ສຫລ | ມູນນິທິຟູ້ແມນ |
| ໂຄງການກວດກູ້ ລບຕ ເພື່ອສະໜັບສະໜູນການພັດທະນາຊຸມຊົນ ຢູ່ເມືອງຍົມມະລາດ, ແຂວງຄຳມວນ, ສປປ ລາວ | 19/07/2019 | To 31/08/2020 | 500,000 ໂດລາ ສຫລ | 261,668 ໂດລາ ສຫລ | ຄະນະກຳມະການບັນເທົາທຸກຂອງສະຫະລັດເມໂທດິດ |

| ທຶນໂດຍກົງ ທີ່ໄດ້ຮັບໃນປີ 2020 (ໂດລາ ສຫລ): 6,108,359 ໂດລາ ສຫລ | |
|---|---|
| ລາຍລະອຽດລາຍຈ່າຍໂດຍກົງ ໃນປີ 2020 (ໂດລາ ສຫລ) | |
| **ລາຍລະອຽດ** | **ຈຳນວນ** |
| ເງິນເດືອນພະນັກງານ | 3,196,409 |
| ລາຍຈ່າຍປະຕິບັດງານ: | |
| - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 622 |
| - ການສຳຫຼວດ ແລະ ກວດກູ້ ລບຕ | 1,476,347 |
| ລາຍຈ່າຍຈັດຊື້ວັດຖຸອຸປະກອນ | 1,223,545 |
| **Total** | **5,896,923** |

| ທຶນທາງອ້ອມ ທີ່ໄດ້ຮັບໃນປີ 2020 (ໂດລາ ສຫລ): 1,335,000 ໂດລາ ສຫລ | |
|---|---|
| ລາຍລະອຽດລາຍຈ່າຍທາງອ້ອມ ໃນປີ 2020 (ໂດລາ ສຫລ) | |
| **ລາຍລະອຽດ** | **ຈຳນວນ** |
| ເງິນເດືອນພະນັກງານ | 1,035,023 |
| ຈັດຊື້ວັດຖຸອຸປະກອນ | 236,405 |
| **ລວມ** | **1,271,428** |

### ປະເທດຜູ້ໃຫ້ທຶນໃນປີ 2020 (ໂດລາ ສຫລ)

| **ຜູ້ໃຫ້ທຶນ** | **ຈຳນວນ** |
|---|---|
| ລັດຖະບານ ສ. ອາເມລິກາ - ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ, ກະຊວງການຕາງປະເທດ ສ. ອາເມລິກາ | 5,739,090 |
| ຫ້ອງການສາກົນ ແລະ ການພັດທະນາຕ່າງປະເທດ | 1,218,292 |
| ກະຊວງການຕ່າງປະເທດນໍອກແວ | 160,258 |
| ຄະນະກຳມະ ການບັນເທົາທຸກ ຂອງສະຫະລັດເມໂທດິດ | 261,668 |
| ມູນນິທິຟູີແມນ | 64,051 |
| **ລວມ** | **7,443,359** |

# ອົງການເອັນພີເອ

## ກິດຈະກຳໃນປີ 2020

ອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ (ເອັນພີເອ) ໄດ້ດຳເນີນ 5 ກິດຈະກຳຕົ້ນຕໍ ໃນປີ 2020 ປະກອບມີ:

- ການສຳຫຼວດຊອກຫາລະເບີດລູກຫວ່ານ: ອົງການເອັນພີເອ ນຳໃຊ້ທີມສຳຫຼວດ 24 ທີມ ເພື່ອດຳເນີນການສຳຫຼວດຊອກຫາລະເບີດລູກຫວ່ານ ຢູ່ແຂວງອັດຕະປື, ຈຳປາສັກ, ສາລະວັນ ແລະ ເຊກອງ.

- ການກວດກູ້ພື້ນທີ່ ລບຕ ຕົກຄ້າງ: ອົງການເອັນພີເອ ນຳໃຊ້ທີມກວດກູ້ 9 ທີມ ເພື່ອດຳເນີນການກວດກູ້ ລບຕ ຕົກຄ້າງ ຢູ່ແຂວງອັດຕະປື, ຈຳປາສັກ, ສາລະວັນ ແລະ ເຊກອງ. ອົງການເອັນພີເອ ມີທີມງານກວດກູ້ຄຸນນະພາບ 1 ທີມ ເພື່ອນຳໃຊ້ເຂົ້າໃນການກວດກາຄຸນນະພາບວຽກງານການສຳຫຼວດ ແລະ ກວດກູ້ ລບຕ.

- ການສະໜັບສະໜູນ ຄກລ: ອົງການເອັນພີເອ ໄດ້ສະໜອງປະສົບການໃນການຕິດຕາມ ແລະ ການຝຶກອົບຮົມໃຫ້ພະນັກງານຂອງ ຄກລ ຢູ່ແຂວງຫຼວງພະບາງ ພ້ອມທັງ ໃຫ້ການສະໜັບສະໜູນເງິນເດືອນ ແລະ ວັດຖຸອຸປະກອນໃຫ້ພະນັກງານ ຄກລ (ພະນັກງານພາກສະໜາມ ແລະ ພະນັກງານຝ່າຍສະໜັບສະໜູນ).

- ສະໜັບສະໜູນໜ່ວຍງານຄຸ້ມຄອງຖານຂໍ້ມູນ ລບຕ ຂອງຫ້ອງການ ຄຊກລ: ອົງການເອັນພີເອ ໄດ້ສະໜອງການສະໜັບສະໜູນໜ່ວຍງານຄຸ້ມຄອງຖານຂໍ້ມູນ ລບຕ ຂອງຫ້ອງການຄຊກລ ໂດຍທຶນສະໜັບສະໜູນຂອງລັດຖະບານລາດຊະອານາຈັກອັງກິດ ເພື່ອສ້າງຂີດຄວາມສາມາດໃຫ້ຫ້ອງການ ຄຊກລ (ສິ້ນສຸດໃນເດືອນ ມີນາ 2020) ແລະ ໄດ້ສືບຕໍ່ສະໜັບສະໜູນພັດທະນາມາດຕະຖານ ແລະ ລະບົບຖານຂໍ້ມູນ ລບຕ ທີ່ກ່ຽວຂ້ອງ ພ້ອມທັງ ສະໜອງການຝຶກອົບຮົມ.

## ຜົນສຳເລັດຕົ້ນຕໍ ໃນປີ 2020

ໃນປີ 2020, ອົງການເອັນພີເອ ໄດ້ດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ເຄີຍມີການສູ້ຮົບ ຢູ່ໃນ 4 ແຂວງ ສາມາດບັນລຸການກວດກູ້ໄດ້ 257 ເຮັກຕາ ຫຼື ຫຼື່ນຄາດໝາຍ 65% ທຽບໃສ່ແຜນການປີ ແລະ ພາຍໃນທ້າຍປີ 2020 ສາມາດກວດກູ້ ລບຕ ອອກຈາກພື້ນທີ່ໄດ້ທັງໝົດ 446 ເຮັກຕາ. ອົງການເອັນພີເອ ສາມາດບັນລຸການກວດກູ້ ລບຕ ໄດ້ຫຼື່ນແຜນການ ຍ້ອນ ມີມື້ເຮັດວຽກຫຼາຍຂຶ້ນໃນຊ່ວງລະດູຝົນ ແລະ ການສຳຫຼວດຊອກຫາລະເບີດລູກຫວ່ານ ກໍ່ມີຄວາມຄືບໜ້າໄວກວ່າທີ່ຄາດຄະເນໄວ້, ເຮັດໃຫ້ສາມາດໝູນໃຊ້ທີມງານສຳຫຼວດຊອກຫາລະເບີດລູກຫວ່ານ ໄປເຮັດການກວດກູ້ ລບຕ ເພີ່ມຕື່ມ ເຮັດໃຫ້ມີການກວດກູ້ ລບຕ ຫຼາຍຂຶ້ນກວ່າເກົ່າ.

ນອກຈາກນັ້ນ, ອົງການເອັນພີເອ ຍັງສາມາດບັນລຸແຜນການສຳຫຼວດຢູ່ບັນດາບ້ານຕ່າງໆໄດ້ຫຼື່ນຄາດໝາຍທີ່ວາງໄວ້ອີກດ້ວຍ ລວມທັງໝົດ 322 ບ້ານ ໃນ 4 ແຂວງ, ຊຶ່ງແຜນການແມ່ນ 279 ບ້ານ.

ອົງການເອັນພີເອ ມີຄວາມມຸ່ງໝັ້ນຕໍ່ກັບສິດທິເທົ່າທຽມບົດບາດຍິງ-ຊາຍ, ຄວາມຫຼາກຫຼາຍທາງແນວຄິດສ້າງສັນ, ການມີສ່ວນຮ່ວມ ແລະ ໂອກາດເທົ່າທຽມກັນ ໃນການປະກອບສ່ວນເຂົ້າໃນວຽກງານຂອງອົງກອນ ແລະ ທຸກໆດ້ານຂອງວຽກງານທີ່ໄດ້ປະຕິບັດ. ໃນປີ 2020, ອົງການເອັນພີເອ ໄດ້ຮ່ວມມືກັບອົງການຈັດຕັ້ງຂອງລາວ ຊື່ວ່າ ອົງການພູມໃຈທີ່ເກີດເປັນລາວ ດຳເນີນການປະເມີນກ່ຽວກັບບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍທາງດ້ານແນວຄິດສ້າງສັນ ແລະ ໄດ້ມີການທົບທວນຄືນນະໂຍບາຍກ່ຽວກັບຊັບພະຍາກອນມະນຸດພາຍໃນອົງການເອັນພີເອ ເພື່ອຮັບປະກັນໃຫ້ການມີສ່ວນຮ່ວມທີ່ຫຼາກຫຼາຍທາງດ້ານຍິງ-ຊາຍໃຫ້ຫຼາຍຂຶ້ນໃນວຽກງານດ້ານຕ່າງໆ ແລະ ສອດຄ່ອງກັບສະພາບແວດລ້ອມຕົວຈິງ ຂອງ ສປປ ລາວ.

ນອກຈາກນັ້ນ, ອົງການເອັນພີເອ ຍັງມຸ່ງໝັ້ນໃນການຫຼຸດຜ່ອນຜົນກະທົບທາງສິ່ງແວດລ້ອມ ແລະ ສົ່ງເສີມການປູກຈິດສຳນຶກທາງດ້ານສິ່ງແວດລ້ອມ ເພື່ອຄວາມຍືນຍົງ.

ໃນປີ 2020, ອົງການເອັນພີເອ ໄດ້ຮ່ວມມືກັບອົງການລາວປອດຈາກຂີ້ເຫຍື້ອ (ຊີໂລເວດສທລາວ) ໄດ້ຈັດການຝຶກອົບຮົມໜຶ່ງມື້ເຕັມຂຶ້ນ ກ່ຽວກັບການໂຄສະນາກ່ຽວກັບສິ່ງແວດລ້ອມ ໂດຍ



*ກະຊວງການຕ່າງປະເທດ ສ. ອາເມລິກາ ສະໜັບສະໜູນທີມງານກວດກູ້ ລບຕ ຂອງອົງການເອັນພີເອ ໃນການນຳໃຊ້ເຄື່ອງກວດເລິກ, ແຂວງສາລະວັນ, ກຸມພາ 2020*



*ນັກສຳຫຼວດຍິງ (ທີມທີ 8) ໃຊ້ເຊືອກເພື່ອເຮັດແລວກວດກູ້ ຢູ່ສວນປູກກາເຟ, ບ້ານແດນສະຫວ່າງ, ເມືອງປາກຊ່ອງ, ແຂວງຈຳປາສັກ, ພຶດສະພາ 2020*

ມີພະນັກງານເຂົ້າຮ່ວມ ຫຼາຍກວ່າ 335 ຄົນ ພ້ອມທັງ ສ້າງຫ້ອງການເຮັດວຽກສໍາລັບວຽກງານດັ່ງກ່າວອີກດ້ວຍ.

## ກໍລະນີສຶກສາ

ນາງ ກອງໄຊ ອາຍຸ 58 ປີ, ອາຊີບຊາວນາ ແລະ ແມ່ບ້ານ ມີລູກ 4 ຄົນ ດໍາລົງຊີວິດທ່າມກາງໄພຂົ່ມຂູ່ຂອງລະເບີດລູກຫວ່ານ ທີ່ຕົກຄ້າງຢູ່ນາຂອງຕົນເອງ ຢູ່ທີ່ບ້ານ ໜອງສະເກືອງ, ແຂວງສາລະວັນ.

ໃນຂະນະທີ່ກໍາລັງຂຸດຂຸມຝັງເສົາຮົ້ວໄມ້ຢູ່ບໍລິເວນອ້ອມເຮືອນຂອງລາວ, ນາງ ກອງໄຊ ໄດ້ຂຸດຂຸມໄປຕໍາເອົາສິ້ນສ່ວນຂອງແຂງບາງຢ່າງຢູ່ພື້ນດິນ. ລາວເກີດມີຄວາມຢ້ານກົວຂຶ້ນທັນທີ ແລະ ຄິດວ່າ ມັນຕ້ອງແມ່ນລະເບີດ ແລະ ມີຄວາມອັນຕະລາຍ ຍ້ອນວ່າ ຜູ້ກ່ຽວ ແລະ ຄອບຄົວ ຮູ້ດີວ່າ ເຂດນີ້ແມ່ນມີ ລບຕ ຕົກຄ້າງຢູ່. ລາວເວົ້າວ່າ "ຕອນຂ້ອຍຂຸດຕໍາມັນ ຂ້ອຍຄິດວ່າມັນຕ້ອງແມ່ນລະເບີດ, ຊຶ່ງ ຂ້ອຍເອງ ກໍ່ຕົກໃຈຫຼາຍ, ທັງຢ້ານທັງສັ່ນຍ້ອນພາບຈໍາ 20 ປີກ່ອນ ໄດ້ປະກົດຂຶ້ນມາໃນຫົວ ກ່ຽວກັບເຫດການທີ່ຫຼານຊາຍຂອງຂ້ອຍ 2 ຄົນ ອາຍຸ 13 ປີ ແລະ 15 ປີ ໄດ້ເສຍຊີວິດຍ້ອນອຸປະຕິເຫດຈາກລະເບີດລູກຫວ່ານ". ລະເບີດລູກຫວ່ານດັ່ງກ່າວ ແມ່ນຕົກຄ້າງຢູ່ຫຼັງບ້ານເດີ່ນຫຼິ້ນຂອງບັນດາຫຼານໆທີ່ແລ່ນຫຼິ້ນຢູ່ທຸກມື້ ຢູ່ຫ່າງຈາກເຮືອນ ພຽງແຕ່ 2-3 ບາດຍ່າງ ເທົ່ານັ້ນ, ເຮັດໃຫ້ລາວ ຢ້ານກົວທີ່ສຸດ.

ແຕ່ໂຊກດີ, ລາວທັນໄດ້ໄປລາຍງານໃຫ້ອໍານາດການປົກຄອງບ້ານ ແລະ ທີມງານກວດກູ້ຂອງອົງການເອັນພີເອ ທີ່ເຮັດວຽກຢູ່ບໍລິເວນໃກ້ບ້ານຂອງລາວ ໄດ້ຮັບຊາບ. ພ້ອມດຽວກັນນັ້ນ, ລາວຍັງໄດ້ເຕືອນສະມາຊິກໃນຄອບຄົວ ແລະ ເພື່ອນບ້ານໃກ້ຄຽງໃຫ້ຮັບຊາບນໍາອີກດ້ວຍ. ລາວເວົ້າວ່າ "ເມື່ອຂ້ອຍຮູ້ວ່າມັນແມ່ນລະເບີດ ສິ່ງທໍາອິດໃນຫົວຂອງຂ້ອຍ ແມ່ນຕ້ອງໄປລາຍງານໃຫ້ນາຍບ້ານ ແລະ ທີມງານກວດກູ້ ລບຕ ຂອງອົງການເອັນພີເອ ທີ່ກໍາລັງເຮັດວຽກຢູ່ທົ່ງນາໃນເຂດບ້ານ ຮັບຊາບ, ຊຶ່ງທົ່ງນາບາງສ່ວນ ກໍ່ເປັນຂອງລູກສາວຂ້ອຍເອງ".

ຫຼັງຈາກນັ້ນ, ທີມງານຂອງອົງການເອັນພີເອ ກໍ່ມາຮອດທັນທີ ແລະ ດໍາເນີນການທໍາລາຍທັນທີ ແລະ ເຮັດໃຫ້ເຂດບ້ານ ປອດໄພຈາກໄພຂົ່ມຂູ່ຈາກລະເບີດບໍ່ທັນແຕກຕົກຄ້າງ. "ຂ້ອຍຮູ້ສຶກປອດໄພ, ມີຄວາມສຸກ ແລະ ບໍ່ກັງວົນອີກຕໍ່ໄປກ່ຽວກັບ



*ພະນັກງານເອັນພີເອ ສໍາພາດນາງ ກົງໄຊ ກັບຫຼານຊາຍຂອງລາວ ຢູ່ບ້ານໜອງສາເກືອງ, ແຂວງສາລະວັນ*

ສະມາຊິກໃນຄອບຄົວ, ເດັກນ້ອຍຂອງຂ້ອຍ ຫຼື ເພື່ອນບ້ານອີກຕໍ່ໄປ ຍ້ອນວ່າ ລະເບີດບໍ່ທັນແຕກ ໄດ້ຖືກທໍາລາຍແລ້ວ", ນາງ ກອງໄຊ ໄດ້ກ່າວ. ຫຼັງຈາກນັ້ນ, ທີມງານຂອງອົງການເອັນພີເອ ກໍ່ໄດ້ສືບຕໍ່ດໍາເນີນການກວດກູ້ ລບຕ ອອກຈາກທົ່ງນາຫຼາຍແຫ່ງຢູ່ໃນບ້ານ ເຮັດໃຫ້ຊຸມຊົນ ສາມາດນໍາໃຊ້ດິນເຂົ້າໃນການຜະລິດ ໂດຍປັດສະຈາກຄວາມຢ້ານກົວຈາກລະເບີດບໍ່ທັນແຕກຕົກຄ້າງ.

## ວຽກຈຸດສຸມໃນປີ 2021

ໃນປີ 2021, ອົງການເອັນພີເອ ຈະຫັນປ່ຽນການສໍາຫຼວດ ລບຕ ຕົກຄ້າງຢູ່ 4 ແຂວງ ມາສຸມໃສ່ການກວດກູ້ພື້ນທີ່ ລບຕ ຕົກຄ້າງໃຫ້ຫຼາຍຂຶ້ນກວ່າເກົ່າ. ໂດຍການເພີ່ມທຶນສະໜັບສະໜູນຂອງກະຊວງການຕ່າງປະເທດ ສ. ອາເມລິກາ ພ້ອມທັງການສືບຕໍ່ທຶນສະໜັບສະໜູນຂອງກະຊວງການຕ່າງປະເທດນອກແວ, ອົງການເອັນພີເອ ຈະຂະຫຍາຍກໍາລັງການກວດກູ້ ລບຕ ຕື່ມເປັນ 20 ທີມ ເພື່ອດໍາເນີນການກວດກູ້ ລບຕ ຢູ່ແຂວງອັດຕະປື, ຈໍາປາສັກ, ສາລະວັນ ແລະ ເຊກອງ, ແຕ່ຍັງຈະຮັກສາທີມງານສໍາຫຼວດ 8 ທີມ ໄວ້ຄືເກົ່າ ເພື່ອສືບຕໍ່ເຮັດການສໍາຫຼວດ.

ນອກຈາກນັ້ນ, ອົງການເອັນພີເອ ຈະນໍາສະເໜີເຄື່ອງມືໃໝ່ 2 ຢ່າງ ເພື່ອປັບປຸງປະສິດທິພາບຂອງການປະຕິບັດງານ ແລະ ຮັບປະກັນໃຫ້ຊັບພະຍາກອນທີ່ມີຢ່າງຈໍາກັດ ຖືກນໍາໃຊ້ເຂົ້າການກວດກູ້ ລບຕ ຢູ່ບັນດາຊຸມຊົນຢ່າງມີປະສິດທິຜົນ ເທົ່າທີ່ຈະເປັນໄປໄດ້. ໃນປີ 2021, ບູລິມະສິດຕົ້ນຕໍ ແມ່ນຈະຮັບປະກັນໃຫ້ການນໍາສະເໜີນໍາໃຊ້ໂຕໝາເຂົ້າໃນການກວດກູ້ ລບຕ ແລະ ການກວດກາຄຸນນະພາບ ພ້ອມທັງ ການນໍາໃຊ້ຍົນນ້ອຍບັງຄັບ (ໂດຼນ) ເພື່ອສະໜັບສະໜູນເຂົ້າໃນການສໍາຫຼວດ ແລະ ກວດກູ້ ລບຕ ໃຫ້ໄດ້ຮັບການອະນຸມັດ.

ອົງການເອັນພີເອ ຈະສືບຕໍ່ສະໜັບສະໜູນການພັດທະນາຂີດຄວາມສາມາດໃຫ້ສະຖາບັນການຈັດຕັ້ງແຫ່ງຊາດຂອງລັດຖະບານ ແລະ ຂັ້ນແຂວງ ເປັນຕົ້ນແມ່ນ ຂົງເຂດວຽກງານການຄຸ້ມຄອງຂໍ້ມູນ ລບຕ. ການຂະຫຍາຍກິດຈະກໍາຂອງພວກເຮົາໃນຂົງເຂດວຽກງານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ, ບົດບາດຍິງ-ຊາຍ ແລະ ຄວາມຄິດສ້າງສັນ ຍັງເປັນວຽກງານຕົ້ນຕໍທີ່ສໍາຄັນຂອງພວກເຮົາ.

ສິ່ງທ້າທາຍຕົ້ນຕໍຂອງພວກເຮົາ ຍັງຄົງແມ່ນການຮັບປະກັນໃຫ້ບົດບັນທຶກຄວາມເຂົ້າໃຈ ຖືກອະນຸມັດຮັບຮອງຕາມກອບເວລາທີ່ກໍານົດໄວ້ ແນ່ໃສ່ເຮັດໃຫ້ການຂໍອະນຸມັດຂະຫຍາຍເວລາການປະຕິບັດງານ, ການຈັດຊື້ວັດຖຸອຸປະກອນ ແລະ ການຮັບສະໝັກພະນັກງານ ທັນຕາມໄລຍະເວລາທີ່ກໍານົດໄວ້.

## ຄູ່ຮ່ວມງານ

- ຫ້ອງການຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
- ຫ້ອງການຄຸ້ມຄອງວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ແຂວງອັດຕະປື, ຈໍາປາສັກ, ສາລະວັນ ແລະ ເຊກອງ
- ໂຄງການເກັບກູ້ລະເບີດແຫ່ງຊາດ ສູນກາງ
- ໂຄງການເກັບກູ້ລະເບີດແຫ່ງຊາດ ແຂວງຫຼວງພະບາງ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 32 | 10 | 2 | 2 | 217 | 79 | 4 | 0 |
| **ລວມ** | **346** | | | | | | |

## ຕົວເລກຜົນສຳເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງອົງການ ເອັນພີເອ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ | ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື |
| ການກວດກູ້ | ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື |
| ການທຳລາຍ ລບຕ ເຄື່ອນທີ່ | ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື |
| ການປະເມີນຫຼັງການກວດກູ້ | ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື |

## ການເງິນ ໃນປີ 2020:

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການສຳຫຼວດ ແລະ ກວດກູ້ ລບຕ ໄລຍະທີ III | 21 ມິຖຸນາ 2019 | 28 ພຶດສະພາ - 31 ທັນວາ 2020 | | 6,129,608 ໂດລາ ສຫລ (2020) | ກະຊວງການຕ່າງປະເທດ ສ. ອາເມລິກາ- ກະຊວງການຕ່າງປະເທດນອກແວ- ອົງການແຟັກຝໍບັນເດດ |
| ໂຄງການແກ້ໄຂບັນຫາລະເບີດຝັງດິນ ໄລຍະທີ II (ຈີແມັບ II) | 17 ກໍລະກົດ 2019 | 28 ມິຖຸນາ - 31 ມີນາ 2020 | 1,078,253 ໂດລາ ສຫລ | 234,501.38 ໂດລາ ສຫລ (2020) | ອົງການພັດທະນາສາກົນແຫ່ງລາດຊະອານາຈັກອັງກິດ |
| ໂຄງການສ້າງຂີດຄວາມສາມາດໃຫ້ແກ່ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ຫ້ອງການຄຸ້ມຄອງວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກຂັ້ນແຂວງ (ຄຄກລຂ) | 21 ມິຖຸນາ 2019 | 10 ມິຖຸນາ 2019 - 31 ມີນາ 2020 | 513,709 ໂດລາ ສຫລ | 69,687.55 ໂດລາ ສຫລ (2020) | ອົງການພັດທະນາສາກົນແຫ່ງລາດຊະອານາຈັກອັງກິດ |

| | | | | | |
|---|---|---|---|---|---|
| ເອກະສານການຕົກລົງລະຫວ່າງ ອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ (ເອັນພີເອ) ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ເພື່ອສະໜັບສະໜູນ ຄກລ ໃນການສຳຫຼວດ ແລະ ກວດກູ້ ລບຕ ຢູ່ແຂວງຫຼວງພະບາງ | 1 ມັງກອນ - 2020 | 1 ມັງກອນ - 31 ທັນວາ 2020 | 705,881 ໂດລາ ສຫລ | 705,881 ໂດລາ ສຫລ (2020) | ກະຊວງການຕ່າງປະເທດນ໋ອກແວ (ໂຄງການຮ່ວມມືແບບສອງຝ່າຍ) |

| ທຶນໂດຍກົງທີ່ໄດ້ຮັບໃນປີ 2020 (ໂດລາ ສຫລ): 7,139,677.93 ໂດລາ ສຫລ (ລວມທຶນທີ່ໂອນໃຫ້ ຄກລ) | |
|---|---|
| ລາຍລະອຽດລາຍຈ່າຍໃນປີ 2020 | |
| **ລາຍລະອຽດ** | **ຈຳນວນ** |
| ເງິນເດືອນພະນັກງານ | 679,678 |
| ລາຍຈ່າຍການປະຕິບັດງານ | 5,094,191.25 |
| ລາຍຈ່າຍການຈັດຊື້ວັດຖຸອຸປະກອນ | 921,561.68 |
| **ລວມ** | **6,695,430.93** |

### ປະເທດຜູ້ໃຫ້ທຶນໃນປີ 2020 (ໂດລາ ສຫລ)

| **ຜູ້ໃຫ້ທຶນ** | **ຈຳນວນ** |
|---|---|
| ກະຊວງການຕ່າງປະເທດ ສ. ອາເມລິກາ | 5,382,550 |
| ກະຊວງການຕ່າງປະເທດນ໋ອກແວ | 705,881 |
| ອົງການແຟັກຟໍ ບັນເດດ | 41,177 |
| ອົງການພັດທະນາ ສາກົນແຫ່ງລາດຊະອານາຈັກອັງກິດ | 304,188.93 |
| ກະຊວງການຕ່າງປະເທດນ໋ອກແວ (ການຮ່ວມມືແບບສອງຝ່າຍ) | 705,881 |
| **ລວມ** | **7,139,677.93** |

## ການໂອນທຶນ

### ທຶນທີ່ໂອນໃຫ້ອົງການປະຕິບັດງານອື່ນໆ

| **ຊື່ອົງການ** | **ຈຳນວນ** |
|---|---|
| ໂຄງການເກັບກູ້ລະເບີດແຫ່ງຊາດ<br>ທຶນຂອງກະຊວງການຕ່າງປະເທດນ໋ອກແວ (ໂຄງການຮ່ວມມືແບບສອງຝ່າຍ) | 444,247 |
| **ລວມ** | **444,247** |

# ອົງການຮາໂລທຣາດ

## ກິດຈະກຳໃນປີ 2020

ໃນປີ 2020, ເຮໂລທຣາດ ໄດ້ສືບຕໍ່ດຳເນີນການສຳຫຼວດແບບຄົບຊຸດຢູ່ແຂວງສະຫວັນນະເຂດ. ລັດຖະບານ ສ. ອາເມລິກາ ແລະ ລັດຖະບານລາດຊະອານາຈັກອັງກິດ ຍັງສືບຕໍ່ໃຫ້ການສະໜັບທີມງານກວດກູ້ ເພື່ອດຳເນີນການກວດກູ້ພື້ນທີ່ ລບຕ ຕົກຄ້າງສູງໃນທົ່ວແຂວງສະຫວັນນະເຂດ. ນອກຈາກນັ້ນ, ເຮໂລທຣາດ ຍັງໄດ້ຂະຫຍາຍຈຳນວນພະນັກງານ ແລະ ການຝຶກອົບຮົມໃນປີ 2020 ໂດຍທຶນສະໜັບສະໜູນໃໝ່ຂອງລັດຖະບານ ສ. ອາເມລິກາ ຈຳນວນ 7 ລ້ານໂດລາ ສຫລ ໃນການກວດກູ້ ລບຕ ຢູ່ແຂວງສະຫວັນນະເຂດ. ກິດຈະກຳທີ່ໄດ້ປະຕິບັດໃນປີ 2020 ປະກອບມີ:

- **ການສຳຫຼວດບໍ່ແມ່ນແບບວິຊາການ**: ເຮໂລທຣາດ ໄດ້ດຳເນີນການສຳຫຼວດບໍ່ແມ່ນແບບວິຊາການ ຢູ່ເມືອງອາດສະພັງທອງ, ອາດສະພອນ, ນອງ, ພະລານໄຊ, ພິນ, ເຊໂປນ, ວິລະບູລີ ແລະ ຊົນບູລີ.
- **ການສຳຫຼວດແບບວິຊາການ**: ເຮໂລທຣາດ ໄດ້ດຳເນີນການສຳຫຼວດແບບວິຊາການ ຢູ່ເມືອງອາດສະພັງທອງ, ອາດສະພອນ, ນອງ, ພະລານໄຊ, ພິນ, ເຊໂປນ, ວິລະບູລີ ແລະ ຊົນບູລີ.
- **ການກວດກູ້ ລບຕ**: ເຮໂລທຣາດ ໄດ້ດຳເນີນການກວດກູ້ ລບຕ ຢູ່ເມືອງອາດສະພັງທອງ, ນອງ, ພິນ, ເຊໂປນ ແລະ ວິລະບູລີ.
- **ການທຳລາຍ ລບຕ ສຸກເສີນ**: ເຮໂລທຣາດ ໄດ້ດຳເນີນການທຳລາຍ ລບຕ ສຸກເສີນ ຢູ່ເມືອງອາດສະພັງທອງ, ອາດສະພອນ, ຈຳພອນ, ນອງ, ພະລານໄຊ, ພິນ, ເຊໂປນ, ທ່າພັງທອງ, ວິລະບູລີ ແລະ ຊົນບູລີ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: ເຮໂລທຣາດ ໄດ້ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ເມືອງອາດສະພັງທອງ, ອາດສະພອນ, ນອງ, ພະລານໄຊ, ພິນ, ເຊໂປນ ແລະ ວິລະບູລີ.



*ພະນັກງານວິຊາການ ຂອງ ເຮໂລທຣາດ ກຳລັງດຳເນີນການກວດກູ້ ລບຕ ທີ່ພົບເຫັນຢູ່ຂ້າງເຮືອນຂອງປະຊາຊົນ ຢູ່ບ້ານໂນນໄຊ, ເມືອງພິນ*

- **ການທຳລາຍ ລບຕ ສຸກເສີນ**: ເຮໂລທຣາດ ໄດ້ດຳເນີນການທຳລາຍ ລບຕ ຫຼາຍກວ່າ 1,300 ໜ່ວຍ.
- **ການທຳລາຍ ລບຕ**: ເຮໂລທຣາດ ໄດ້ດຳເນີນການທຳລາຍ ລບຕ ຫຼາຍກວ່າ 11,000 ໜ່ວຍ.

## ຜົນສຳເລັດຕົ້ນຕໍໃນປີ 2020

ໂດຍການສືບຕໍ່ສະໜັບສະໜູນຈາກລັດຖະບານ ສ. ອາເມລິກາ ແລະ ລັດຖະບານລາດຊະອານາຈັກອັງກິດ ເຮັດໃຫ້ອົງການຮາໂລທຣາດ ສາມາດເພີ່ມຂີດຄວາມສາມາດການປະຕິບັດງານຂອງຕົນເອງຂຶ້ນເປັນ 40% ໃນປີ 2020 ເປັນຕົ້ນແມ່ນ ມີການເພີ່ມຈຳນວນພະນັກງານຈາກ 523 ຄົນ ໃນເດືອນມັງກອນ ເປັນ 750 ຄົນ ໃນເດືອນທັນວາ 2020. ຜົນສຳເລັດຕົ້ນຕໍໃນປີ 2020 ປະກອບມີ:

- **ການກວດກູ້**: ສາມາດກວດກູ້ ລບຕ ອອກຈາກພື້ນທີ່ ລບຕ ຕົກຄ້າງສູງໄດ້ 280 ເຮັກຕາ.
- **ການສຳຫຼວດບໍ່ແມ່ນແບບວິຊາການ**: ສາມາດດຳເນີນການສຳຫຼວດບໍ່ແມ່ນແບບວິຊາການ ຢູ່ຫຼາຍກວ່າ 120 ບ້ານ.
- **ການສຳຫຼວດແບບວິຊາການ**: ເຮໂລທຣາດ ໄດ້ດຳເນີນການສຳຫຼວດແບບວິຊາການ ຫຼາຍກວ່າ 170 ບ້ານ ແລະ ກວດກູ້ ລບຕ ຢູ່ຫຼາຍກວ່າ 60 ບ້ານ.



## ກຳລະນີສຶກສາ

ໃນປີ 2020, ເຮໂລທຼາດ ໄດ້ດຳເນີນການກວດກູ້ ລບຕ ຕາມຄວາມຮຽກຮ້ອງຕ້ອງການຂອງອຳນາດການປົກຄອງເມືອງນອງ ແລະ ພິນ ເພື່ອສະໜັບສະໜູນໃຫ້ແກ່ໂຄງການແຈກນ້ຳຂອງອົງການໂລກແຫ່ງວິໄສທັດ ແລະ ສະຫະພາບເອີລົບ ທີ່ໃຫ້ທຶນແກ່ໂຄງການຊຸ້ນວິບ. ເຮໂລທຼາດ ສາມາດປະກອບສ່ວນເຮັດໃຫ້ການກໍ່ສ້າງນ້ຳສ້າງ 15 ບ່ອນ ແລະ ນ້ຳບາດານ ຢູ່ 10 ບ້ານ ມີຄວາມປອດໄພຈາກ ລບຕ.

ການສະໜັບສະໜູນຂອງເຮໂລທຼາດ ໃນການສະໜັບສະໜູນໂຄງການຊຸ້ນວິບ ສາມາດເຮັດໃຫ້ການຕິດຕັ້ງລະບົບເຄື່ອງສູບນ້ຳຢູ່ຫຼາຍພື້ນທີ່ໃນຊົນນະບົດ ຂອງບ້ານໜອງວິໄລ, 2 ເຂດຊຸມຊົນຫຼັກຢູ່ເມືອງນອງ ແລະ 3 ພື້ນທີ່ນ້ອຍຢູ່ຊົນນະບົດອື່ນໆ ມີຄວາມປອດໄພຈາກ ລບຕ ເຊັ່ນ: ບ້ານຊາກີໄທຍ. ການຂຸດເຈາະຂອກທາງຮູນ້ຳບາດານໃນເຂດພື້ນທີ່ໆເຮໂລທາດ ໄດ້ກວດກູ້ ລບຕ ອອກໃຫ້ນັ້ນ ສາມາດເຮັດໃຫ້ການວາງແທ່ງມີຄວາມປອດໄພ ແລະ ເຮັດໃຫ້ປະຊາຊົນ ແລະ ຄົວເຮືອນຕ່າງໆ ມີນ້ຳໃຊ້.

ນອກຈາກນັ້ນ, ໃນເຂດພື້ນທີ່ໆເຮໂລທາດ ໄດ້ກວດກູ້ ລບຕ ອອກໃຫ້ ຍັງເຮັດໃຫ້ອົງການໂລກແຫ່ງວິໄສທັດ ສາມາດຕິດຕັ້ງລະບົບການສູບນ້ຳດ້ວຍມື ຢູ່ໃນ 3 ບ້ານ ໃນເມືອງພິນ ພ້ອມທັງຕິດຕັ້ງລະບົບພະລັງງານແສງອາທິດ ຢູ່ໃນ 3 ບ້ານ ຂອງເມືອງນອງ ອີກດ້ວຍ.

ການດຳເນີນງານຂອງອົງການຮາໂລທຼາດ ໂດຍທຶນສະໜັບສະໜູນຂອງລັດຖະບານ ສ. ອາເມລິກາ ແລະ ລັດຖະບານລາດສະອານາຈັກອັງກິດ ສຳລັບໂຄງການຊຸ້ນວິບ ເຮັດໃຫ້ມີຜູ້ໄດ້ຮັບຜົນປະໂຫຍດ 6,500 ຄົນ ໃນ 10 ບ້ານ.

## ແຜນການ ສຳລັບປີ 2021

ໃນປີ 2021, ເຮໂລທຼາດ ຈະສືບຕໍ່ດຳເນີນການສຳຫຼວດ, ກວດກູ້, ທຳລາຍ ລບຕ ສຸກເສີນ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ແຂວງສະຫວັນນະເຂດ. ນອກຈາກນັ້ນ, ເຮໂລທຼາດ ຕັ້ງໃຈວ່າ ຈະເລີ່ມຕົ້ນດຳເນີນການກວດກູ້ລະເບີດຝັງດິນໃນປີ 2021.

ໂດຍປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ທີ່ໄດ້ເຊັນຮັບຮອງແລ້ວ, ເຮໂລທຼາດ ຈະສືບຕໍ່ປະຕິບັດການກດວກູ້ ລບຕ ຢູ່ແຂວງສະຫວັນນະເຂດ ໃຫ້ສຳເລັດ ໂດຍທຶນສະໜັບສະໜູນຂອງລັດຖະບານ ສ. ອາເມລິກາ ຈຳນວນ 7 ລ້ານໂດລາ ສຫລ. ເມື່ອໃດທີ່ການຂະຫຍາຍໂຄງການຂອງພວກເຮົາຫາກສຳເລັດ ຈະເຮັດໃຫ້ພວກເຮົາມີພະນັກງານເພີ່ມຂຶ້ນ 2 ເທົ່າຕົວເປັນ 1,000 ຄົນ ເພື່ອປະຕິບັດໂຄງການໃຫ້ສຳເລັດ ໃນໄລຍະເວລາ 18 ເດືອນ.

ກິດຈະກຳທີ່ຈະຈັດຕັ້ງປະຕິບັດ ໃນປີ 2021 ມີ:

- ດຳເນີນການສຳຫຼວດບໍ່ແມ່ນແບບວິຊາການ ແລະ ແບບວິຊາການ, ການທຳລາຍ ລບຕ ເຄື່ອນທີ່, ການກວດກູ້ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະ ແຂວງສະຫວັນນະເຂດ.
- ດຳເນີນການສຳຫຼວດ ແລະ ກວດກູ້ ລບຕ ໂດຍທຶນສະໜັບສະໜູນຂອງລັດຖະບານລາດຊະອານາຈັກອັງກິດ ຕາມສັນຍາທີ່ໄດ້ຕົກລົງກັນ ພາຍໃນທ້າຍເດືອນມີນາ 2021 ໃຫ້ສຳເລັດ ແລະ ສືບຕໍ່ເຮັດວຽກຮ່ວມກັບແຂວງສະຫວັນນະເຂດ ແລະ ຄຊກລ ເພື່ອປຶກສາຫາລືສ້າງແຜນການຮ່ວມກັນຕື່ມອີກ 1 ປີ.
- ເຮັດວຽກຮ່ວມກັບແຂວງ ສະຫວັນນະເຂດ ແລະ ຄຊກລ ເພື່ອຮັບຮອງບົດບັນທຶກຄວາມເຂົ້າໃຈຮ່ວມກັນ ສຳລັບທຶນສະໜັບສະໜູນໃໝ່ໂຄງການກວດກູ້ ລບຕ ຂອງລັດຖະບານ ສ. ອາເມລິກາ.
- ເຮັດວຽກຮ່ວມກັບອຳນາດການປົກຄອງຂັ້ນເມືອງ ເພື່ອຮັບສະໝັກພະນັກງານວິຊາການໃໝ່ເຂົ້າມາເຮັດວຽກສຳລັບໂຄງການສະໜັບສະໜູນໃໝ່ຂອງລັດຖະບານ ສ. ອາເມລິກາ.
- ສືບຕໍ່ປັບປຸງການພົວພັນສື່ສານ ແລະ ການປະສານງານກັບ ຄຊກລ, ແຂວງ ແລະ ເມືອງ ໃນປີ 2021.
- ສືບຕໍ່ສະໜອງການຝຶກອົບຮົມທາງດ້ານພາສາອັງກິດໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ.
- ສືບຕໍ່ປັບປຸງຂີດຄວາມສາມາດໃນການຊອກຫາ ແລະ ສະໜັບສະໜູນຄົນພິການ ໃຫ້ສາມາດເຂົ້າມາເຮັດວຽກເປັນພະນັກງານປະຈຳຢູ່ຫ້ອງການ ແລະ ພາກສະໜາມ ຕາມຄວາມເໝາະສົມຕົວຈິງ.

## ຄູ່ຮ່ວມງານ

- ຄຊກລ
- ອຳນາດການປົກຄອງ ຂັ້ນແຂວງ ແລະ ຂັ້ນເມືອງ
- ລັດຖະບານ ສ. ອາດມລິກາ
- ລັດຖະບານລາດຊະອານາຈັກອັງກິດ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 37 | 30 | 0 | 1 | 334 | 343 | 5 | 0 |
| ລວມ | **750** | | | | | | |

## ຜົນສຳເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງອົງການ ຮາໂລທຼາດ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ | ແຂວງສະຫວັນນະເຂດ |
| ການກວດກູ້ | ແຂວງສະຫວັນນະເຂດ |
| ການທຳລາຍເຄື່ອນທີ່ | ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື |
| ການປະເມີນຫຼັງການກວດກູ້ | ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື |

## ການເງິນ ໃນປີ 2020

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| UXO Survey in Savannakhet Province | 21.06.2019 | 01.01.2018 – 30.06.2022 | 17,285,000 | 3,940,874 | U.S. Govt (PM/WRA) |
| UXO Clearance for Savannakhet Province | | 01.04.2020 – 31.03.2021 | 1,824,500 | | U.K. Govt (FCDO) |
| UXO Survey and Clearance for Savannakhet Province | | 01.04.2020 – 31.12.2021 | 7,000,000 | | U.S. Govt (PM/WRA) |

| ທຶນໂດຍກົງທີ່ໄດ້ຮັບໃນປີ 2020 (ໂດລາ ສຫລ): 5,665,173.30 ໂດລາ ສຫລ | |
|---|---|
| ຄ່າໃຊ້ຈ່າຍທັງໝົດໃນປີ 2020 (ໂດລາ ສຫລ) | |
| **ລາຍລະອຽດ** | **ຈຳນວນ** |
| ເງິນເດືອນພະນັກງານ | 3,673,231.80 |
| ລາຍຈ່າຍການປະຕິບັດງານ: | |
| - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 29,644.88 |
| - ການສຳຫຼວດ ແລະ ກວດກູ້ ລບຕ | 563,252.75 |
| ຈັດຊື້ວັດຖຸອຸປະກອນ | 1,399,043.87 |
| **ລວມ** | **5,665,173.30** |

| ທຶນທາງອ້ອມທີ່ໄດ້ຮັບໃນປີ 2020 (ໂດລາ ສຫລ): 457,615.28 USD | |
|---|---|
| ຄ່າໃຊ້ຈ່າຍທັງໝົດໃນປີ 2020 (ໂດລາ ສຫລ) | |
| **ລາຍລະອຽດ** | **ຈຳນວນ** |
| ເງິນເດືອນພະນັກງານ | 296,712.37 |
| ລາຍຈ່າຍການປະຕິບັດງານ: | |
| - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 2,394.62 |

| | |
|---|---|
| - ການສຳຫຼວດ ແລະ ກວດກູ້ ລບຕ | 45,497.83 |
| ຈັດຊື້ວັດຖຸອຸປະກອນ | 113,010.46 |
| **ລວມ** | **457,615.28** |

**ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)**

| **ຜູ້ໃຫ້ທຶນ** | **ຈຳນວນ** |
|---|---|
| ລັດຖະບານ ສ. ອາເມລິກາ (ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ ຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ) | 3,209,132.53 |
| ລັດຖະບານ ລາດຊະອານາຈັກອັງກິດ (ອົງການເອັບຊີດີໂອ) | 1,222,553.46 |
| ລັດຖະບານ ສ. ອາເມລິກາ (ຫ້ອງການຫຼຸດຜ່ອນອາວຸດຄັງແສງ ແລະ ການສູ້ຮົບ ຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ) | 1,691,102.59 |
| **ລວມ** | **6,122,788.58** |

humanity & inclusion

# ອົງການມະນຸດສະທຳ ແລະ ການມີສ່ວນຮ່ວມ (ເຫັດໄອ)

## ກິດຈະກຳໃນປີ 2020

- **ການສຳຫຼວດບໍ່ແມ່ນແບບວິຊາການ**: ອົງການເຫັດໄອ ໄດ້ດຳເນີນການສຳຫຼວດບໍ່ແມ່ນແບບວິຊາການ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໂດຍການດຳເນີນການໂຄສະນາກ່ຽວກັບຄວາມປອດໄພ, ສາຍຟິມຮູບເງົາ ແລະ ລົງຢ້ຽມຢາມບັນດາບ້ານຕ່າງໆ.
- **ການສຳຫຼວດແບບວິຊາການ ແລະ ການກວດກູ້ ລບຕ**: ອົງການເຫັດໄອ ໄດ້ດຳເນີນການສຳຫຼວດແບບວິຊາການ ແລະ ກວດກູ້ ລບຕ ໄປຄຽງຄູ່ກັບການຈັດລຽງບູລິມະສິດ ແລະ ໄດ້ ມີການນຳໃຊ້ມາດຕະຖານການປະຕິບັດງານການການການກວດກູ້ ລບຕ ແບບໃໝ່ ໄປພ້ອມໆກັບການພັດທະນາການສຳຫຼວດ ເພື່ອແກ້ໄຂລະເບີດຝັງດິນຢູ່ເມືອງຫົວເມືອງ. ອົງການເຫັດໄອ ຍັງໄດ້ຕອບຮັບການຮ້ອງຂໍຈາກອຳນາດການປົກຄອງຂັ້ນເມືອງ ໃນການເຂົ້າໄປກວດກູ້ ລບຕ ໃນພື້ນທີ່ໂຄງການກໍ່ສ້າງໂຮງຮຽນໃໝ່ ຢູ່ທີ່ບ້ານສົບລາບ, ບ້ານຄັງເຂົ້າ, ບ້ານນາເລົງ ແລະ ບ້ານປາກກະໄທ.
- **ການທຳລາຍ ລບຕ**: ອົງການເຫັດໄອ ໄດ້ເຂົ້າຮ່ວມໃນການພັດທະນາມາດຕະຖານໃນການປະຕິບັດງານໃໝ່ແບບສະເພາະຢູ່ທີ່ສະໜາມການທຳລາຍລະເບີດາສາມ ເພື່ອປັບປຸງຄວາມປອດໄພໃນສະໜາມການທຳລາຍ ລບຕ ໂດຍການປະສານສົມທົບກັບ ຄກລ.
- **ການທຳລາຍ ລບຕ ເຄື່ອນທີ່**: ອົງການເຫັດໄອ ໄດ້ດຳເນີນການທຳລາຍ ລບຕ ແບບເຄື່ອນທີ່ 122 ຄັ້ງ ຢູ່ໃນ 33 ບ້ານ ຕາມການລາຍງານຜ່ານສາຍດ່ວນຈາກບັນດາຊຸມຊົນຕ່າງໆ.
- **ການສ້າງແຜນທີ່**: ອົງການເຫັດໄອ ໄດ້ສືບຕໍ່ສ້າງແຜນທີ່ ແລະ ລະບົບການລາຍງານ ກ່ຽວກັບພື້ນທີ່ລະເບີດຝັງດິນຢູ່ໃນບັນດາ ເມືອງຕ່າງໆ.
- **ການພັດທະນາ**: ອົງການເຫັດໄອ ໄດ້ພັດທະນາມາດຕະຖານໃນການປະຕິບັດງານ ເພື່ອສະໜັບສະໜູນໃຫ້ແກ່ການປ້ອງກັນບາດເຈັບທີ່ເປັນໄພຂົ່ມຂູ່ຕໍ່ການດຳລົງຊີວິດ ໂດຍສອດຄ່ອງກັບມາດຕະຖານສາກົນໃນການແກ້ໄຂລະເບີດຝັງດິນລະດັບ 13.10.
- **ການສະໜັບສະໜູນທາງດ້ານຄວາມສາມາດ**: ອົງການເຫັດໄອ ໄດ້ສະໜັບສະໜູນຫ້ອງການ ຄຄກລຂ ແຂວງຫົວພັນຜ່ານການພັດທະນາຂີດຄວາມສາມາດ ແລະ ການປະຕິບັດຢູ່ໃນຫ້ອງການ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: ອົງການເຫັດໄອ ໄດ້ເຂົ້າຮ່ວມໃນການສູນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ຂໍສະແດງຄວາມຂອບໃຈ ມາຍັງໂຄງການຊີບີໄອດີ ເອຊີ5. ອົງການເຫັດໄອ ໄດ້ປະສານງານກັບ ຄກລ, ເຈຼດ, ບີເອັນດີເອ, ອອກຟາມ, ເອດີດີພີ ແລະ ອົງການອື່ນໆ ຢູ່ເມືອງຊຳເໜືອ ເພື່ອສ້າງສູນດັ່ງກ່າວນີ້. ອົງການເຫັດໄອ ຍັງໄດ້ສະໜັບສະໜູນຫ້ອງການ ຄຄກລ ແຂວງຫົວພັນ ຈັດກິດຈະກຳໂຄສະນາເຜີຍແຜ່ ກ່ຽວກັບສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ວັນສາກົນ ເພື່ອຄົນພິການ ຢູ່ເມືອງຊຳເໜືອ ໃນເດືອນທັນວາ 2020.
- **ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ**: ອົງການເຫັດໄອ ໄດ້ສະໜອງຮູບແບບການບໍລິການກ່ຽວກັບການຂຶ້ນສິ່ງຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄົນພິການ ເພື່ອໃຫ້ສາມາດເຂົ້າເຖິງການບໍລິການທາງດ້ານການປິ່ນປົວສຸຂະພາບ ແລະ ການຟື້ນຟູດ້ານຕ່າງໆ. ອົງການເຫັດໄອ ໄດ້ສ້າງ ແລະ ສະໜອງການຝຶກອົບຮົມ ກ່ຽວກັບການປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ. ອົງການເຫັດໄອ ໄດ້ສະໜອງການບໍລິການທາງດ້ານການຟື້ນຟູໜ້າທີ່ການ ແລະ ຈິດໃຈ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ ຜ່ານການໃຫ້ຄຳແນະນຳວິທີການຕ່າງໆແກ່ພະນັກງານທີ່ເຮັດວຽກກ່ຽວກັບວຽກງານສັງຄົມຂອງອົງການເຫັດໄອ,ອາສາສະໝັກຂອງຊຸມຊົນ, ແພດໝໍ ແລະ ພະຍາບານ ຜູ້ທີ່ເຄີຍຜ່ານການຝຶກອົບຮົມກ່ຽວກັບການປະຖົມພະຍາບານຂັ້ນຕົ້ນມາກ່ອນ ຈາກນັກຈິດຕະວິທະນາແຫ່ງຊາດຂອງລາວ ເພື່ອໃຫ້ເຂົາເຈົ້າສາມາດນຳສົ່ງຄົນເຈັບ ໄປສືບຕໍ່ປິ່ນປົວຈາກຢູ່ເມືອງຂຶ້ນໄປຫາ ແຂວງ ໄດ້ຢ່າງຖືກວິທີ. ນອກຈາກນັ້ນ, ອົງການເຫັດໄອ ຍັງໄດ້ສະໜັບສະໜູນຜູ້ລອດຊີວິດຈາກ ລບຕ ເພື່ອເຂົ້າຮ່ວມກອງປະຊຸມສຳມະນາ ກ່ຽວກັບການສ້າງແຜນປະຕິບັດງານແຫ່ງຊາດ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ກອງປະຊຸມທົບທວນ ກ່ຽວກັບສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານອີກດ້ວຍ. ນອກຈາກນັ້ນ, ອົງການເຫັດໄອ ຍັງໄດ້ດຳເນີນກິດຈະກຳສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແກ່ຜູ້ລອດຊີວິດຈາກ ລບຕ, ຄົນພິການ ແລະ ຜູ້ດ້ອຍໂອກາດ ຜ່ານການເຂົ້າຮ່ວມກິດຈະກຳຕ່ອງໂສ້ໃນການຂາຍຜະລິດຕະພັນເຮັດຈາກໄມ້ໄຜ່ ແລະ ເຄື່ອງປ່າຂອງດົງ ຂອງອົງການບີເອັນດີເອ ໂດຍນຳໃຊ້ລະບົບເຄື່ອງມືຮູບແບບການຮຽນຮູ້ຍິງ-ຊາຍ ແລະ ການຝຶກອົບຮົມ ກ່ຽວກັບຄວາມຫຼາກຫຼາຍທາງດ້ານແນວຄິດສ້າງສັນ ແລະ ການມີສ່ວນຮ່ວມ.

## ຜົນສຳເລັດຕົ້ນຕໍໃນປີ 2020

- **ການສຳຫຼວດບໍ່ແມ່ນແບບວິຊາການ**: ອົງການເຫັດໄອ ໄດ້ສຳເລັດການສຳຫຼວດບໍ່ແມ່ນແບບວິຊາການ ໃນ 10 ບ້ານຢູ່ເມືອງຫົວເມືອງ, ໄດ້ຜະລິດ ແລະ ເຜີຍແຜ່ປຶ້ມ ກ່ຽວກັບປະເພດຂອງ ລບຕ ໃນການສຳຫຼວດຊອກຫາ ລບຕ ທີ່ພົບເຫັນຢູ່ ສປປ ລາວ.
- **ການທຳລາຍ ລບຕ**: ອົງການເຫັດໄອ ໄດ້ທຳລາຍ ລບຕ ສຳເລັດ 100% ຢູ່ໃນ 33 ຊຸມຊົນ ຜ່ານການແຈ້ງຜ່ານສາຍດ່ວນ.
- **ການສຳຫຼວດແບບວິຊາການ**: ອົງການເຫັດໄອ ໄດ້ສຳເລັດການສຳຫຼວດແບບວິຊາການ ຢູ່ໃນພື້ນທີ່ 1,252,000 ຕາແມັດ ຢູ່ໃນ 9 ບ້ານ ແລະ ສາມາດກຳນົດພື້ນທີ່ ລບຕ ຕົກຄ້າງໄດ້ 603,164 ຕາແມັດ. ສາມາດກຳນົດສະໜາມລະເບີດຝັງດິນໄດ້ 17 ສະໜາມ (ຢູ່ໃນ 20 ບ້ານ ໃນທັງໝົດ 46 ບ້ານທີ່ໄດ້ເຮັດການສຳຫຼວດ).
- **ການກວດກູ້ ລບຕ**: ອົງການເຫັດໄອ ສາມາດກວດກູ້ ລບຕ ອອກຈາກພື້ນທີ່ໄດ້ 546,370 ຕາແມັດ ຢູ່ໃນ 14 ບ້ານ, ສາມາດທຳລາຍ ລບຕ ໄດ້ 2,225 ໜ່ວຍ.

- **ການສະໜັບສະໜູນ ຄຊກລ**: ພະນັກງານ ຄຄກລຂ ແຂວງ 6 ທ່ານ ໄດ້ຮັບການຝຶກອົບຮົມ ກ່ຽວກັບຖານຂໍ້ມູນ ລບຕ ແຫ່ງຊາດ, ອາກາຈີໄອເອັດສ໌, ບົດບາດຍິງ-ຊາຍ ແລະ ການປະຖົມພະຍາບານຂັ້ນຕົ້ນ. ນອກຈາກນັ້ນ, ອົງການເຫັດໄອ ຍັງໄດ້ຈັດການແລກປ່ຽນບົດຮຽນກັບ ຄຄກລຂ ແຂວງຫຼວງພະບາງ ພ້ອມທັງ ສະໜອງເຄື່ອງໃຊ້ຫ້ອງການ ແລະ ສິ່ງອຳນວຍຄວາມສະດວກຈຳນວນໜຶ່ງ.
- **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ**: 25 ບ້ານ ໄດ້ຮັບຜົນປະໂຫຍດຈາກການພັດທະນາແຜນການຄຸ້ມຄອງຄວາມສ່ຽງ ແລະ ໄດ້ມີການຈັດຕັ້ງປະຕິບັດໂດຍອາສາສະໝັກຂອງຊຸມຊົນ ທີ່ສ້າງຕັ້ງຂຶ້ນມາເພື່ອສະໜັບສະໜູນໂຄງການ. ປະຊາຊົນ 11,884 ຄົນ (ຍິງ 5,927, ຊາຍ 5,957) ໄດ້ຮັບຜົນປະໂຫຍດຈາກກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ຜູ້ຢ້ຽມຢາມ 204 ຄົນ ໄດ້ຮັບຂໍ້ມູນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຈາກການມາຢ້ຽມຢາມສູນຂໍ້ມູນຂ່າວສານ ຢູ່ເມືອງຊຳເໜືອ. ຄູສອນ 50 ຄົນ ແລະ ພະນັກງານວິຊາການ ຈາກ 44 ໂຮງຮຽນ ໄດ້ຮັບການຝຶກອົບຮົມຫຼັກສູດຂັ້ນປະຖົມ ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- **ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ**: ຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຜູ້ພິການ 45 ຄົນ ຢູ່ໃນ 24 ບ້ານ ໄດ້ຖືກກຳນົດເຂົ້າໃນການສອບຖາມ, ໃນນັ້ນ 40 ຄົນ ໄດ້ຖືກສົ່ງຕໍ່ໄປປິ່ນປົວການແພດ ແລະ ຟື້ນຟູ ແລະ 12 ຄົນ ແມ່ນໄດ້ຮັບຄຳປຶກສາທາງດ້ານການຟື້ນຟູຈິດໃຈຈາກພະນັກງານທີ່ເຮັດວຽກກ່ຽວກັບສັງຄົມຂອງອົງການເຫັດໄອ, ອາສາສະໝັກຊຸມຊົນ, ທ່ານໝໍ ແລະ ພະຍາບານ ໂຮງໝໍເມືອງ. ອາສາສະໝັກຊຸມຊົນ, ທ່ານໝໍ ແລະ ພະຍາບານ ທັງໝົດ 38 ຄົນ ໄດ້ຮັບຜົນປະໂຫຍດຈາກການສືບຕໍ່ເຂົ້າຮ່ວມຝຶກອົບຮົມ ກ່ຽວກັບການຮັກສາສຸຂະພາບຈິດໃຈ. ຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄົນພິການ 112 ຄົນ ຢູ່ໃນ 20 ບ້ານ ໄດ້ຮັບຜົນປະໂຫຍດຈາກການເຂົ້າຮ່ວມກິດຈະກຳຕອງໂສ້ໃນການສ້າງມູນຄ່າຈາກໄມ້ໄຜ່ ໂດຍການຝຶກອົບຮົມກ່ຽວກັບການເຮັດໃຫ້ຜະລິດຕະພັນມີຄຸນນະພາບ ແລະ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງປ່າໄມ້, ການເຈລະຈາຕໍ່ລອງດ້ານການຕະຫຼາດ ແລະ ການຝຶກອົບຮົມ ກ່ຽວກັບເທັກໂນໂລຊີໃນການຄຸ້ມຄອງຂໍ້ມູນຂ່າວສານ ແລະ ລະບົບການຮຽນຮູ້ຜ່ານການປະຕິບັດວຽກງານຕົວຈິງຂອງຍິງ-ຊາຍ.

## ກໍລະນີສຶກສາ: ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຫຼັກການຄວາມບໍ່ຈຳແນກ

ການມີສ່ວນຮ່ວມຢ່າງຮອບດ້ານໃນໂຄງການ ໃນເວລາທີ່ການແກ້ໄຂບັນຫາລະເບີດຝັງດິນ ຕິດພັນກັບການພັດທະນາແບບມີສ່ວນຮ່ວມ:

ເພື່ອຮັບປະກັນໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຜູ້ພິການອື່ນໆ ສາມາດຢູ່ໄດ້ກັບສະພາບຄວາມຫຍຸ້ງຍາກຂອງເຂົາເຈົ້າ, ສາມາດດູແລຕົນເອງໄດ້ ແລະ ດຳລົງຊີວິດຢູ່ໃນສັງຄົມໄດ້ຢ່າງມີຄວາມສຸກນັ້ນ ມັນມີຄວາມສຳຄັນຫຼາຍ ເພື່ອຮັບປະກັນໃຫ້ມີການຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃຫ້ເຂົາເຈົ້າກັບຄືນສູ່ຊຸມຊົນ, ສາມາດເຂົ້າເຖິງການບໍລິການທີ່ຈຳເປັນໃນການຮັກສາສຸຂະພາບ, ການຟື້ນຟູ, ທັກສະໃນການປະກອບວິຊາຊີບ ແລະ ເຮັດກິດຈະກຳຕ່າງໆໄດ້.

ຜ່ານໂຄງການດັ່ງກ່າວນີ້, ອົງການເຫັດໄອ ໄດ້ມີຄວາມພະຍາຍາມປະສານງານ ແລະ ໃຫ້ມີການເຊື່ອມໂຍງ ລະຫວ່າງ ຄູ່ຮ່ວມພັດທະນາ, ຈຸດບໍລິການຕ່າງໆຢູ່ຂັ້ນເມືອງ ແລະ ແຂວງ (ລວມທັງ ຈຸດບໍລິການຕ່າງໆທີ່ມີຢູ່ແຂວງຊຽງຂວາງ) ແລະ ລະດັບຊາດ ໃນການເຮັດໃຫ້ວຽກງານຕ່າງໆເກີດຜົນປະໂຫຍດສູງສຸດແກ່ບັນດາຜູ້ທີ່ມີຄວາມຕ້ອງການ.

ນາງ ຫຼ້າ, ອາຍຸ 26 ປີ, ອາໄສຢູ່ບ້ານກໍຮີ່ງ, ເມືອງຫົວເມືອງ, ອາຊີບແມ່ເຮືອນ, ມີລູກ 2 ຄົນ, ເຄີຍເປັນຄົນຂີ້ອາຍ ແລະ ບໍ່ໝັ້ນໃຈໃນໂຕເອງ. ຊີວິດຄູ່ບໍ່ຄ່ອຍມີຄວາມສຸກ ແລະ ສຸຂະພາບກໍ່ບໍ່ແຂງແຮງ ຍ້ອນຜົວຂອງຕົນເອງໃຊ້ຄວາມຮຸນແຮງຕໍ່ລາວໃນໄລຍະແຕ່ງງານກັນ. ນາງຕ້ອງໄດ້ດູແລວຽກເຮືອນທັງໝົດ ແລະ ລູກອີກ 2 ຄົນ. ລາວມີໂອກາດຈຳກັດໃນການເຂົ້າຮ່ວມປະຊຸມ ຫຼືທ ກິດຈະກຳຕ່າງໆຂອງຊຸມຊົນ. ລາວໄດ້ເລີ່ມເຂົ້າມາເຮັດກິດຈະກຳຮ່ວມກັບອົງການເຫັດໄອ ຕອນທີ່ ທີມງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ມາຢ້ຽມຢາມບ້ານຂອງລາວ ໃນການເກັບກຳຂໍ້ມູນຢູ່ຊຸມຊົນ ແລະ ໄດ້ເຫັນລາວຍ່າງໄປມາດ້ວຍທາທາງໂຍກເຢກ. ລາວ ໄດ້ກາຍເປັນອາສາສະໝັກຊຸມຊົນຜູ້ທຳອິດທີ່ເປັນຕົວແບບໃນການນຳໃຊ້ລະບົບເຄື່ອງມືຮູບແບບການຮຽນຮູ້ແບບຍິງ-ຊາຍ ແລະ ເປັນຜູ້ທີ່ເຮັດວຽກກ່ຽວກັບຄົນພິການໄດ້ດີທີ່ສຸດຢູ່ໃນບ້ານຂອງລາວ. ນອກຈາກນັ້ນ, ລາວຍັງໄດ້ເປັນສະມາຊິກກຸ່ມຜະລິດສິນຄ້າຈາກໄມ້ໃຜ່ ແລະ ເຄື່ອງປາຂອງດົງທີ່ສ້າງຂຶ້ນໂດຍອົງການເຫັດໄອ. ລາວໄດ້ເລີ່ມຕົ້ນນຳໃຊ້ລະບົບເຄື່ອງມືຮູບແບບການຮຽນຮູ້ແບບຍິງ-ຊາຍ ເຂົ້າໃນການສ້າງ ແລະ ປັບປຸງເສດຖະກິດຄອບຄົວຂອງຕົນເອງ. ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກໃນການລະດົມໃຫ້ຜົວເຂົ້າມາມີສ່ວນຮ່ວມໃນໂຄງການດັ່ງກ່າວກໍ່ຕາມ, ໃນທີ່ສຸດ ລາວກໍ່ສາມາດເອົາຊະນະຕໍ່ສຸຂະພາບທີ່ບໍ່ແຂງແຮງຂອງຕົນເອງໄດ້ ໂດຍການແບ່ງປັນຄວາມຮັບຜິດຊອບໃຫ້ຜົວ ຊ່ວຍເຮັດວຽກເຮືອນ, ເຂົ້າຮ່ວມເປັນສະມາຊິກກຸ່ມຜະລິດຕະພັນຈາກໄມ້ໃຜ່, ປູກເຫັດແດງ ແລະ ເຮັດການຟ່ອຍ.

ຈາກຄອບຄົວທີ່ຢູ່ແບບສືບມື້ສືບວັນ, ປະຈຸບັນນີ້ ຄອບຄົວຂອງລາວ ມີລາຍໄດ້ຫຼາຍກວ່າ 10 ລ້ານກີບຕໍ່ປີ. ພວກເຂົາມີເງິນຝາກໃນບັນຊີຢູ່ທີ່ຊຸມຊົນ. ພວກເຂົາທ້ອນເງິນໄວ້ເພື່ອເອົາໄວ້ຊື້ລົດຈັກຮັບໃຊ້ຄອບຄົວ. ປະຈຸບັນນີ້, ນາງຫຼ້າ ກາຍເປັນຜູ້ຍິງທີ່ມີຄວາມໝັ້ນໃຈຫຼາຍ ແລະ ສາມາດແບ່ງປັນບົດຮຽນຊີວິດຂອງລາວ ໃຫ້ແກ່ຜູ້ຍິງຄົນອື່ນໆທີ່ໄດ້ຮັບຜົນກະທົບຈາກ ລບຕ ຢູ່ໃນບ້ານຂອງລາວ.

## ວຽກຈຸດສຸມໃນປີ 2021

ອົງການເຫັດໄອ ຈະສືບຕໍ່ຂະຫຍາຍການປະຕິບັດງານໃໝ່ຕື່ມອີກ ຢູ່ໃນ 10 ບ້ານ ຢູ່ເມືອງຫົວເມືອງ, 8 ບ້ານ ຢູ່ເມືອງຫ້ຽມ, ແຂວງຫົວພັນ; 8 ບ້ານ ຢູ່ເມືອງຂົວ ແລະ 13 ບ້ານຢູ່ເມືອງໃໝ່, ແຂວງຜົ້ງສາລີ ຜ່ານການສຳຫຼວດບໍ່ແມ່ນແບບວິຊາການ, ການສຳຫຼວດແບບວິຊາການ, ການທຳລາຍ ລບຕ ແບບເຄື່ອນທີ່ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

ອົງການເຫັດໄອ ມີແຜນຈະປັບປຸງ ແລະ ທົດລອງ ວິທີການນຳໃຊ້ຄະນະກຳມະການຂັ້ນຊຸມຊົນ ເພື່ອຮັກສາຄວາມປອດໄພຢູ່ຂັ້ນບ້ານ ເພື່ອສະໜອງວິທີການແກ້ໄຂ/ນະໂຍບາຍຕ່າງໆໃນການປ້ອງກັນການເກີດອຸປະຕິເຫດຈາກ ລບຕ ເພື່ອຮັບປະກັນການຕອບສະໜອງການຮ້ອງຂໍ ແລະ ແກ້ໄຂຂໍ້ຂັດແຍ່ງຢູ່ໃນບ້ານ.

ອົງການເຫັດໄອ ຈະສືບຕໍ່ລະດົມຂົນຂວາຍທຶນ ແລະ ເຕັກນິກວິຊາການ ເພື່ອສະໜັບສະໜູນ ຄຊກລ ໃນການທົບທວນຄືນມາດຕະຖານແຫ່ງຊາດໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ສອດຄ່ອງກັບມາດຕະຖານສາກົນໃນການແກ້ໄຂບັນຫາລະເບີດຝັງດິນ ສະບັບ 13.10 ໂດຍການສະໜັບສະໜູນການຈັດຕັ້ງປະຕິບັດຜ່ານການປັບປຸງການປະສານງານ ລະຫວ່າງ ອົງການປະຕິບັດງານ, ຄູ່ຮ່ວມງານ ແລະ ພາກສ່ວນສະໜອງການບໍລິການ (ໂຮງໝໍ, ສູນຟື້ນຟູ, ສະຖານທີ່ການສຶກສາ, ໂຮງຮຽນວິຊາຊີບ, ການຈ້າງງານ ແລະ ອື່ນໆ...).

ອົງການເຫັດໄອ ຈະສືບຕໍ່ຍົກບັນຫາການຕົກຄ້າງຂອງລະເບີດຝັງດິນທີ່ໜັກໜ່ວງ ຢູ່ເມືອງຫົວເມືອງ ແລະ ຊອກຫາວິທີແກ້ໄຂຢູ່ບັນດາຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ລບຕ ໂດຍການນໍາໃຊ້ວິທີການສໍາຫຼວດຊອກຫາ ລບຕ ແລະ ການກວດກູ້ ລບຕ.

ການຂໍຕໍ່ອາຍຸຂອງບົດບັນທຶກຄວາມເຂົ້າໃຈ ແລະ ຂັ້ນຕອນໃນການອະນຸມັດບົດບັນທຶກຄວາມເຂົ້າໃຈ ແມ່ນສິ່ງທ້າທາຍຕົ້ນຕໍໃນປະຈຸບັນ. ຂັ້ນຕອນໃນການອະນຸມັດບົດບັນທຶກຄວາມເຂົ້າໃຈຢູ່ຂັ້ນແຂວງ ແມ່ນໃຊ້ເວລາດົນ. ນອກຈາກນັ້ນ, ການຂໍຕໍ່ໃບຢັ້ງຢືນການປະຕິບັດງານຂອງອົງການເຫັດໄອ ກໍ່ຍັງມີຄວາມຊັກຊ້າ ສິ່ງຜົນກະທົບເຮັດໃຫ້ບໍ່ສາມາດຂໍຕໍ່ອາຍຸບົດບັນທຶກຄວາມເຂົ້າໃຈຕື່ມໄດ້ ແລະ ເຮັດໃຫ້ອົງການເຫັດໄອ ບໍ່ສາມາດຕອບສະໜອງການແກ້ໄຂສູກເສີນຈາກຊຸມຊົນຕ່າງໆໄດ້ຢ່າງທັນການ, ຊຶ່ງອາດຈະເຮັດໃຫ້ເກີດອຸປະຕິເຫດຈາກ ລບຕ ຂຶ້ນໄດ້ ເນື່ອງຈາກບໍ່ມີອົງການປະຕິບັດງານອື່ນໃນຊຸມຊົນແຫ່ງນີ້. ເຖິງຢ່າງໃດກໍ່ຕາມ, ທຶນຮອນໃໝ່ຈາກກະຊວງການຕ່າງປະເທດນອກແວ ເພື່ອສະໜັບສະໜູນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈະນໍາໃຊ້ເຂົ້າໃນການສະໜັບສະໜູນຄາດໝາຍປະຈໍາປີຂອງ ຄຊກລ ເພື່ອສ້າງຄວາມເຂັ້ມແຂງໃນການປະຕິບັດວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໂດຍການປັບປຸງແຜນຍຸດທະສາດແຫ່ງຊາດ ແລະ ທົບທວນຄືນມາດຕະຖານແຫ່ງຊາດ.

## ຄູ່ຮ່ວມງານ

- ຫ້ອງການ ຄຊກລ ສູນກາງ ແລະ ຫ້ອງການ ຄຄກລຂ ແຂວງ
- ອົງການເຈູດ ແລະ ອົງການແບມບູ ຢູ່ແຂວງຫົວພັນ: ສະໜັບສະໜູນໃນການເຮັດກິດຈະກໍາຢູ່ຂັ້ນບ້ານ/ເມືອງ ແລະ ຂັ້ນແຂວງ ເພື່ອຄວາມຍືນຍົງໃນການຄຸ້ມຄອງບໍລິຫານຊັບພະຍາກອນທໍາມະຊາດ ເພື່ອປະກອບສ່ວນເຂົ້າໃນການລຶບລ້າງຄວາມທຸກຍາກ ໂດຍການຈັດສັນຊອກຫາວິທີການນໍາເອົາການຜະລິດໃຫ້ເຂົ້າເຖິງຕະຫຼາດໄດ້ງ່າຍຂຶ້ນ ແລະ ການກໍານົດຂັ້ນລາຄາຂອງລາຄາສິນຄ້າໃນຕະຫຼາດ
- ອົງການອອກສ໌ຟາມ: ສ້າງຄວາມເຂັ້ມແຂງຂີດຄວາມສາມາດໃນການເປັນຄູ່ຮ່ວມງານ ແລະ ຊຸມຊົນທີ່ດີກ່ຽວກັບລະບົບການເຊື່ອມສານວຽກງານບົດບາດຍິງ-ຊາຍ ແລະ ເຄື່ອງມືໃນການປູກລະດົມແນວຄວາມຄິດການພັດທະນາໃນຊຸມຊົນ
- ຄກລ ແຂວງຫົວພັນ
- ກະຊວງສຶກສາທິການ ແລະ ກິລາ
- ກະຊວງກະສິກໍາ ແລະ ປ່າໄມ້
- ສູນກາງສະຫະພັນແມ່ຍິງລາວ
- ອໍານາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈໍາຫ້ອງການ | | | | ພະນັກງານປະຈໍາພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 6 | 2 | | | 44 | 22 | 3 | 0 |
| ລວມ | 77 | | | | | | |

## ຕົວເລກຜົນສໍາເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສໍາເລັດການປະຕິບັດງານຂອງອົງການ ເຫັດໄອ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສໍາເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກໍາ | ແຂວງ / ເມືອງ |
|---|---|
| ການສໍາຫຼວດບໍ່ແມ່ນວິຊາການ | ແຂວງຫົວພັນ / ເມືອງຫົວເມືອງ |
| ການສໍາຫຼວດວິຊາການ | ແຂວງຫົວພັນ / ເມືອງຫົວເມືອງ |
| ການກວດກູ້ ລບຕ | ແຂວງຫົວພັນ / ເມືອງຫົວເມືອງ |
| ການທໍາລາຍເຄື່ອນທີ່ ລບຕ | ແຂວງຫົວພັນ / ເມືອງຫົວເມືອງ |
| ການໂຄສະນາສຶກສາຄວາມສ່ຽງຂອງ ລບຕ | ແຂວງຫົວພັນ / ເມືອງຫົວເມືອງ |

## ການເງິນ ໃນປີ 2020

| ຊື່ໂຄງການ | ມື້ເຊັນ | ໄລຍະ | ຈຳນວນ | ແບ່ງເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການແກ້ໄຂບັນຫາ ລບຕ ແບບຄົບຊຸດ ເພື່ອຫຼຸດຜ່ອນຜົນກະທົບຈາກ ລບຕ ຕໍ່ຄວາມປອດໄພ ແລະ ການດຳລົງຊີວິດຂອງປະຊາຊົນ ຢູ່ແຂວງຫົວພັນ, ສປປ ລາວ | 20 ທັນວາ 2018 | ຖືກຮັບຮອງ ໃນວັນທີ 31 ທັນວາ 2020 | 2,749,308 ເອີໂຣ | ປີທີ 1: 1,062,256 ເອີໂຣ<br>ປີທີ 2: 1,072,851 ເອີໂຣ<br>ປີທີ 3: 614,202 ເອີໂຣ | ອີຢູ |

| ທຶນໂດຍກົງທີ່ໄດ້ຮັບ (ໂດລາ ສຫລ) ໃນປີ 2020: 468,935 ໂດລາ ສຫລ | |
|---|---|
| ຄ່າໃຊ້ຈ່າຍທັງໝົດໃນປີ 2020: 1,121,993 ໂດລາ ສຫລ | |
| **ລາຍລະອຽດ** | **ຈຳນວນ** |
| ເງິນເດືອນພະນັກງານ | 83,025 |
| ລາຍຈ່າຍການປະຕິບັດງານ: | |
| - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 41,732 |
| - ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | 422,706 |
| - ການສຳຫຼວດ ແລະ ກວດກູ້ ລບຕ | 481,146 |
| ຊື້ວັດຖຸອຸປະກອນ | |
| ລາຍຈ່າຍບໍລິຫານ | 72,427 |
| ການຕິດຕາມ/ການປະເມີນຜົນ | 20,958 |
| **ລວມ** | **1,121,993** |

# ກອງກວດກູ້ລະເບີດເພື່ອມະນຸດສະທຳກອງທັບ (ກອງ 58)

## ກິດຈະກຳ ໃນປີ 2020

ໃນປີ 2020 ການຈັດຕັ້ງປະຕິບັດກິດຈະກຳຂອງກອງກວດກູ້ລະເບີດມະນຸດສະທຳກອງທັບ (ກອງ 58) ແມ່ນໄດ້ຮັບການສະໜັບສະໜູນຈາກລັດຖະບານ ສ. ເກົາຫຼີ ຜ່ານອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ໄລຍະທີ 2 ສຳລັບປີ 2019-2021 ໂດຍປະກອບມີວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ການສຳຫຼວດ, ກວດກູ້ ແລະ ທຳລາຍ ລບຕ ຢູ່ແຂວງບໍລິຄຳໄຊ, ແຂວງວຽງຈັນ ແລະ ນະຄອນຫຼວງວຽງຈັນ.

ໃນປີ 2019, ກອງກວດກູ້ລະເບີດມະນຸດສະທຳກອງທັບ 2 ທີມໄດ້ຮັບການຝຶກອົບຮົມໃນທ້າຍປີ 2019 ແລະ ເລີ່ມຈັດຕັ້ງປະຕິບັດວຽກງານໃນປີ 2020. ກອງກວດກູ້ລະເບີດມະນຸດສະທຳກອງທັບ ທັງໝົດ 7 ທີມທີ່ມີໃນປະຈຸບັນ ແມ່ນໄດ້ຮັບການປະກອບວັດຖຸອຸປະກອນໂດຍການສະໜັບສະໜູນຂອງອົງການກອຍກາ ແນໃສ່ເປັນສ້າງຄວາມອາສາມາດແບບຍືນຍົງໃນການແກ້ໄຂບັນຫາ ລບຕ ໃນໄລຍະຍາວ. ບັນດາທີມເຫຼົ່ານີ້ ແມ່ນໄດ້ດຳເນີນການສຳຫຼວດ ແລະ ກວດກູ້ ລບຕ ຢູ່ແຂວງບໍລິຄຳໄຊ ແລະ ຢູ່ແຂວງອື່ນໆທີ່ມບໍ່ມີອົງການປະຕິບັດງານ. ນອກຈາກນັ້ນ, ກອງກວດກູ້ລະເບີດມະນຸດສະທຳກອງທັບ ຍັງເຮັດໜ້າທີ່ໃນການຕອບຮັບແກ້ໄຂ ລບຕ ສຸກເສີນ ຢູ່ບັນດາແຂວງທີ່ມີ ລບຕຕົກຄ້າງ ທີ່ບໍ່ມີອົງການປະຕິບັດງານເຮັດວຽກຢູ່ ອີກດ້ວຍ ແນໃສ່ເປັນການປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ 18 "ຊີວິດທີ່ປອດໄພຈາກລະເບີດ".

ໃນປີ 2020, ການລົງຢ້ຽມຢາມສະໜາມຂອງປະເທດຜູ້ໃຫ້ທຶນໄດ້ຈັດຂຶ້ນຢູ່ແຂວງບໍລິຄຳໄຊ. ຫຼາຍບົດຂ່າວກ່ຽວກັບ ລບຕ ໄດ້ຖືກຕີພິມ ແລະ ໂຄສະນາຜ່ານສື່ຕ່າງໆ ເປັນຕົ້ນແມ່ນ ການສະໜັບສະໜູນຂອງອົງການກອຍກາ ເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ ໄດ້ສະແດງອອກຢູ່ໃນສື່ຕ່າງໆຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ສັນຍາລັກໂລໂກ້ຂອງອົງການກອຍກາ ຍັງໄດ້ຕິດຢູ່ບັນດາອຸປະກອນຕ່າງໆຫ້ອງການ ຄຊກລ ແລະ ກອງກວດກູ້ລະເບີດມະນຸດສະທຳກອງທັບ.



*ການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ທີ່ມີນັກຮຽນຫຼາຍກວ່າ 300 ຄົນເຂົ້າຮ່ວມ, ຢູ່ໂຮງຮຽນທົ່ງວຽງຄຳ, ເມືອງຫຼັກຊາວ, ແຂວງບໍລິຄຳໄຊ*

## ສິ່ງທ້າທາຍ

ໃນປີ 2020, ການປະຕິບັດງານຂອງກອງ 58 ບໍ່ໄດ້ຕາມແຜນການທີ່ວາງໄວ້ ຍ້ອນສະພາບການແຜ່ລະບາດຂອງພະຍາດໂຄວິດ 19 ແລະ ງົບປະມານປະຕິບັດງານມີຈຳກັດ.

## ແຜນການ ສຳລັບປີ 2021

- ສືບຕໍ່ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ 73 ບ້ານ, ຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ.
- ສືບຕໍ່ດຳເນີນການສຳຫຼວດບໍ່ແມ່ນດ້ານວິຊາການ ຢູ່ 21 ບ້ານ, ຢູ່ແຂວງວຽງຈັນ, ແຂວງໄຊສົມບູນ ແລະ ແຂວງບໍລິຄຳໄຊ.
- ສືບຕໍ່ດຳເນີນການສຳຫຼວດດ້ານວິຊາການ ຢູ່ 30 ບ້ານ, ຢູ່ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ.
- ສືບຕໍ່ດຳເນີນການກວດກູ້ ລບຕ ຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ.

## ຄູ່ຮ່ວມງານ

- ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
- ອຳນາດການປົກຄອງແຂວງບໍລິຄຳໄຊ
- ອຳນາດການປົກຄອງເມືອງຄຳເກີດ
- ອົງການກອຍກາ ປະຈຳ ສປປ ລາວ
- ອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ

## ບຸກຄະລາກອນໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 0 | 0 | 0 | 0 | 86 | 10 | 0 | 0 |
| ລວມ | **96** | | | | | | |

## ຕົວເລກຜົນສຳເລັດໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງ ກອງ 58 ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ | ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ |
| ການກວດກູ້ | ແຂວງບໍລິຄຳໄຊ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ |
| ການຕອບຮັບສຸກເສີນ | ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ |

## ການເງິນ ໃນປີ 2020:

### ລາຍຈ່າຍ ໃນປີ 2020 (ໂດລາ ສຫລ)

| ລາຍລະອຽດ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | ລັດຖະບານ ສປປ ລາວ ເປັນຜູ້ຮັບຜິດຊອບ |
| ລາຍຈ່າຍການປະຕິບັດ | 46,237 |
| ຈັດຊື້ອຸປະກອນ | 16,540 |
| **ລວມ** | **62,777** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ອົງການກອຍກາ ຜ່ານ ອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ | |
| **ລວມ** | **62,777** |

# ອົງການສຶກສາໂລກ (ເວີອິດູເຄເຊິ້ນ)

## ກິດຈະກຳ ໃນປີ 2020

■ **ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:**

ອົງການສຶກສາໂລກ ໄດ້ຄຸ້ມຄອງບໍລິຫານກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ແຂວງສິງຄາມ ໂດຍການສະໜອງທຶນຊ່ວຍເຫຼືອປິ່ນປົວຜູ້ລອດຊີວິດຈາກ ລບຕ ໃນການຂົນສົ່ງ, ຊື້ຢາປິ່ນປົວ ແລະ ເງິນກິນຢູ່ພັກເຊົາຈຳນວນໜຶ່ງ ໃນເວລາທີ່ເຂົາເຈົ້າມາປິ່ນປົວຢູ່ໂຮງໝໍ ຫຼື ຢູ່ສູນຟື້ນຟູ.

ກອງທຶນດັ່ງກ່າວ ຍັງໃຊ້ຈ່າຍເຂົ້າໃນການສືບຕໍ່ປິ່ນປົວສຸຂະພາບ ແລະ ການຜ່າຕັດ ໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ແລະ ຄ່າມຸ້ງນຄາບສິ່ງສະການ. ໃນປີ 2020, ກອງທຶນປິ່ນ ປົວຜູ້ຖືກເຄາະຮ້າຍຈາກ ລບຕ ແຕສິງຄາມ ໄດ້ດຳເນີນການລົງຕິດຕາມຜູ້ລອດຊີວິດຈາກ ລບຕ ຢູ່ແຂວງຊຽງຂວາງ, ຜົ້ງສາລີ ແລະ ສະຫວັນນະເຂດ. ໂພດສເຕີຂອງກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ແຕສິງຄາມ ແລະ ໃບປິວ ໄດ້ຖືກແຈກຢາຍໃຫ້ພະນັກງານຂອງລັດຖະບານ ແລະ ຊຸມຊົນຕ່າງໆ ກ່ຽວກັບວິທີການເຂົ້າເຖິງການບໍລິການຂອງກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ແຕສິງຄາມ. ນອກຈາກນັ້ນ, ອົງການສຶກສາໂລກ ຍັງໄດ້ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ແຕສິງຄາມ ຢູ່ຕາມໂຮງຮຽນ ແລະ ໃນເວລາທີ່ມີການຝຶກອົບຮົມໃຫ້ພະນັກງານຂອງກະຊວງສຶກສາທິການ ແລະ ກິລາ ຜ່ານໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແບບຄົບຊຸດຢູ່ແຂວງຈຳປາສັກ ແລະ ສະຫວັນນະເຂດ.

ອົງການສຶກສາໂລກ ໄດ້ຈັດຕັ້ງປະຕິບັດກິດຈະກຳຂອງອົງການໄອກາດ ເພື່ອສະໜັບສະໜູນການພັດທະນາຄົນພິການແບບມີສ່ວນຮ່ວມຢູ່ ສປປ ລາວ ໂດຍທຶນສະໜັບສະໜູນຂອງອົງການສາກົນ ເພື່ອການພັດທະນາຂອງ ສ. ອາເມລິກາ. ໃນປີ 2020 ໂດຍການເປັນຄູ່ຮ່ວມງານຢ່າງໃກ້ສິດກັບຄະນະກຳມະການແຫ່ງຊາດເພື່ອຄົນພິການ, ກົມປິ່ນປົວ ແລະ ການຟື້ນຟູ ແລະ ສູນການແພດຟື້ນຟູໜ້າທີ່ການ ຂອງກະຊວງສາທາລະນະສຸກ ແລະ 2 ອົງການຈັດຕັ້ງທາງສັງຄົມ ຄື: ສະມາຄົມປັບປຸງຄຸນນະພາບຊີວິດຂອງຜູ້ລອດຊີວິດຈາກ ລບຕ ແລະ ສະມາຄົມເພື່ອການລະດົມ ແລະ ປັບປຸງຊຸມນະບົດ ໄດ້ດຳເນີນການທົດລອງກ່ຽວກັບວິທີການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແບບປະສົມປະສານ ເພື່ອແກ້ໄຂຄວາມຕ້ອງການທີ່ຍັງບໍ່ທັນພຽງພໍຂອງຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄົນພິການຈາກສາເຫດອື່ນໆ. ຜ່ານການຄຸ້ມຄອງບໍລິຫານກ່ຽວກັບຈຳນວນກໍລະນີ ແລະ ການມີສ່ວນຮ່ວມຂອງຊຸມຊົນ ເພື່ອແກ້ໄຂບັນຫາຂອງຄົນພິການທີ່ປະເຊີນຢູ່ໃນຊຸມຊົນຂອງເຂົາເຈົ້າ ເຫັນວ່າ ຄົນພິການຫຼາຍຄົນໄດ້ມີການເຂົ້າເຖິງການບໍລິການທາງດ້ານສຸຂະພາບ ແລະ ການຟື້ນຟູຫຼາຍຂຶ້ນກວ່າເກົ່າ ແລະ ໄດ້ເລີ່ມກິດຈະກຳສ້າງລາຍຮັບເພື່ອປັບປຸງຄຸນນະພາບຊີວິດຂອງເຂົາເຈົ້າ.

■ **ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ:**

ອົງການສຶກສາໂລກ ໄດ້ຈັດຕັ້ງປະຕິບັດໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແບບຮອບດ້ານຢູ່ ສປປ ລາວ ໂດຍການເປັນຄູ່ຮ່ວມງານກັບກະຊວງສຶກສາທິການ ແລະ ກິລາ. ໃນປີ 2020, ອົງການສຶກສາໂລກ ແລະ ພະນັກງານຂອງກະຊວງສຶກສາທິການ ແລະ ກິລາ ໄດ້ທົດລອງການສິດສອນ ກ່ຽວກັບຫຼັກສູດໃໝ່ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໃນ 12 ໂຮງຮຽນ ໃນຂອບເຂດທົ່ວປະເທດ ແລະ ໄດ້ຝຶກອົບຮົມໃຫ້ພະນັກງານຂອງພະແນກສຶກສາທິການ ແລະ ກິລາຂັ້ນແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ 51 ຄົນ ເພື່ອໃຫ້ກາຍເປັນຄູຝຶກກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ບັນດາຄູຝຶກເຫຼົ່ານີ້ ໄດ້ຝຶກອົບຮົມຕໍ່ໃຫ້ແກ່ຄູສອນ 2,264 ຄົນ ກ່ຽວກັບຫຼັກສູດໃໝ່ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ນອກຈາກນັ້ນ, ອົງການສຶກສາໂລກ ຍັງໄດ້ເຮັດວຽກກັບວິທະຍາໄລຄູ ເພື່ອປັບປຸງປື້ມຄູ່ມືກ່ຽວກັບການສິດສອນຫຼັກສູດການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ຈັດການຝຶກອົບຮົມກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ຄູສອນນັກຮຽນປີສຸດທ້າຍ. ພ້ອມນັ້ນ, ກໍ່ໄດ້ມີການສ້າງກອງລະຄອນຕຸກກະຕາ 45 ກອງຂຶ້ນ ແລະ ທີມງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ໃຫ້ການສະໜັບສະໜູນສະມາຊິກກອງລະຄອນ ທັງໝົດ 187 ຄົນ ເພື່ອເຮັດການສະແດງຢູ່ວັນສຳຄັນຕ່າງໆ. ການສະແດງດັ່ງກ່າວ ມີເດັກນ້ອຍເຂົ້າຮ່ວມທັງໝົດ 61,523 ຄົນ ແລະ ມີຜູ້ໃຫຍ່ 17,223 ຄົນ.

## ຜົນສຳເລັດ ໃນປີ 2020

ຕາຕະລາງຂ້າງລຸ່ມ ແມ່ນການສັງລວມຜົນສຳເລັດໃນປີ 2020 ຂອງໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແບບຮອບດ້ານ:

| ກິດຈະກຳ | ແຜນການປີ 2020 | ຜົນສຳເລັດໃນປີ 2020 | |
|---|---|---|---|
| | ຄາດໝາຍ | ການປະຕິບັດຕົວຈິງ | ເປີເຊັນ (%) |
| ດຳເນີນການທົດລອງສິດສອນ ກ່ຽວກັບຫຼັກສູດໃໝ່ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ຊັ້ນປະຖົມ ແລະ ມັດທະຍົມ | ດຳເນີນການທົດລອງສິດສອນ ກ່ຽວກັບຫຼັກສູດໃໝ່ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໂຮງຮຽນຊັ້ນປະຖົມ 6 ແຫ່ງ ແລະ ໂຮງຮຽນມັດທະຍົມ 6 ແຫ່ງ | ຫຼັກສູດໄດ້ຖືກທົດລອງສິດສອນ ຢູ່ໃນໂຮງຮຽນປະຖົມ 6 ແຫ່ງ ແລະ ໂຮງຮຽນມັດທະຍົມ 6 ແຫ່ງ ຢູ່ໃນ 3 ເມືອງ. ຫຼັກສູດດັ່ງກ່າວນີ້ ໄດ້ຜ່ານການຮັບຮອງຈາກກະຊວງສຶກສາທິການ ແລະ ກິລາ ແລະ ຈະເຊື່ອມສານເຂົ້າໃນຫຼັກສູດແຫ່ງຊາດ | 100% |

| | | | |
|---|---|---|---|
| ດຳເນີນການຝຶກອົບຮົມໃຫ້ແກ່ຄູຝຶກ ກ່ຽວກັບການສອນບົດຮຽນການ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 51 ຄົນ | 51 ຄົນ | 100% |
| ດຳເນີນການຝຶກອົບຮົມໃຫ້ແກ່ຄູ ສອນ ກ່ຽວກັບການໂຄສະນາສຶກ ສາຄວາມສ່ຽງຈາກ ລຕ | ຄູສອນ 2,264 ຄົນ | ຄູສອນ 2,264 ຄົນ | 100% |
| ສ້າງກອງລະຄອນຕຸກກະຕາກ່ຽວ ກັບການໂຄສະນາສຶກສາຄວາມ ສ່ຽງຈາກ ລບຕ | 78 ກອງລະຄອນ | 45 ກອງລະຄອນ | 58% |
| ສະໜັບສະໜູນການສະແດງຂອງ ກອງລະຄອນຕຸກກະຕາໃນວັນ ສຳຄັນຕ່າງໆ | 422 ການສະແດງ | 328 ການສະແດງ | 78% |
| ປັບປຸງປຶ້ມຄູ່ມືການສອນກ່ຽວກັບ ການໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ ໃຫ້ແກ່ວິທະນາໄລຄູ | ເພື່ອປັບປຸງປຶ້ມຄູ່ມືການ ສອນກ່ຽວກັບການໂຄສະນາ ສຶກສາຄວາມສ່ຽງ ຈາກ ລບຕ ໃຫ້ແກ່ວິທະນາໄລຄູ | ປຶ້ມຄູ່ມືການສອນກ່ຽວກັບການໂຄສະ ນາສຶກສາຄວາມສ່ຽງ ຈາກ ລບຕ ໃຫ້ແກ່ວິທະນາໄລຄູ ໄດ້ຖືກພັດທະ ນາ | 100% |
| ດຳເນີນການຝຶກອົບຮົມຄູ ໃຫ້ກາຍເປັນຜູ້ຊ່ຽວຊານໃນການ ສອນກ່ຽວກັບການໂຄສະນາສຶກ ສາຄວາມສ່ຽງຈາກ ລບຕ ຢູ່ໃນວິທະຍາໄລຄູ | ຊ່ຽວຊານ 40 ຄົນ | ຊ່ຽວຊານ 16 ຄົນ | 40 % |
| ດຳເນີນການຝຶກອົບຮົມໃຫ້ແກ່ຄູ ສອນກ່ຽວກັບການໂຄສະນາສຶກ ສາຄວາມສ່ຽງຈາກ ລບຕ ຢູ່ວິ ທະຍາໄລຄູ | ຊ່ຽວຊານ 160 | ຄູສອນ 473 | 296% |
| ສະໜັບສະໜູນການຝຶກອົບຮົມ ໃຫ້ແກ່ນັກຮຽນປີສຸດທ້າຍ ຢູ່ໃນ ວິທະຍາໄລຄູ 8 ແຫ່ງ ກ່ຽວກັບບົດ ຮຽນການໂຄສະນາສຶກສາຄວາມ ສ່ຽງຈາກ ລບຕ | 1,469 ນັກຮຽນທີ່ຈະເປັນຄູສອນ | 2,046 ນັກຮຽນທີ່ຈະເປັນຄູສອນ | 139% |

ຕາຕະລາງຂ້າງລຸ່ມ ສະແດງໃຫ້ເຫັນຜົນສຳເລັດຂອງໂຄງການໂອກາດໃນປີ 2020 ກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:

| ກິດຈະກຳ | ແຜນການປີ 2020 | ຜົນສຳເລັດໃນປີ 2020 | |
|---|---|---|---|
| | ຄາດໝາຍ | ການປະຕິບັດຕົວຈິງ | ເປີເຊັນ (%) |
| ດຳເນີນການໂຄສະນາປູກຈິດສຳ ນຶກກ່ຽວກັບການມີສ່ວນຮ່ວມ ຂອງຄົນພິການ ແລະ ໃຫ້ຊຸມຊົນ ມີສ່ວນຮ່ວມ ໃນການກຳນົດຄົນພິການ | 51 ບ້ານເປົ້າໝາຍ | 51 ບ້ານເປົ້າໝາຍ ໄດ້ສຳເລັດ ການໂຄສະນາປູກຈິດສຳນຶກຊຸມ ຊົນ ກ່ຽວກັບຄົນພິການ 3,633 ຄົນ (49% ຜູ້ຍິງ) ເຂົ້າຮ່ວມ ໃນນັ້ນ, ຜູ້ເຂົ້າຮ່ວມ 1,266 ຄົນ ໄດ້ຖືກກຳນົດເປັນບຸກຄົນ ທີ່ມີຄວາມຫຍຸ້ງຍາກໃນການເຮັດ ວຽກທຳມາຫາກິນ. | 100% |

| | | | |
|---|---|---|---|
| ຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຄົນເຈັບ ໂດຍປະກອບມີ ການປະເມີນຄວາມຕ້ອງການແບບລາຍບຸກຄົນ, ການສົ່ງຕໍ່ໄປຍັງສະຖານທີ່ປິ່ນປົວ ແລະ ຟື້ນຟູ, ເລີ່ມຈັດຕັ້ງປະຕິບັດກິດຈະກໍາສ້າງລາຍໄດ້ | 360 ກໍລະນີຄົນເຈັບ ມີເປົ້າໝາຍຈະເລີ່ມປະຕິບັດ | 244 ກໍລະນີຄົນເຈັບ ໄດ້ເລີ່ມປະຕິບັດ ເພື່ອແກ້ໄຂຄວາມຕ້ອງການທີ່ມີຄວາມແຕກຕ່າງກັນ ເຊັ່ນ: ຄວາມຕ້ອງການປິ່ນປົວສຸຂະພາບ ແລະ ການຟື້ນຟູ, ຄວາມຕ້ອງການກ່ຽວກັບການມີສ່ວນຮ່ວມໃນການສ້າງເສດຖະກິດ ແລະ ການປິ່ນປົວສຸຂະພາບຈິດ<br><br>ໃນນີ້ ມີຜູ້ລອດຊີວິດຈາກ ລບຕ 9 ຄົນ (ຍິງ 0 ຄົນ) | 67% |
| ຈັດຕັ້ງກິດຈະກໍາຕ່າງໆໃນຊຸມຊົນ ເພື່ອໂຄສະນາ ກ່ຽວກັບຄົນພິການ ແລະ ການຂ້າມສິ່ງກີດຂວາງ ໂດຍການມີສ່ວນຮ່ວມຂອງຄົນພິການ | 51 ບ້ານເປົ້າໝາຍ | ໃນປີ 2020, 3 ບ້ານເປົ້າໝາຍ ໄດ້ມີການທົດລອງຈັດຕັ້ງປະຕິບັດກິດຈະກໍາ ກ່ຽວກັບການປ່ຽນແປງພຶດຕິກໍາທາງສັງຄົມ ແລະ ໃນ 3 ຄັ້ງ ນັ້ນ ມີຜູ້ເຂົ້າຮ່ວມຫຼາຍກວ່າ 30 ຄົນ<br><br>ໄດ້ຈັດງານສະເຫຼີມສະຫຼອງວັນຄົນພິການ:<br>1. ວຽງຈັນ - ຜູ້ເຂົ້າຮ່ວມ 136 ຄົນ<br>2. ເມືອງໄຊພູທອງ - ຜູ້ເຂົ້າຮ່ວມ 330 ຄົນ ຈາກຊຸມຊົນ ແລະ ອົງການປົກຄອງທ້ອງຖິ່ນ<br>3. ເມືອງຄໍາ - ຜູ້ເຂົ້າຮ່ວມ 105 ຄົນ ຈາກຊຸມຊົນ ແລະ ອົງການປົກຄອງທ້ອງຖິ່ນ | 5% |
| ເຜີຍແຜ່ຍຸດທະສາດກ່ຽວກັບການຟື້ນຟູແຫ່ງຊາດ ໃຫ້ແກ່ພະນັກງານສາທາລະນະສຸກ | 18 ແຂວງ<br>ໃນຂອບເຂດທົ່ວປະເທດ | ພະນັກງານສາທາລະນະສຸກ 73 ຄົນ ຈາກ 12 ໂຮງໝໍແຂວງ, ພະແນກສາທາລະນະສຸກແຂວງ ແລະ ຕາງໜ້າຈາກກົມອື່ນໆ ທີ່ມີຈາກກະຊວງສາທາລະນະສຸກເຂົ້າຮ່ວມ | 66% |
| ເຮັດການປະເມີນກ່ຽວກັບສິ່ງອໍານວຍຄວາມສະດວກທາງດ້ານສາທາລະນະສຸກ ເພື່ອກໍານົດຄວາມຕ້ອງການອຸປະກອນ, ໂຄງລ່າງພື້ນຖານ ແລະ ບຸກຄະລາກອນ ເພື່ອນໍາໃຊ້ເຂົ້າໃນວຽກງານການຟື້ນຟູໃຫ້ຫຼາຍຂື້ນກວ່າເກົ່າ | ໂຮງໝໍ 8 ແຫ່ງ | ອົງການໂອກາດ ໄດ້ສໍາເລັດການປະເມີນກ່ຽວກັບສິ່ງອໍານວຍຄວາມສະດວກທາງດ້ານສາທາລະນະສຸກ ຢູ່ 3 ໂຮງໝໍເມືອງ ແລະ 2 ໂຮງໝໍແຂວງ | 62.5% |
| ຈັດການຝຶກອົບຮົມໃຫ້ແກ່ທ່ານໝໍ ແລະ ພະຍາບານ ຈາກໂຮງໝໍເມືອງ ແລະ ແຂວງ, ແຂວງສະຫວັນນະເຂດ ແລະ ຊຽງຂວາງ ກ່ຽວກັບການໃຫ້ການສະໜັບສະໜູນແກ່ຄົນເຈັບທາງດ້ານການຟື້ນຟູໜ້າທີ່ການ ແລະ ສຸຂະພາບຈິດ | 15 ເມືອງ<br>ຢູ່ແຂວງສະຫວັນນະເຂດ ແລະ ຊຽງຂວາງ | ອົງການໂອກາດ ໄດ້ຝຶກອົບຮົມໃຫ້ທ່ານໝໍ ແລະ ພະຍາບານ 42 ຄົນ ຈາກ:<br>- 15 ໂຮງໝໍເມືອງ (30 ຄົນ),<br>- 15 ໂຮງໝໍແຂວງ (4 ຄົນ),<br>- 15 ວິທະຍາໄລວິທະຍາສາດການແພດແຂວງສະຫວັນນະເຂດ (4 ຄົນ),<br>- ໂຮງຮຽນການແພດແຂວງຊຽງຂວາງ (4 ຄົນ) | 100% |

| | | | |
|---|---|---|---|
| ສະໜັບສະໜູນການສົ່ງຕໍ່ຄົນເຈັບໄປຍັງສະຖານທີ່ປິ່ນປົວ ແລະ ການບໍລິການຟື້ນຟູ | 360 ກໍລະນີຄົນເຈັບ | 80 ກໍລະນີຄົນເຈັບ ໄດ້ຖືກສົ່ງຕໍ່ໄປຍັງສະຖານທີ່ປິ່ນປົວ ແລະ ການບໍລິການຟື້ນຟູຈາກສູນຟື້ນຟູແຂວງ, ສູນການແພດຟື້ນຟູໜ້າທີ່ການ ແລະ ໂຮງໝໍເມືອງ ແລະ ແຂວງ | 22% |
| ສະໜັບສະໜູນສູນການແພດຟື້ນຟູໜ້າທີ່ການ ເພື່ອສືບຕໍ່ພັດທະນາສູນຝຶກອົບຮົມພັດທະນາວິຊາຊີບສໍາລັບນັກຊ່ຽວຊານທາງດ້ານການຟື້ນຟູ | ຝຶກອົບຮົມໃຫ້ພະນັກງານປະຈໍາສຸກສາລາ 1,566 ຄົນ | ບໍ່ມີຄວາມຄືບໜ້າ | 0% |

- ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ໄດ້ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄອບຄົວຂອງເຂົາເຈົ້າ ເພື່ອສະໜອງຄວາມຕ້ອງການຂັ້ນພື້ນຖານ ຫຼັງຈາກໄດ້ຮັບອຸປະຕິເຫດຈາກ ລບຕ. ໃນປີ 2020, ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ໄດ້ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ 28 ຄົນ (25 ຄົນ ແມ່ນໄດ້ຮັບການຊ່ວຍເຫຼືອມາແຕ່ຕົ້ນ ແລະ ອີກ 3 ຄົນ ແມ່ນໄດ້ຮັບການຊ່ວຍເຫຼືອຕໍ່ມາເພື່ອປິ່ນປົວສຸຂະພາບ).
- ໃນປີ 2020, ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ໄດ້ແຈກຢາຍໂພດສເຕີ້ ແລະ ໃບປິວ 403 ແຜ່ນ ໃຫ້ພະນັກງານຂອງລັດຖະບານ ແລະ ຊຸມຊົນ ກ່ຽວກັບວິທີການເຂົ້າເຖິງການບໍລິການຂອງກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ.
- ໃນເດືອນກໍລະກົດ 2020, ອົງການໂລກເພື່ອການສຶກສາ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ຄຊກລ ເພື່ອສືບຕໍ່ຈັດຕັ້ງປະຕິບັດກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ເປັນເວລາ 2 ປີ (2020-2022), ມູນຄ່າ 100,000 ໂດລາ ສຫລ ໂດຍທຶນສະໜັບສະໜູນຂອງກະຊວງການຕ່າງປະເທດ ສ. ອາເມລິກາ.

## ກໍລະນີສຶກສາ

ທ້າວ ຫຼ້າດອນ, ອາຍຸ 32 ປີ, ອາຊີບຊາວນາ ຢູ່ແຂວງຊຽງຂວາງ ໄດ້ຮັບອຸປະຕິເຫດຈາກ ລບຕ ໃນຂະນະທີ່ກໍາລັງຈູດຫຍ້າຢູ່ສວນຫຼັງບ້ານຂອງລາວ ໃນວັນທີ 4 ທັນວາ 2010. ລາວໄດ້ສູນເສຍນິ້ວມື 2 ນິ້ວ ຢູ່ແຂນເບື້ອງຂວາ ແລະ ຕາເບື້ອງຊ້າຍບອດຊະນິດ 100% ແລະ ຕາເບື້ອງຂວາບອດ 80%. ໂດຍການສະໜັບສະໜູນຂອງກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ, ທ້າວ ຫຼ້າດອນ ໄດ້ຮັບການຕິດຕາມປິ່ນປົວທຸກໆ 2 ເດືອນ ຢູ່ທີ່ສູນປິ່ນປົວສາຍຕາທົ່ງມັງ, ຄອນຫຼວງວຽງຈັນ ພາຍຫຼັງທີ່ລາວໄດ້ຜ່າຕັດດວງຕາຂ້າງຂວາແຕ່ປີ 2017. ເຖິງຢ່າງໃດກໍ່ຕາມ, ຍ້ອນການແຜ່ລະບາດຂອງພະຍາດໂຄວິດ 19 ໃນປີ 2020 ເຮັດໃຫ້ທ້າວ ຫຼ້າດອນ ບໍ່ສາມາດເດີນທາງມາໂຮງໝໍເປັນເວລາ 5 ເດືອນ ເພື່ອຕິດຕາມການຮັກສາ ແລະ ຮັບຢາກິນ, ຊຶ່ງໃນຂະນະນັ້ນ ລາວມີອາການຕາອັກເສບ ແລະ ແລະ ເບິ່ງເຫັນບໍ່ແຈ້ງ. ຫຼັງຈາກນັ້ນ, ສະພາບການຂອງພະຍາດໂຄວິດ 19 ໄດ້ເບົາບາງ, ລາວຈຶ່ງໄດ້ເດີນທາງມາຫາທ່ານໝໍ ອາທິດລະ 2 ຄັ້ງ ເພື່ອຕິດຕາມຢ່າງໃກ້ສິດອາການຂອງດວງຕາ ແລະ ການມອງເຫັນ. ທ່ານໝໍເຕືອນລາວວ່າ ຖ້າຂາດການປິ່ນປົວຢ່າງປົກກະຕິ ຈະເຮັດໃຫ້ມີອາການແຊກຊ້ອນຮ້າຍແຮງຂຶ້ນ ເຮັດໃຫ້ຕາບອດຖາວອນ ແລະ ທ່ານໝໍໄດ້ແນະນໍາລາວວ່າ ຕ້ອງໄດ້ກິນຢາໄປຕະຫຼອດຊີວິດ ແລະ ມາພົບທ່ານໝໍເປັນປະຈໍາ ເພື່ອຮັກສາ ແລະ ຕິດຕາມອາການຂອງດວງຕາ.

ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ໄດ້ຮັບຜິດຊອບຄ່າໃຊ້ຈ່າຍໃນການຕິດຕາມປິ່ນປົວຕ່າງໆຂອງລາວເປັນຕົ້ນແມ່ນ ຄ່າໃຊ້ຈ່າຍໃນການປິ່ນປົວ, ທີ່ພັກ ແລະ ອາຫານ ໃນໄລຍະທີ່ລາວມາຮັບການປິ່ນປົວ. ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ຈະສືບຕໍ່ສະໜັບສະໜູນຄ່າໃຊ້ຈ່າຍໃນການປິ່ນປົວຂອງລາວຕໍ່ໄປ.

## ແຜນການ ສໍາລັບປີ 2021

ກິດຈະກໍາຕົ້ນຕໍ ສໍາລັບໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແບບ ຄົບຊຸດ ສໍາລັບປີ 2021:

- ດໍາເນີນການທົດລອງສິດສອນຫຼັກສູດວິຊາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໂຮງຮຽນປະຖົມ 10 ແຫ່ງ ໃນ 10 ເມືອງ.
- ສ້າງກອງລະຄອນຕຸກກະຕາໃໝ່ 16 ກອງ ແລະ ສະໜັບໜູນກອງລະຄອນຕຸກກະຕາ 20 ກອງ ໃນການສະແດງຢູ່ໃນວັນແມ່ຍິງສາກົນ (8 ມີນາ).
- ດໍາເນີນການຝຶກອົບຮົມໃຫ້ຄູຝຶກ ກ່ຽວກັບການນໍາໃຊ້ປື້ມຄູມືການສິດສອນວິຊາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ຊັ້ນມັດທະຍົມ. ຄູຝຶກໃໝ່ ຈະໄດ້ຮັບການຝຶກອົບຮົມ ຢູ່ໃນໂຮງຮຽນມັດທະຍົມ 1,320 ແຫ່ງ ຢູ່ໃນ 88 ເມືອງ (10 ແຂວງ).
- ຫຼັກສູດວິຊາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ສໍາລັບຊັ້ນປະຖົມ ແລະ ມັດທະຍົມ ຈະມອບໂອນໃຫ້ກະຊວງສຶກສາທິການ ແລະ ກິລາ/ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເພື່ອພິຈາລະນາຮັບຮອງການປະເມີນຜົນສຸດທ້າຍຂອງຫຼັກສູດ.

ກິດຈະກໍາຕົ້ນຕໍຂອງກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ຈາກສົງຄາມ ໃນປີ 2021:

- ພາຍຫຼັງໄດ້ຮັບການແຈ້ງກ່ຽວກັບການເກີດອຸປະຕິເຫດ, ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ຈະໃຫ້ການສະໜັບສະໜູນໂດຍໄວ ແລະ ຄ່າໃຊ້ຈ່າຍໃນການປິ່ນປົວໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ແລະ ຄ່າໃຊ້ຈ່າຍຕ່າງໆສໍາລັບງານປົງສົບຜູ້ເສຍຊີວິດ ເພື່ອຮັບປະກັນວ່າທຸກຄົນທີ່ໄດ້ຮັບອຸປະຕິເຫດຈາກ ລບຕ ຈະບໍ່ມີໜີ້ສິນໃນການປິ່ນປົວສຸຂະພາບ ແລະ ການເຮັດວຽກງານສົບຕ່າງໆ.

## ສິ່ງທ້າທາຍ

ເນື່ອງຈາກຂໍ້ຈຳກັດທາງດ້ານງົບປະມານ ຈຶ່ງມີພຽງແຕ່ຄູສອນ 15 ຄົນຕໍ່ເມືອງ ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ວິຊາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງບໍ່ທັນຖືກລວມເຂົ້າໃນຫຼັກສູດການຮຽນການສອນແຫ່ງຊາດເທື່ອ, ມີພຽງແຕ່ລວມຢູ່ໃນປຶ້ມຄູ່ມືສອນຂອງຄູເທົ່ານັ້ນ.

ໂຮງໝໍບາງແຫ່ງ ຍັງບໍ່ທັນຮັບຮູ້ກ່ຽວກັບກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ເຮັດໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ ຈ່າຍຄ່າປິ່ນປົວເອງ ສ້າງຄວາມຫຍຸ້ງຍາກໃນການທົດແທນເງິນຄືນການປິ່ນປົວ. ນອກຈາກນັ້ນ, ໂຮງໝໍເມືອງ ກໍ່ບໍ່ສາມາດສະໜອງໃບບິນຄ່າປິ່ນປົວຢ່າງຄົບຖ້ວນ ເຮັດໃຫ້ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ບໍ່ສາມາດຊຳລະຄ່າໃຊ້ຈ່າຍໃນປິ່ນປົວໃຫ້ໄດ້ໝົດ.

## ໂອກາດຕ່າງໆ

ອົງການສຶກສາໂລກ ຈະຊອກຫາແຫຼ່ງທຶນເພື່ອສະໜັບສະໜູນການສິດສອນກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໂຮງຮຽນມັດທະຍົມ ແລະ ຮູບແບບການມີສ່ວນຮ່ວມໃນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

## ຄູ່ຮ່ວມງານ

- ກະຊວງສຶກສາທິການ ແລະ ກິລາ ແມ່ນຄູ່ຮ່ວມງານຫຼັກສຳລັບໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແບບຄົບຊຸດ.
- ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ແມ່ນຄູ່ຮ່ວມງານຫຼັກໃນການປະຕິບັດກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ.

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 4 | | | 11 | 8 | 1 | 3 |
| **ລວມ** | 29 | | | | | | |

## ຕົວເລກຜົນສຳເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງອົງການສຶກສາໂລກ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ

| **ກິດຈະກຳ** | **ເມືອງ/ແຂວງ** |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງເຊກອງ, ຈຳປາສັກ, ສະຫວັນນະເຂດ, ສາລະວັນ, ອັດຕະປື, ບໍລິຄຳໄຊ (ທຸກເມືອງໃນແຕ່ລະແຂວງ) |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ແຂວງຫຼວງພະບາງ, ຊຽງຂວາງ, ຫົວພັນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ, ອັດຕະປື ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ສະຖານທີ່ອື່ນໆ ຕາມການຮ້ອງຂໍມາຈາກອົງການປົກຄອງທ້ອງຖິ່ນ ແລະ ຄຊກລ |

## ການເງິນ ໃນປີ 2020:

| ຊື່ໂຄງການ | ວັນທີລົງລາຍເຊັນ | ໄລຍະເວລາ | ມູນຄ່າທັງໝົດ | ມູນຄ່າແຍກເປັນປີ | ຜູ້ໃຫ້ທຶນ |
|---|---|---|---|---|---|
| ໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ ສປປ ລາວ | 6 ກຸມພາ 2019 | 30 ເມສາ 2021 (26 ເດືອນ) | 2,018,471 ໂດລາ | 747,634 ໂດລາ | ກະຊວງການຕ່າງປະເທດ ສ. ອາເມລິກາ |

| | | | | | |
|---|---|---|---|---|---|
| ກອງທຶນຊ່ວຍເຫຼືອປິ່ນປົວຜູ້ຖືກເຄາະຮ້າຍຈາກສິງຄາມ ຢູ່ ສປປ ລາວ | 3 ກໍລະກົດ 2020 | 30 ມີນາ 2021 (21 ເດືອນ) | 100,000 ໂດລາ | 44,000 ໂດລາ | ກະຊວງການຕ່າງປະເທດ ສ. ອາເມລິກາ |

| ທຶນໂດຍກົງທີ່ໄດ້ຮັບ (ໂດລາ ສຫລ) ໃນປີ 2020: 1,325,620 ໂດລາ ສຫລ | |
|---|---|
| ລາຍລະອຽດຄ່າໃຊ້ຈ່າຍ | |
| ລາຍລະອຽດ | ຈຳນວນ |
| ເງິນເດືອນພະນັກງານ<br>(ພະນັກງານໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ ສປປ ລາວ, ພະນັກງານກອງທຶນຊ່ວຍເຫຼືອປິ່ນປົວຜູ້ຖືກເຄາະຮ້າຍຈາກສິງຄາມ ຢູ່ ສປປ ລາວ ແລະ ໂຄງການໂອກາດ) | 311,196 |
| ຄ່າໃຊ້ຈ່າຍການປະຕິບັດງານ: | |
| - ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 564,078 |
| - ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ<br>(ກອງທຶນຊ່ວຍເຫຼືອປິ່ນປົວຜູ້ຖືກເຄາະຮ້າຍຈາກສິງຄາມ ຢູ່ ສປປ ລາວ) | 25,731 |
| - ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ (ໂຄງການໂອກາດ ຂອງອົງການສາກົນເພື່ອການພັດທະນາຂອງ ສ. ອາເມລິກາ) | 424,615 |
| **ລວມ** | **1,325,620** |

## ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| **Donor** | **ຈຳນວນ** |
|---|---|
| ກະຊວງການຕ່າງປະເທດ ສ. ອາເມລິກາ | 703,895 |
| ອົງການສາກົນເພື່ອການພັດທະນາຂອງ ສ. ອາເມລິກາ | 621,005 |
| **ລວມ** | **1,325,620** |

# ອົງການສະໜອງເຄື່ອງຄ້ຳຊູ ແລະ ອົງຄະທຽມ (ໂຄບ)

## ກິດຈະກຳ ໃນປີ 2020

ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ: ອົງການໂຄບ ຮ່ວມກັບສູນການແພດຟື້ນຟູໜ້າທີ່ການ ແລະ 4 ສູນຟື້ນຟູຂັ້ນແຂວງ ໄດ້ສືບຕໍ່ສະໜອງການບໍລິການສະໜັບສະໜູນການຟື້ນຟູໃຫ້ແກ່ຄົນພິການຢູ່ໃນ ສປປ ລາວ. ນອກຈາກນັ້ນ, ໂຄບ ແລະ ສູນການແພດຟື້ນຟູໜ້າທີ່ການ ຍັງໄດ້ເຮັດວຽກຮ່ວມກັນ ເພື່ອຮັບປະກັນຄວາມຕໍ່ເນື່ອງຄຸນນະພາບຂອງການບໍລິການ. ໃນປີ 2020 ໂຄບ ແລະ ສູນການແພດຟື້ນຟູໜ້າທີ່ການ ໄດ້ດຳເນີນການຝຶກອົບຮົມກ່ຽວກັບການເຮັດວຽກຕົວຈິງ, ປັບປຸງມາດຕະຖານລາຍການຕົວຊີ້ວັດຂອງເຄື່ອງມືໃນການກວດກາຄຸນນະພາບ ແລະ ຄູ່ມືສຳລັບວຽກງານການຟື້ນຟູສຸຂະພາບຢູ່ໃນ ສປປ ລາວ. ເຄື່ອງມືໃນການກວດກາຄຸນນະພາບເຫຼົ່ານີ້ ໄດ້ຮັບການປັບປຸງສອດຄ່ອງກັບມາດຕະຖານສາມາກົນຂອງອົງການອະນາໄມໂລກ ແລະ ສະພາບເງື່ອນໄຂຂອງການຟື້ນຟູຕົວຈິງຢູ່ ສປປ ລາວ. ໂຄບ ໄດ້ສືບທົບກັບ ສູນການແພດຟື້ນຟູໜ້າທີ່ການ ດຳເນີນການກວດກາສຸຂະພາບແບບເຄື່ອນທີ່ໃຫ້ແກ່ປະຊາຊົນ 83 ຄົນ ຢູ່ແຂວງສະຫວັນນະເຂດ. ໃນປີ 2020, ໂຄບ ໄດ້ສືບທົບກັບສູນການແພດຟື້ນຟູໜ້າທີ່ການ ສະໜອງການບໍລິການຟື້ນຟູໜ້າທີ່ການ ໃຫ້ແກ່ຄົນພິການ 1,048 ຄົນ.

## ຜົນສຳເລັດຕົ້ນຕໍໃນປີ 2020

- ຄູ່ມືມາດຕະຖານ ແລະ ລາຍການຕົວຊີ້ວັດຂອງເຄື່ອງມືກວດກາຄຸນນະພາບຂອງຂໍ້ພັບຫົວເຂົ່າທຽມ ໄດ້ຮັບການພັດທະນາຂຶ້ນໃນເດືອນກັນຍາ 2020, ເຄື່ອງມືໄດ້ມີການທົດສອບ ແລະ ປັບປຸງຄືນ ກ່ອນຈະມີການຮັບຮອງຈາກສູນການແພດຟື້ນຟູໜ້າທີ່ການ ເພື່ອນຳໃຊ້ຢູ່ໃນສູນຟື້ນຟູຢູ່ຂັ້ນສູນກາງ ແລະ ຢູ່ຂັ້ນແຂວງ.
- ເຄື່ອງມືຕົວຊີ້ວັດຄຸນນະພາບ 4 ຕົວ ໄດ້ມີການທົດສອບ, ປັບປຸງຄືນ ແລະ ຖືກອະນຸມັດຮັບຮອງໂດຍສູນການແພດຟື້ນຟູໜ້າທີ່ການ ເພື່ອນຳໃຊ້ຢູ່ໃນສູນຟື້ນຟູຢູ່ຂັ້ນສູນກາງ ແລະ ຢູ່ຂັ້ນແຂວງ. ເຄື່ອງມື ແມ່ນນຳໃຊ້ເຂົ້າໃນການກວດກາຄຸນນະພາບຂອງອົງຄະທຽມສຳລັບແຂນ, ຂາ, ຫົວເຂົ່າ ແລະ ການບໍລິການຟື້ນຟູສຳລັບຄົນທີ່ເປັນຕີນເປ.



*ການຕ້ອນຮັບການຢ້ຽມຢາມ
ຂອງທ່ານເອກອັກຄະລັດຖະທູດໄອແລນ*

## ກໍລະນີສຶກສາ

ທ້າວ ແກ້ວ ບົວຄຳ, ອາຍຸ 40 ປີ, ອາໄສຢູ່ບ້ານນາເຕີດ, ເມືອງຍົມມະລາດ, ແຂວງຄຳມ່ວນ. ແຂວງຄຳມ່ວນ ເປັນແຂວງໜຶ່ງທີ່ໄດ້ຮັບຜົນກະທົບຈາກການຖິ້ມລະເບີດ ໂດຍສະເພາະ ຢູ່ເມືອງຍົມມະລາດ.

"ຂ້ອຍເຮັດວຽກເປັນທະຫານຢູ່ເມືອງ ຕັ້ງແຕ່ປີ 1996 ເປັນຕົ້ນມາ. ຂ້ອຍແຕ່ງງານ ໃນປີ 2005, ມີລູກ 5 ຄົນ ແລະ ກຳລັງຮຽນໜັງສືຢູ່ຕອນນີ້. ໃນປີ 2002, ຂ້ອຍໄດ້ເຮັບອຸປະຕິເຫດຈາກລະເບີດຝັງດິນ ໃນຂະນະທີ່ຂ້ອຍກຳລັງປະຕິບັດໜ້າທີ່ກັບເພື່ອນຮ່ວມງານຢູ່ໃນປ່າ, ຊຶ່ງໃນຂະນະທີ່ກຳລັງປະຕິບັດໜ້າທີ່ຢູ່ນັ້ນ ຂ້ອຍໄດ້ຍ່າງໄປຢຽບເອົາກັບລະເບີດຝັງດິນ. ຂ້ອຍໄດ້ຮັບບາດເຈັບສາຫັດຢູ່ຂາເບື້ອງຊ້າຍ ແລະ ທ່ານໝໍໄດ້ຕັດຂາຂອງຂ້ອຍຖິ້ມ ເພື່ອຮັກສາຊີວິດຂ້ອຍໄວ້. ຂ້ອຍຮູ້ສຶກເສຍໃຈທີ່ສຸດ ໃນເວລາທີ່ທ່ານໝໍບອກວ່າ ໄດ້ຕັດຂາຂອງຂ້ອຍຖິ້ມແລ້ວ ແລະ ຂ້ອຍກໍຄິດວ່າ ຄົງຈະຍ່າງ ແລະ ດູແລຄອບຄົວ ບໍ່ໄດ້ອີກແລ້ວ. ແຕ່ວ່າ "ໃນຄວາມມືດ ກໍຍັງມີແສງສະຫວ່າງຢູ່ທີ່ປາຍອຸມົງ", ທ່ານໝໍໄດ້ນຳສົ່ງຂ້ອຍໄປຍັງສູນການແພດຟື້ນຟູໜ້າທີ່ການ ແລະ ສູນບໍລິການເຄື່ອງຄ້ຳຊູ ແລະ ອົງຄະທຽມ (ໂຄບ) ເພື່ອໃສ່ຂາທຽມ ແລະຟື້ນຟູດ້ານຕ່າງໆ.ດ້ວຍການຊ່ວຍເຫຼືອຂອງສູນການແພດຟື້ນຟູໜ້າທີ່ການ ແລະ ສູນໂຄບ ເຮັດໃຫ້ຂ້ອຍສາມາດກັບມາຍ່າງໄດ້ອີກຄັ້ງ. ໃນຕົ້ນປີ 2003, ຂ້ອຍໄດ້ກັບມາສູນການແພດຟື້ນຟູໜ້າທີ່ການ ຢູ່ທີ່ນະຄອນຫຼວງວຽງຈັນ ແລະ ໄດ້ຮັບຂາທຽມໂຕທໍາອິດ. ຫຼັງຈາກໃສ່ຂາທຽມແລ້ວ ເຮັດໃຫ້ຂ້ອຍສາມາດກັບມາຍ່າງ ແລະ ເຮັດວຽກໄດ້ຢ່າງເປັນປົກກະຕິ. ຄວາມສຸກໄດ້ກັບມາຄືເກົ່າແລ້ວ. ຈົນຮອດປີ 2020, ຂ້ອຍໄດ້ເດີນທາງທຽວໄປທຽວມາສູນການແພດຟື້ນຟູໜ້າທີ່ການ ເພື່ອແປງຂາທຽມໃຫ້ພໍດີກັບຂາຂອງຂ້ອຍ. ຂາທຽມປະຈຸບັນ ແມ່ນໂຕທີ 4 ແລ້ວ. ຂ້ອຍຂໍສະແດງຄວາມຂອບໃຈ ມາຍັງສູນການແພດຟື້ນຟູໜ້າທີ່ການ ແລະ ໂຄບ ທີ່ໄດ້ມອບຂາທຽມໃໝ່ໃຫ້ແກ່ຂ້ອຍ ພ້ອມທັງການສະໜັບສະໜູນຄ່າໃຊ້ຈ່າຍໃນການເດີນທາງ, ອາຫານ ແລະ ທີ່ພັກເຊົາ" ກ່າວໂດຍ ທ້າວ ແກ້ວ ບຸນຄຳ.

## ແຜນວຽກຈຸດສຸມ ໃນປີ 2021

- ກວດສອບຄຸນນະພາບສູນບໍລິການປິ່ນປົວສຸຂະພາບ ເພື່ອປັບປຸງ ແລະ ຮັກສາມາດຕະຖານຂອງການບໍລິການ
- ລົງຝຶກຫັດວຽກຕົວຈິງໃຫ້ແກ່ພະນັກງານວິຊາການ ເພື່ອປັບປຸງຂີດຄວາມສາມາດຂອງຜູ້ຊ່ຽວຊານລາວ
- ດຳເນີນການຮັກສາສຸຂະພາບແບບເຄື່ອນທີ່ ຢູ່ໃນຊຸມຊົນ ເພື່ອສະໜອງການບໍລິການໃຫ້ແກ່ປະຊາຊົນຢູ່ເຂດຫ່າງໄກສອກຫຼີກ
- ຈັດຊື້ ແລະ ສະໜອງອຸປະກອນ ໃຫ້ແກ່ການຜະລິດອົງຄະທຽມ ແລະ ເຄື່ອງຄ້ຳຊູ
- ສືບຕໍ່ສະໜອງການບໍລິການອົງຄະທຽມ ແລະ ເຄື່ອງຄ້ຳຊູ ໃຫ້ແກ່ຜູ້ລອດຊີວິດຈາກ ລບຕ

## ຄູ່ຮ່ວມງານ

- ສູນການແພດຟື້ນຟູໜ້າທີ່ການ
- ສູນຮັກສາສຸຂະພາບ ສຳລັບປະຊາຊົນ ແລະ ຄອບຄົວເຂົາເຈົ້າ ທີ່ເຂົ້າມາຮັບການບໍລິການຟື້ນຟູ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 3 | 0 | 0 | 0 | 2 | 2 | 0 |
| ລວມ | **9** | | | | | | |

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ນະຄອນຫຼວງວຽງຈັນ |

## ການເງິນ ໃນປີ 2020:

### ຄ່າໃຊ້ຈ່າຍ ໃນປີ 2020 (ໂດລາ ສຫລ)

| ລາຍລະອຽດ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | |
| ຄ່າໃຊ້ຈ່າຍການປະຕິບັດງານ | |
| ລວມ | **416,000** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ສະຖານທູດນິວຊີແລນ | 16,000 |
| ອົງການໄອໂຕ ເພື່ອການພັດທະນາ | 20,000 |
| ນ໋ອກແວ | 200,000 |
| ຈີດີຈີ | 80,000 |
| ເງິນບໍລິຈາກາງພາກສ່ວນເອກະຊົນ | 100,000 |
| ລວມ | **416,000** |

# ບັນດາບໍລິສັດ ເກັບກູ້ລະເບີດ

## ບໍລິສັດ ລາວບີເອັດສ໌ແອວ ເກັບກູ້ລະເບີດ ຈຳກັດ

### ກິດຈະກຳ ໃນປີ 2020

ໄດ້ດຳເນີນການກວດກູ້ ລບຕ ໃຫ້ໂຄງການຊ່ວຍເຫຼືອລ້າເພື່ອມະນຸດສະທຳຂອງກອງວິສະວະກອນກອງທັບ ສ. ອາເມລິກາ ເພື່ອກໍ່ສ້າງຫ້ອງນ້ຳ 1 ແຫ່ງ ຢູ່ໂຮງໝໍເມືອງອາດສະພັງທອງ ແລະ 2 ແຫ່ງຢູ່ໂຮງໝໍນ້ອຍເມືອງພິນ, ແຂວງສະຫວັນນະເຂດ ພາຍໃຕ້ສັນຍາ ສະບັບເລກທີ W911 KB19F0139, ລົງວັນທີ 27/2/2020. ນອກຈາກນັ້ນ, ຍັງໄດ້ດຳເນີນການກວດກູ້ ລບຕ ອອກຈາກເສັ້ນທາງ ສຳລັບໂຄງການພັດທະນາຊົນນະບົດ RDP-01 ລະຫວ່າງບ້ານດົງສະຫວັນ ຫາ ຈຸດສຸມ ລາໂກ, ເມືອງເຊໂປນ, ແຂວງສະຫວັນນະເຂດ.

### ລູກຄ້າ

- ໂຄງການຮ່ວມມື ລາວ-ເຢຍລະມັນ

### ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 3 | 0 | 0 | 110 | 4 | 0 | 0 |
| ລວມ | **120** | | | | | | |

### ຕົວເລກຜົນສຳເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງບໍລິສັດ ລາວບີເອັດສ໌ແອວ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 8 ເຖິງ 15.

### ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ ແລະ ກວດກູ້ ລບຕ | ແຂວງສະຫວັນນະເຂດ |

### ການເງິນ ໃນປີ 2020

**ລາຍຈ່າຍ ໃນປີ 2020 (ໂດລາ ສຫລ)**

| ລາຍລະອຽດ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | 65,000 |
| ຄ່າໃຊ້ຈ່າຍການປະຕິບັດງານ | 33,900 |
| ຈັດຊື້ວັດຖຸອຸປະກອນ | 2,500 |
| ລວມ | **101,400** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ທຶນຂອງຕົນເອງ | 101,400 |
| ລວມ | **101,400** |

# ບໍລິສັດ ສີລາວັນ ເກັບກູ້ລະເບີດ ຈຳກັດ

## ກິດຈະກຳ ໃນປີ 2020

ບໍລິສັດ ສີລາວັນ ໄດ້ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ ໂຄງການກໍ່ສ້າງບ່ອນແຈກຢາຍນໍ້າໃຫ້ຊຸມຊົນ 4 ແຫ່ງ, ຢູ່ເມືອງ ບົວລະພາ, ແຂວງຄຳມ່ວນ.

## ແຜນການ ສຳລັບປີ 2021

ບໍລິສັດ ສີລາວັນ ຈະດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ ໂຄງການກໍ່ສ້າງໂຮງງານ ໃຫ້ແກ່ບໍລິສັດ ຊິນຈິນ ຈຳນວນ 8 ເຮັກຕາ, ຢູ່ເຂດການຄ້າພິເສດຊາຍແດນສະຫວັນລາວບາວ, ແຂວງສະຫວັນນະເຂດ.

## ລູກຄ້າ

- ບໍລິສັດ ຊິນຈິນ-ລາວ ຈຳກັດ
- ພະແນກສາທາລະນະສຸກ ແຂວງຄຳມ່ວນ ແລະ ລັດຖະບານລຸກຊຳບວກ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 0 | 0 | 0 | 8 | 3 | 0 | 0 |
| ລວມ | **13** | | | | | | |

## ຕົວເລກຜົນສຳເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງບໍລິສັດ ສີລາວັນ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງ ຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ ແລະ ກວດກູ້ ລບຕ | ແຂວງຄຳມ່ວນ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງຄຳມ່ວນ |

## ການເງິນ:

### ຄ່າໃຊ້ຈ່າຍ ໃນປີ 2020 (ໂດລາ ສຫລ)

| ລາຍລະອຽດ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | 2,631 |
| ຄ່າໃຊ້ຈ່າຍການປະຕິບັດງານ | 2,210 |
| ຈັດຊື້ວັດຖຸອຸປະກອນ | 526 |
| **ລວມ** | **5,367** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ທຶນຂອງຕົນເອງ | 5,367 |
| **ລວມ** | **5,367** |

# ບໍລິສັດ ອູມມາ ເກັບກູ້ລະເບີດ ຈໍາກັດ

## ກິດຈະກໍາ ໃນປີ 2020

ບໍລິສັດ ອູມມາ ໄດ້ດໍາເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຕົກ ເຊກອງ (ຕອນລຸ່ມ A), ຢູ່ເມືອງສະໜາມໄຊ, ແຂວງອັດຕະປື.

## ລູກຄ້າ

- ບໍລິສັດ ໄຟຟ້າລາວ



## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈໍາຫ້ອງການ | | | | ພະນັກງານປະຈໍາພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 4 | 0 | 0 | 0 | 24 | 0 | 0 | 2 |
| ລວມ | **30** | | | | | | |

## ຕົວເລກຜົນສໍາເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສໍາເລັດການປະຕິບັດງານຂອງບໍລິສັດ ອູມມາ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສໍາເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກໍາ | ເມືອງ/ແຂວງ |
|---|---|
| ການສໍາຫຼວດ ແລະ ກວດກູ້ ລບຕ | ແຂວງອັດຕະປື |

## ການເງິນ:

### ລາຍຈ່າຍ ໃນປີ 2020 (ໂດລາ ສຫລ)

| ລາຍລະອຽດ | ຈໍານວນ |
|---|---|
| ເງິນເດືອນພະນັກງານ | 10,000 |
| ຄ່າໃຊ້ຈ່າຍການປະຕິບັດງານ | 20,000 |
| ຈັດຊື້ວັດຖຸອຸປະກອນ | 0 |
| ລວມ | **30,000** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈໍານວນ |
|---|---|
| ທຶນຂອງຕົນເອງ | 30,000 |
| ລວມ | **30,000** |

# ບໍລິສັດ ພັນວິລະ ເກັບກູ້ລະເບີດ ຈຳກັດ

## ກິດຈະກຳໃນປີ 2020

- ໄດ້ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການອານຸລັກຊີວະນາພັນ.
- ໄດ້ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການກໍ່ສ້າງຂົວຂ້າມນ້ຳງຽບ ຢູ່ບ້ານຫາດສາມຄອນ, ເມືອງທ່າໂທມ, ແຂວງໄຊສົມບູນ.

## ລູກຄ້າ

- ໂຄງການພັດທະນາ
- ອົງການສາກົນເພື່ອມະນຸດສະທຳ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 30 | 3 | 0 | 0 | 30 | 3 | 0 | 0 |
| ລວມ | **33** | | | | | | |

## ບຸກຄະລາກອນ ໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງບໍລິສັດ ພັນວິລະ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ ແລະ ກວດກູ້ ລບຕ | ແຂວງໄຊສົມບູນ ແລະ ແຂວງອັດຕະປື |

## ການເງິນ:

### ຄ່າໃຊ້ຈ່າຍໃນປີ 2020 (ໂດລາ ສຫລ)

| ລາຍລະອຽດ | ຈຳນວນ |
|---|---:|
| ເງິນເດືອນພະນັກງານ | 120,000 |
| ຄ່າໃຊ້ຈ່າຍການປະຕິບັດງານ | 85,000 |
| ຈັດຊື້ວັດຖຸອຸປະກອນ | 50,000 |
| ລວມ | **255,000** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ທຶນຂອງຕົນເອງ | 255,000 |
| ລວມ | **255,000** |

# ບໍລິສັດ ອອດສ໌ລາວ ເກັບກູ້ລະເບີດ ຈຳກັດ

## ກິດຈະກຳ ໃນປີ 2020

- ໄດ້ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ນ້ຳກົງ ຢູ່ແຂວງອັດຕະປື.
- ໄດ້ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ຫ້ວຍກະອວນ ຢູ່ແຂວງອັດຕະປື.

## ແຜນການ ສຳລັບປີ 2021

- ສືບຕໍ່ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ນ້ຳກົງ ຢູ່ແຂວງອັດຕະປື.
- ສືບຕໍ່ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ຫ້ວຍກະອວນ ຢູ່ແຂວງອັດຕະປື.
- ດຳເນີນການກວດກູ້ ລບຕ ອອກຈາກພື້ນທີ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ຢູ່ແຂວງສະຫວັນນະເຂດ.

## ລູກຄ້າ

- ບໍລິສັດ ໄຟຟ້າລາວ
- ບໍລິສັດ ເຂື່ອນໄຟຟ້ານ້ຳຕົກ ນ້ຳກົງ
- ກຸ່ມບໍລິສັດ ພົງຊັບທະວີ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 3 | 1 | 0 | 25 | 0 | 0 | 0 |
| ລວມ | **31** | | | | | | |

## ຕົວເລກຜົນສຳເລັດ ໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງບໍລິສັດ ອອດສ໌ລາວ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງ/ແຂວງ |
|---|---|
| ການສຳຫຼວດ ແລະ ກວດກູ້ ລບຕ | ແຂວງອັດຕະປື |

## ການເງິນ:

### ລາຍຈ່າຍ ໃນປີ 2020 (ໂດລາ ສຫລ)

| Item | Amount |
|---|---|
| ເງິນເດືອນພະນັກງານ | 15,500 |
| ຄ່າໃຊ້ຈ່າຍການປະຕິບັດງານ | 14,250 |
| ຈັດຊື້ວັດຖຸອຸປະກອນ | 1,550 |
| ລວມ | **31,300** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ທຶນຂອງຕົນເອງ | 31,300 |
| ລວມ | **31,300** |

# Milsearch ບໍລິສັດ ມິວເຊີດສ໌ ເກັບກູ້ລະເບີດ

## ກິດຈະກຳ ໃນປີ 2020

ໃນປີ 2020 ແມ່ນການຄົບຮອບ 27 ປີ ຂອງມິວເຊີດສ໌ ທີ່ໄດ້ເຄື່ອນໄຫວວຽກງານ ຢູ່ ສປປ ລາວ. ມິວເຊີດສ໌ ໄດ້ສືບຕໍ່ສະໜັບສະໜູນອຸດສາຫະກຳການສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ ເປັນຕົ້ນແມ່ນການສະໜັບສະໜູນ ບໍລິສັດພູເບ້ຍ ໃນການສຳຫຼວດທາງດ້ານວິຊາການ ໃນຂອບເຂດບໍລິເວນ 6 ພື້ນທີ່ສຳຄັນ ໃນ 10 ແຂວງ ໂດຍເລີ່ມຕົ້ນທີ່ແຂວງທີ່ຢູ່ໃຕ້ສຸດ ເຊັ່ນ: ແຂວງອັດຕະປື ຈົນຮອດແຂວງທີ່ຢູ່ເໜືອສຸດ ຄື: ແຂວງຜົ້ງສາລີ.

ມິວເຊີດສ໌ ໄດ້ສືບຕໍ່ສະໜັບສະໜູນໃຫ້ແກ່ໂຄງການຟາມ ແລະ ຂະແໜງການປ່າໄມ້.

ນອກນັ້ນ, ມິວເຊີດສ໌ ຍັງໄດ້ສະໜັບສະໜູນໃຫ້ແກ່ອົງການຊ່ວຍເຫຼືອຜູ້ຖືກສານພິດຈາກສົງຄາມຂອງກະຊວງການຕ່າງປະເທດ ສ. ອາເມລິກາ ໃນການຊ່ວຍເຫຼືອພະນັກງານຂອງພວກເຂົາທີ່ປະຕິບັດໜ້າທີ່ຢູ່ ສປປ ລາວ ໃນຊ່ວງໄລຍະການແຜ່ລະບາດຂອງພະຍາດໂຄວິດ 19 ເພື່ອສົ່ງກັບຄືນບ້ານຫາຄອບຄົວ.

ສ່ວນໂຄງການຂອງ ມິວເຊີດສ໌ ທີ່ຢູ່ປະເທດ ສສ ຫວຽດນາມ ແລະ ປາຊີຟິກໃຕ້ ແມ່ນໄດ້ຖືກໂຈະຊົ່ວຄາວ ຍ້ອນບັນຫາການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ມີການຫ້າມບໍ່ໃຫ້ເດີນທາງ.

ມິວເຊີດສ໌ ໄດ້ດຳເນີນຫຼາຍໂຄງການຄົ້ນຄ້ວາກ່ຽວກັບສິ່ງເສດເຫຼືອຈາກສົງຄາມທາງປະຫວັດສາດ ບໍ່ວ່າຈະເປັນແບບເອກະລາດ ຫຼື ຊ່ວຍສະໜັບສະໜູນບໍລິສັດແມ່ຢູ່ປະເທດອົດສະຕາລີ. ໂຄງການຄົ້ນຄ້ວາເຫຼົ່ານີ້ ໄດ້ສະໜັບສະໜູນໃຫ້ແກ່ບັນດາໂຄງການກ່ຽວກັບການຄົ້ນຄ້ວາວິໃຈດິນ, ການກໍ່ສ້າງຢູ່ທະເລ, ໂຄງການໂທລະຄົມມະນາຄົມສື່ສານ ແລະ ໂຄງການສາຍສົ່ງໄຟຟ້າ.

ນອກຈາກນັ້ນ, ໃນປີ 2020 ມິວເຊີດສ໌ ຍັງໄດ້ສະໜັບສະໜູນການລົງທຶນທາງການຄ້າຂອງບໍລິສັດເພື່ອໃຫ້ມີລາຍໄດ້ເພີ່ມຕື່ມ. ມິວເຊີດສ໌ ຮູ້ສຶກພາກພູມໃຈ ທີ່ໄດ້ມີສ່ວນຮ່ວມສະໜັບສະໜູນໂຄງການເພື່ອມະນຸດສະທຳຕ່າງໆ ເຊັ່ນ:




*ຂຸມທົດສອບອຸປະກອນເຄື່ອງກວດຈັບແມ່ເຫຼັກ ໃນເຂດພື້ນທີ່ເຂື່ອນໄຟຟ້ານ້ຳເທີນ, ເມືອງນາກາຍ, ແຂວງຄຳມ່ວນ*

- ອົງການພັດທະນາ ແລະ ບັນເທົາໄພພິບັດ (ເອດີອາເອ)
- ພວກເຮົາຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກສົງຄາມ (ກອງທຶນຊ່ວຍເຫຼືອປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ)
- ອົງການບັນເທົາທຸກກາໂຕລິກ (ຊີອາເອັດສ໌)

## ຜົນສຳເລັດ ໃນປີ 2020

ມິວເຊີດສ໌ ໄດ້ສືບຕໍ່ມີສ່ວນຮ່ວມໃນຂະແໜງວຽກງານກ່ຽວກັບມະນຸດສະທຳ ເຖິງແມ່ນວ່າຈະມີໜ້ອຍ ແຕ່ກໍ່ເປັນຜົນສຳເລັດທີ່ໜ້າເພິ່ງພໍໃຈ. ເຖິງຢ່າງໃດກໍ່ຕາມ, ຜົນສຳເລັດທີ່ໂດດເດັ່ນທີ່ສຸດຂອງພວກເຮົາ ແມ່ນການຮັກສາວຽກໄວ້ໄດ້ໃນສະພາບແວດລ້ອມທີ່ມີການແຜ່ລະບາດຂອງພະບາດໂຄວິດ 19. ພ້ອມນັ້ນ, ມິວເຊີດສ໌ ຍັງປະສົບຜົນສຳເລັດໃນການສືບຕໍ່ສະໜັບສະໜູນບັນດາໂຄງການທຸລະກິດຫຼາຍໂຄງການຢູ່ໃນ ສປປ ລາວ ໂດຍສອດຄ່ອງກັບຄຳສັ່ງຂອງລັດຖະບານ ສປປ ລາວ ໃນການຕ້ານພະຍາດໂຄວິດ 19. ນອກຈາກນັ້ນ, ພວກເຮົາ ຍັງໄດ້ສຳເລັດການວາງແຜນໂຄງການທີ່ສຳຄັນຫຼາຍໂຄງການຢູ່ໃນຂະແໜງການພະລັງງານທົດແທນ, ເຊິ່ງເປັນພື້ນຖານທີ່ດີຫຼາຍ ສຳລັບການຂະຫຍາຍຕົວຂອງບໍລິສັດໃນອີກ 2-3 ປີຂ້າງໜ້າ.

ໃນຕົ້ນປີ 2020, ມິວເຊີດສ໌ ໄດ້ນຳສະເໜີສັນຍາລັກໃໝ່ຂອງບໍລິສັດ. ເພື່ອເປັນການສະແດງໃຫ້ເຫັນເຖິງການປ່ຽນແປງໃໝ່, ພວກເຮົາໄດ້ຖືເອົາສີຂຽວ ໃຫ້ເປັນສີສະແດງເຖິງຄວາມເປັນມິດຕໍ່ສິ່ງແວດລ້ອມໃຫ້ຫຼາຍກວ່າເກົ່າ. ເຖິງແນວໃດກໍ່ຕາມ, ເພື່ອເປັນການເຊື່ອມຕໍ່ອະດີດກັບປະຈຸບັນໃຫ້ເຂົ້າກັນ ມິວເຊີດສ໌ ຍັງຄົງຮັກສາສັນຍາລັກຮູບພາບເສັ້ນແມ່ເຫຼັກວັດແທກທາງພູມສາດທີ່ເຄີຍຢູ່ໃນສັນຍາລັກເກົ່າຂອງບໍລິສັດເຮົາໄວ້ເໝືອນເດີມ.

ພວກເຮົາ ໄດ້ຄິດໄວ້ວ່າ ເປັນເວລາຫຼາຍກວ່າ 30 ປີ ທີ່ພວກລົງທຶນໃນຂົງເຂດວຽກງານດ້ານການຄ້າ ເຫັນວ່າ ເຖິງເວລາແລ້ວ ທີ່ຕ້ອງໄດ້ມີການສະເຫຼີມສະຫຼອງຕໍ່ຜົນສຳເລັດທີ່ເປັນໂຕທຳອິດ ທີ່ພວກເຮົາສາມາດຍາດມາໄດ້ ເຊັ່ນ:

- ມິວເຊີດສ໌ ເປັນບໍລິສັດເອກະຊົນບໍລິສັດທຳອິດ ທີ່ເຮັດການບໍລິການທຳລາຍລະເບີດ ຢູ່ໃນປະເທດອົດສະຕາລີ
- ມິວເຊີດສ໌ ເປັນບໍລິສັດເອກະຊົນບໍລິສັດທຳອິດ ທີ່ເຂົ້າເປັນສະມາຊິກໃນຄະນະສະພາຂອງກະຊວງປ້ອງກັນປະເທດ ກ່ຽວກັບການແກ້ໄຂບັນຫາ ລບຕ
- ມິວເຊີດສ໌ ເປັນບໍລິສັດເອກະຊົນບໍລິສັດທຳອິດ ທີ່ປະຕິບັດການແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ
- ມິວເຊີດສ໌ ເປັນບໍລິສັດ ທີ່ສະໜອງການທຳລາຍລະເບີດທີ່ມີຄຸນນະພາບສູງສຸດ ຢູ່ໃນປະເທດອົດສະຕາລີ ແລະ ອາຊີຕາເວັນອອກສ່ຽງໃຕ້

ເພື່ອເປັນການສະແດງອອກຕໍ່ກັບສິ່ງທໍາອິດເຫຼົ່ານີ້ ເຊັ່ນ: ການເປັນທີ 1 ທາງດ້ານເວລາ ແລະ ເປັນທີ 1 ທາງດ້ານຄຸນນະພາບນັ້ນ ມິວເຊີດສ ໄດ້ລວມເອົາຫຼາຍຢ່າງ ແລະ ສະແດງອອກຢູ່ໃນໂລໂກ້ສັນຍາລັກຂອງພວກເຮົາແລ້ວ.

ໃນປີ 2020, ທີມງານ ທີ່ຢູ່ໃນບໍລິສັດມິວເຊີດສ໌ ເຊື່ອວ່າໂລໂກ້ສັນຍາລັກໃໝ່ຂອງພວກເຮົານີ້ ແມ່ນຍັງຄົງຮັກສາຄືຄວາມເປັນໜາເຊື່ອຖືຄືເກົ່າ ແລະ ຍັງຄົງສະແດງຄວາມເປັນຕົວຕົນຂອງພວກເຮົາຢ່າງແທ້ຈິງ.

ຕະຫຼອດການປະຕິບັດງານທັງໝົດ 343 ມື້ ພວກເຮົາບໍ່ມີການບາດເຈັບເກີດຂຶ້ນຈັກຄັ້ງເລີຍ.

## ກໍລະນີສຶກສາ

ເຖິງແມ່ນວ່າພວກເຮົາ ຈະຮູ້ສຶກພູມໃຈກັບການປະກອບສ່ວນເຂົ້າໃນວຽກງານມະນຸດສະທໍາພຽງໃດກໍ່ຕາມ ແຕ່ສິ່ງທີ່ເປັນຜົນປະໂຫຍດອັນໃຫຍ່ຫຼວງສຸດຂອງພວກເຮົາ ກໍ່ຄື

ພຽງພໍກັບຄວາມພະຍາຍາມດ້ານມະນຸດສະທໍາຂອງພວກເຮົາ, ພວກເຮົາເຊື່ອວ່າໃນປີ 2020 ກຸ່ມຜູ້ທີ່ໄດ້ຮັບຜົນປະໂຫຍດກຸ່ມໃຫຍ່ທີ່ສຸດນັ້ນ ແມ່ນແມ່ນພະນັກງານຂອງພວກເຮົາເອງ. ມິວເຊີດສ ມີພະນັກງານຫຼາຍທ່ານທີ່ມີປະສົບການເຮັດວຽກທີ່ດີຢູ່ກັບພວກເຮົາມາຫຼາຍກວ່າ 20 ປີ. ສະນັ້ນ, ເມື່ອມີການແຜ່ລະບາດຂອງພະຍາດໂຄວິດ 19 ເກີດຂຶ້ນ ບູລິມະສິດທໍາອິດຂອງມິວເຊີດສ ແມ່ນການແຜນການຄຸ້ມຄອງສຸກເສີນຂຶ້ນ ເພື່ອໃຫ້ພະນັກງານໄດ້ຢູ່ລອດໃຫ້ໄດ້.

## ແຜນການ ສໍາລັບປີ 2021

ໃນທ່າມກາງການຂະຫຍາຍຕົວຂອງປະຊາກອນໂລກທີ່ນັບມື້ນັບມີຄວາມຕ້ອງການພື້ນທີ່ຫຼາຍຂຶ້ນ ແລະ ກໍາລັງຫັນປ່ຽນໄປສູ່ການຫຼຸດຜ່ອນມົນລະພິດຈາກກາກບອນ ແລະ ຫັນໄປສູ່ພະລັງງານທົດແທນເພີ່ມຂຶ້ນ ແລະ ການເພີ່ມຂຶ້ນຂອງການຄ້າໃນທົ່ວໂລກນັ້ນ, ແຕ່ພວກເຮົາ ກໍ່ຍັງຄົງມຸ່ງໝັ້ນເຮັດວຽກຢູ່ກັບຂະແໜງການພະລັງງານທົດແທນ ແລະ ມະນຸດສະທໍາ ຢູ່ໃນ ສປປ ລາວ ແລະ ບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້ ຢູ່ຄືເກົ່າ. ໃນປີ 2021 ພວກເຮົາຫວັງວ່າ ຈະໄດ້ເຫັນບາງໂຄງການໃຫຍ່ທີ່ໄດ້ມີການວາງແຜນມາແລ້ວຫຼາຍປີ ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດ.

ໂຄງການທີ່ໄດ້ຮັບການສະໜັບສະໜູນຈາກອົງການຊ່ວຍເຫຼືອຜູ້ຖືກສານພິດຈາກສົງຄາມຂອງກະຊວງການຕ່າງປະເທດສະຫະລັດອາເມລິກາ ແມ່ນຖືກຢຸດໄວ້ຊົ່ວຄາວໃນປີ 2020 ຍ້ອນການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ຫ້າມບໍ່ໃຫ້ມີການເດີນທາງ ແລະ ຄາດວ່າ ຈະສາມາດສືບຕໍ່ໃນປີ 2021. ສອງໂຄງການທີ່ຖືກຢຸດໄວ້ຊົ່ວຄາວ ແມ່ນໂຄງການຍົກລະດັບທ່າເຮືອໃນມະຫາສະໝຸດປາຊີຟິກໃຕ້ ແລະ ໂຄງການແອວເອັນຈີຂອງບໍລິສັດເອັ້ກຊອນໂມບາຍ ຢູ່ ສູສ ຫວຽດນາມ. ພວກເຮົາຫວັງວ່າ ຈະໄດ້ກັບຄືນສູ່ປາຊີຟິກໃຕ້ອີກໃນປີ 2021 ແຕ່ວ່າໂຄງການຂອງບໍລິສັດເອັກຊອນໂມບາຍ ແມ່ນໄດ້ຖືກຢຸດຢ່າງບໍ່ມີກໍານົດ.

ໃນປີ 2021 ພວກເຮົາຫວັງວ່າ ຈະສາມາດກັບມາສືບຕໍ່ສະໜັບສະໜູນໂຄງການຂຸດຄົ້ນແຮ່ທາດຢູ່ໃນ ສປປ ລາວ ແລະ ອາຊີຕາເວັ້ນອອກສ່ຽງໃຕ້ ແລະ ຈະສາມາດຂະຫຍາຍໂຄງການສາກົນຂອງພວກເຮົາຢູ່ໃນພາກພື້ນປາຊີຟິກ. ຫ້ອງການມິວເຊີດສປະຈໍາ ສປປ ລາວ ຈະສືບຕໍ່ສະໜັບສະໜູນບໍລິສັດແມ່ຢູ່ປະເທດອົດສະຕາລີ ໃນການສະໜອງແຮງງານທີ່ສໍາຄັນ ເພື່ອນໍາໃຊ້ເຂົ້າໃນການຄົ້ນຄວ້າວຽກງານທາງປະຫວັດສາດ.

ໃນປີ 2021 ມິວເຊີດສ໌ ຈະ:

- ສືບຕໍ່ຄົ້ນຄ້ວາຊອກແຫຼ່ງລາຍຮັບເພີ່ມຕື່ມ
- ສືບຕໍ່ປັບປຸງຄຸນນະພາບຂອງວຽກງານ
- ສືບຕໍ່ສະໜັບສະໜູນ ຄຊກລ ແລະ ລັດຖະບານລາວ
- ສືບຕໍ່ຄົ້ນຄ້ວາເທັກໂນໂລຊີ ແລະ ວິທີການໃໝ່ໆ
- ສືບຕໍ່ສ້າງຂີດຄວາມສາມາດໃຫ້ພະນັກງານຄົນລາວ
- ສືບຕໍ່ປັບປຸງລະບົບຮັກສາສຸຂະພາບ, ສະຫວັດດີການໃຫ້ພະນັກງານຄົນລາວ ແລະ ຊຸມຊົນຕ່າງໆ ທີ່ພວກເຮົາໄດ້ລົງເຄື່ອນໄຫວວຽກ ໃຫ້ມີຄວາມປອດໄພ

## ຄູ່ຮ່ວມງານ

- ບໍລິສັດ ພູເບ້ຍຂຸດຄົ້ນບໍ່ແຮ່ (ການຂຸດຄົ້ນ)
- ບໍລິສັດ ລ້ານຊ້າງ ອຸດສາຫະກໍາ (ການຂຸດຄົ້ນ)
- ບໍລິສັດ ເຂື່ອນໄຟຟ້ານໍ້າເທີນ 2 (ພະລັງງານ)
- ບໍລິສັດ ອິມແພັກ ເອເລັກຕຣອນ ເອເຊຍ (ພະລັງງານ)
- ບໍລິສັດ ໂກນວິນ (ພະລັງງານ)
- ບໍລິສັດ ເອດີອາເອ (ມະນຸດສະທໍາ)
- ບໍລິສັດ ຊີອາເອັດສ໌ (ມະນຸດສະທໍາ)
- ບໍລິສັດ ດັບເບີ້ນຢູເອັດຈ໌ດັບເບີ້ນຢູວີ (ມະນຸດສະທໍາ)
- ບໍລິສັດ ດີພີເອເອ (ໂຄງການຂອງກະຊວງປ້ອງກັນປະເທດ ສ. ອາເມລິກາ)
- ບໍລິສັດ ບົວລະພາ ປູກຕົ້ນໄມ້ (ກະສິກໍາ)



ການທໍາລາຍ ລບຕ ທີ່ຖືກປະຖິ້ມໄວ້ຢູ່ທີ່ບໍລິເວນເຂດພື້ນທີ່ການຂຸດຄົ້ນບໍ່ແຮ່ໃນພູເບ້ຍ

## ບຸກຄະລາກອນ ໃນປີ 2020

| ພະນັກງານປະຈຳຫ້ອງການ | | | | ພະນັກງານປະຈຳພາກສະໜາມ | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 5 | 1 | 1 | 45 | 19 | 3 | 0 |
| ລວມ | **107** | | | | | | |

## ຕົວເລກຜົນສຳເລັດໃນປີ 2020

ລາຍລະອຽດຕົວເລກຜົນສຳເລັດການປະຕິບັດງານຂອງບໍລິສັດ ມິວເຊີດສ໌ ແມ່ນສາມາດເບິ່ງເພີ່ມຕື່ມໄດ້ໃນພາກຜົນສຳເລັດຂອງຂະແໜງການແກ້ໄຂ ລບຕ ໃນໜ້າທີ 11 ເຖິງ 15.

## ພື້ນທີ່ການປະຕິບັດງານ ໃນປີ 2020

| ກິດຈະກຳ | ເມືອງລແຂວງ |
|---|---|
| ການສຳຫຼວດ | ແຂວງສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື |
| ການກວດກູ້ | ແຂວງຊຽງຂວາງ, ແຂວງໄຊສົມບູນ, ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ |
| ການທຳລາຍເຄື່ອນທີ່ | ແຂວງຊຽງຂວາງ ແລະ ແຂວງສະຫວັນນະເຂດ |

## ການເງິນ ໃນປີ 2020:

### ລາຍຈ່າຍ ໃນປີ 2020 (ໂດລາ ສຫລ)

| ລາຍລະອຽດ | ຈຳນວນ |
|---|---|
| ເງິນເດືອນພະນັກງານ | 452,000 |
| ຄ່າໃຊ້ຈ່າຍການປະຕິບັດງານ | 628,000 |
| ຈັດຊື້ວັດຖຸອຸປະກອນ | 23,500 |
| ລວມ | **1,103,500** |

### ປະເທດຜູ້ໃຫ້ທຶນ ໃນປີ 2020 (ໂດລາ ສຫລ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ລາຍຮັບຈາກທຸລະກິດ ໃນປີ 2020 | 1,260,882 |
| ກອງທຶນເພື່ອມະນຸສະທຳ | 32,063 |
| ລວມ | **1,292,944** |



ຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ:


ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ ສປປ ລາວ

ບ້ານສີສັງວອນ, ໜ່ວຍ 19, ເມືອງໄຊເສດຖາ,
ຕູ້ ປ.ນ 7261, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +85621 262386, ແຟັກ: +85621 262396
ເວບໃຊ້: www.nra.gov.la